໑໔.໔.໑. ເມື່ອສົງຄາມກາງເມືອງສິ້ນສຸດລົງ Union ພ້ອມດ້ວຍປະທານາທິບໍດີ Lincoln ມີພາລະທີ່ຈະຕ້ອງສຳລະສະສາງຢູ່ຫຼາຍຢ່າງ. ພາລະປະການນຶ່ງກໍຄືການປົດປ່ອຍຂ້າທາດໃຫ້ເປັນອິສຣະ.

໑໔.໔.໒. ໃນເວລາທີ່ປະທານາທິບໍດີ Lincoln ເຊັນປະກາດປົດປ່ອຍຂ້າທາດໃຫ້ເປັນອິສຣະອອກມານັ້ນ ທ່ານຕ້ອງການປົດປ່ອຍຂ້າທາດທີ່ຢູ່ໃນຣັຖທີ່ເປັນກະບົດເທົ່ານັ້ນ. ແຕ່ໃນເວລາທີ່ສົງຄາມກາງເມືອງໄດ້ຢຸດຕິລົງຄືໃນປີ ໑໘໖໕ ສະພາຕ້ອງການແກ້ໄຂບັນຫາຂ້າທາດໃຫ້ເສັດສິ້ນເດັດຂາດໂດຍເຫັນດີຮັບຮອງເອົາການດັດແປງຣັຖທັມມະນູນເພື່ອປົດປ່ອຍໃຫ້ພວກຂ້າທາດທົ່ວໄປໃນສະຫະຣັຖອະເມຣິກາແລະໃນອານາເຂດຕ່າງໆນັ້ນເປັນອິສຣະຫມົດທຸກຄົນ. ການດັດແປງຣັຖທັມມະນູນດັ່ງກ່າວໄດ້ຖືກຮັບຮອງເອົາເປັນທາງການດ້ວຍຄະແນນສຽງສາມສ່ວນສີ່ຂອງຈຳນວນຣັຖທັງຫມົດໃນກຳໜົດເວລາແປດເດືອນຫຼັງຈາກສົງຄາມໄດ້ຢຸດຕິລົງ.

໑໔.໕. ການບູຣະນະສ້າງສາໃຫມ່ໃນພາກໃຕ້ແລະຖານະຂອງຊາວຜິວດຳ

໑໔.໕.໑. ສົງຄາມກາງເມືອງໄດ້ພາໃຫ້ພາກເໜືອແລະພາກໃຕ້ມີການປ່ຽນແປງທາງດ້ານເສຖກິດຫຼາຍປະການ. ພາກໃຕ້ນັ້ນໄດ້ຮັບຄວາມເສັຽຫາຍອັນໃຫຍ່ຫຼວງ ທັງໄຮ່ທົ່ງນາ ບ້ານເມືອງ ອຸດສາຫະກັມ ແລະຖນົນຫົນທາງຕ່າງໆ ຖືກເພພັງຢ່າງໜັກ. ຄວາມຈິງແລ້ວເຣື່ອງຂອງການບູຣະນະສ້າງສາພາກໃຕ້ຄືນໃຫມ່ເຄີຍໄດ້ຖືກຍົກຂຶ້ນມາພິຈາຣະນາຕັ້ງແຕ່ໃນສົງຄາມກາງເມືອງນັ້ນຍັງດຳເນີນຢູ່. ປະທານາທິບໍດີ Lincoln ໄດ້ສເນີແຜນຮັບເອົາຣັຖພາກໃຕ້ເຂົ້າໃນ Union ຕາມຫຼັກການດັ່ງນີ້ ຖ້າຫາກຣັຖດັ່ງກ່າວມີຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງປະຕິຍານຕໍ່

ຈົງຮັກພັກດີຕໍ່ Union ເຖິງ ໑໐% ຣັຖນັ້ນກໍຈະຖືກຮັບເອົາທັນທີ. ແຕ່ວ່າຄະນະທີ່ມີຄວາມເຫັນຣຸນແຮງຂອງພັກ Republican ນັ້ນຕ້ອງການລົງໂທດພ້ອມກັບຕ້ອງການປັບປຸງພາກໃຕ້ໃໝ່ໃນຖານະເປັນເຂດແດນທີ່ຖືກຍຶດຄອງ. ດ້ວຍເຫດນັ້ນເຂົາເຈົ້າຈຶ່ງໄດ້ຮັບຮອງເອົາຮ່າງສເນີສະພາຊຶ່ງເອີ້ນວ່າ Wade-Davis Bill ໃນປີ ໑໘໖໔. ຮ່າງສເນີດັ່ງກ່າວນີ້ຕ້ອງການໃຫ້ມີຈຳນວນປະຊາຊົນຜູ້ມີສິດປ່ອນບັດເລືອກຕັ້ງປະຕິຍານຕໍ່ຄວາມຈົງຮັກພັກດີຕໍ່ Union ເປັນສ່ວນຫຼາຍຈຶ່ງຈະຮັບເອົາຣັຖທີ່ສມັກເຂົ້າໃນ Union ນັ້ນໄດ້. ປະທານາທິບໍດີ Lincoln ໄດ້ຄັດຄ້ານຕໍ່ຮ່າງສເນີດັ່ງກ່າວ.

໑໔.໔.໒. ປະທານາທິບໍດີ Lincoln ຖືກຄາດຕະກຳໃນເດືອນເມສາ ໑໘໖໕. ໃນຕອນທຳອິດທ່ານ Andrew Johnson ປະທານາທິບໍດີຄົນໃໝ່ສນັບສນູນຄວາມນຶກຄິດຂອງຄະນະທີ່ມີຄວາມເຫັນຣຸນແຮງແຕ່ບໍ່ນານຕໍ່ມາທ່ານຈຶ່ງເຫັນດີກັບຄວາມຄິດຂອງທ່ານ Lincoln ດ້ວຍເຫດນັ້ນໃນທ້າຍປີ ໑໘໖໕ ທ່ານຈຶ່ງໄດ້ປະກາດໃຫ້ຣັຖພາກໃຕ້ທັງຫຼາຍມີສິດເຂົ້າສັງກັດໃນ Union ໝົດທຸກຣັຖອັນເປັນເຫດໃຫ້ຄະນະທີ່ມີຄວາມເຫັນຣຸນແຮງໂຈມຕີປະທານາທິບໍດີ Johnson ຢ່າງທັນທີ. ຕໍ່ມາໃນປີ ໑໘໖໖ ພວກທີ່ມີຄວາມເຫັນຣຸນແຮງຂອງພັກ Republican ໄດ້ອຳນາດສ່ວນໃຫຍ່ໃນສະພາດັ່ງນັ້ນເຂົາເຈົ້າຈຶ່ງໄດ້ອອກດຳລັດກ່ຽວກັບການບູຣະນະສ້າງສາຫຼາຍດຳລັດດ້ວຍກັນ. ໃນດຳລັດດັ່ງກ່າວມີເງື່ອນໄຂຢູ່ສອງປະການກ່ຽວກັບການເຂົ້າເປັນສມາຊິກຂອງ Union ຄືວ່າ :

ກ. ຣັຖພາກໃຕ້ແຕ່ລະຣັຖຕ້ອງການດຳເນີນການທັມມະນູນຂອງພັກ Republican ທຸກຢ່າງ. ການເລືອກຕັ້ງຜູ້ແທນເຂົ້າຮ່ວມໃນພວກດັ່ງກ່າວຈະຕ້ອງແມ່ນຜູ້ມີສິດປ່ອນບັດເລືອກຕັ້ງທັງຊາວຜິວດຳແລະຊາວຜິວຂາວເປັນຜູ້ລົງຄະແນນສຽງເລືອກເອົາ.

ຂ. ຣັຖພາກໃຕ້ແຕ່ລະຣັຖເຫັນດີກັບການດັດແປງຣັຖທັມມະນູນຄັ້ງທີສິບສີ່ຊຶ່ງມີຈຸດປະສົງມອບສັນຊາດໃຫ້ແກ່ຊາວຜິວດຳທັງຫຼາຍພ້ອມກັບແຈ້ງໃຫ້ຮູ້ວ່າບຸກຄົນບາງຈຳພວກທີ່ມາຈາກຣັຖຂອງ Confederacy ນັ້ນບໍ່ມີສິດລົງຄະແນນສຽງເລືອກຕັ້ງແລະຮັບຕຳແໜ່ງປະຈຳຣັຖບານກາງຫຼືປະຈຳຣັຖບານຂອງຣັຖຕ່າງໆ.

໑໔.໔.໓. ການບູຣະນະສ້າງສາພາກໃຕ້ຕາມດຳລັດດັ່ງກ່າວນີ້ໄດ້ເລີ່ມຂຶ້ນໃນປີ ໑໘໖໗. ເນື້ອທີ່ທັງໝົດຂອງ Confederacy ຖືກແບ່ງອອກເປັນເຂດທະຫານຫ້າເຂດດ້ວຍກັນ. ກອງທະຫານຂອງຣັຖບານກາງໄດ້ລົງໄປປະຈຳຢູ່ທາງພາກໃຕ້ເພື່ອປົກປັກຮັກສາຊາວຜິວດຳແລະເພື່ອປະຕິບັດກົດໝາຍຂອງຣັຖບານກາງຈົນເຖິງປີ ໑໘໗໗.

໑໔.໔.໔. ຖານະຂອງພວກຊາວຜິວດຳ. ການດັດແປງແກ້ໄຂຣັຖທັມມະນູນຄັ້ງທີສິບສາມແລະສິບສີ່ ພ້ອມດ້ວຍການອອກດຳລັດກ່ຽວກັບການບູຣະນະສ້າງສານັ້ນເຮັດໃຫ້ຊາວຜິວດຳຢູ່ໃນພາກໃຕ້ມີອຳນາດທາງການເມືອງ.

ຊາວຫົວດຳເຕັມສິດລົງຄະແນນສຽງເລືອກຕັ້ງນັ້ນມີຄວາມສຳຄັນຕໍ່ໂຄງການບູຣະນະສ້າງສາເປັນຢ່າງຍິ່ງ. ເນື່ອງຈາກວ່າພວກຊາວຫົວຂາວສ່ວນຫຼາຍບໍ່ມີສິດລົງຄະແນນສຽງເລືອກຕັ້ງໄດ້ ສະນັ້ນຈຳນວນຜູ້ມີສິດລົງຄະແນນສຽງສ່ວນໃຫຍ່ຈຶ່ງແມ່ນຊາວຫົວດຳ. ນີ້ເປັນຄັ້ງທຳອິດທີ່ປະຊາຊົນຜິວດຳໄດ້ລົງຄະແນນສຽງແລະຮັບຕຳແໜ່ງການເມືອງ. ພວກທີ່ເຄີຍເປັນຂ້າທາດມາກ່ອນເປັນຈຳນວນຮ້ອຍໆໄດ້ຖືກເລືອກເປັນສະມາຊິກສະພາຕ່ຳແລະສະພາສູງຂອງຣັຖອະເມຣິກາ.

ບົດຝຶກຫັດ

໑. **ຄຳທວຍຊອກຫາສັບ** :

ຄຳແນະນຳ : ຈົ່ງຊອກຫາສັບແລ້ວຂີດວົງກົມອ້ອມສັບຕ່າງໆທີ່ມີໃນຕະລາງສັບຂ້າງລຸ່ມນີ້. ໃຫ້ຊອກຫາສັບດັ່ງກ່າວຕາມທາງຕັ້ງ ທາງນອນ ແລະທາງຂວາງ. ເມື່ອພົບເຫັນສັບແລ້ວ ໃຫ້ຂຽນສັບທີ່ຫາໄດ້ນັ້ນໄວ້ ພ້ອມທັງບອກຄວາມໝາຍຂອງສັບນັ້ນລົງໄປ.

P T U R N I N G P O I N T H O N O R
R E A F F I R M B L O C K A D E B C
O R E C O N S T R U C T I O N H I O
C O N C L U S I O N R A T I F Y C N
L P U R S U I T W O C N S L A V E C
A D D R E S S L A A O A T H P R U L
M B A T T L E O R I N C S A P I N U
A F O R C E S Y T E T O H M O C I S
T I N V A D E A E L R N E E M H O I
I G O A L O P L Y I O F R N A M N O
O D A R E I Y T M G L E M D T O A N
N E A H C A B Y R I T D A M O N R L
M W C N E L T T A B N E N E X D M G
K I A P A R T C B L A R O N A B I N
B M A R Y L A N D E R A O T Y O E U
E G E T T Y S B U R G T B B E A S H
S H E R I D A N V A N E L A N N H I

17

WAR
LEE
OATH
GOAL
DARE
SLAVE
ARMY
FORCES
PART
BATTLE
HONOR
INVADE
RATIFY
GRANT
ADDRESS
REAFFIRM
ELIGIBLE
CONTROL
SHERIDAN
PURSUIT
RICHMOND
CONCLUSION
AMENDMENT
LOYALTY
BLOCKADE
MARYLAND
CONFEDERATE
SHERMAN
EMANCIPATION
RECONSTRUCTION
PROCLAMATION
GETTYSBURG
TURNING POINT
APPOMATOX
UNION ARMIES

໖. ການລຽງຕົວອັກສອນໃຫ້ເປັນສັບທີ່ໄດ້ຄວາມໝາຍ (Scrambled Words)

ຄຳແນະນຳ : ຈົ່ງດັດແປງປະໂຫຍກຕ່າງໆຕໍ່ລົງໄປນີ້ໃຫ້ໄດ້ຄວາມໝາຍຢ່າງສົມບູນໂດຍລຽງຕົວອັກສອນທີ່ປະປົນກັນໃນສັບນັ້ນໃຫ້ຖືກຕ້ອງ.

1. offernjes sivda was president of the Confederacy.
2. collnin was president of the United States during the Civil War and issued the Emancipation Proclamation freeing the slaves.
3. oretrb ele was the commander of Confederate forces.
4. beturytgg was the place where President Lincoln gave a speech calling for the preservation of the Union.
5. anhesmer was a Union general who led the long march to the sea through the South.
6. onemitanciap was issued by President Lincoln and it freed all the slaves in the Confederate States.
7. xppmaatoo uestchorou was the place in Virginia where General Lee surrendered to General Grant, ending the Civil War.

໗. ເລືອກຄຳຕອບ

ຈົ່ງເລືອກເອົາຕົວອັກສອນທີ່ຢູ່ນຳໜ້າສັບຫຼືຄຳເວົ້າທີ່ມີຄວາມເໝາະສົມທີ່ສຸດສຳລັບປະໂຫຍກແຕ່ລະປະໂຫຍກຫຼືເປັນຄຳຕອບທີ່ຖືກຕ້ອງທີ່ສຸດສຳລັບຄຳຖາມແຕ່ລະຄຳຖາມ.

໑. ສາເຫດອັນສຳຄັນຂອງສົງຄາມກາງເມືອງນັ້ນແມ່ນ :

(ກ) ການໂຈມຕີປ້ອມ Fort Sumter
(ຂ) ການຕາດຕັ້ງປະທານາທິບໍດີ Lincoln
(ຄ) ການດັດແປງລັດຖະທຳມະນູນຄັ້ງທີສິບສາມ
(ງ) ການສູ້ລົບທີ່ Gettysburg.

໔. ເປົ້າໝາຍອັນສຳຄັນໃນການໃຊ້ເຮືອລົບປິດລ້ອມໃນຣະຫວ່າງສົງຄາມກາງເມືອງກໍເພື່ອ ປ້ອງກັນ :

(ກ) ພວກອາສາສມັກຈາກອັງກິດບໍ່ໃຫ້ລົງໄປສູ່ພາກໃຕ້

(ຂ) ການສົ່ງຝ້າຍໄປຂາຍທີ່ຢູໂຣບ

(ຄ) ກຳປັ່ນຣັດເຊັຍບໍ່ໃຫ້ຢ້ຽມພາກໃຕ້

໕. ຄຳປະກາດປົດປ່ອຍຂ້າທາດໃຫ້ເປັນອິສຣະແມ່ນ :

(ກ) ກົດໝາຍທີ່ຜ່ານໂດຍສະພາ

(ຂ) ຂໍ້ດັດແປງແກ້ໄຂຣັຖທັມມະນູນ

(ຄ) ຄຳສັ່ງຂອງປະທານາທິບໍດີ

(ງ) ຄວາມເຫັນຮ່ວມຂອງສະພາ

໖. ຈຸດປະສົງໃນການຍົກກຳລັງເດີນໄປສູ່ທະເລຂອງນາຍພົນ Sherman ນັ້ນກໍເພື່ອ :

(ກ) ຈັບນາຍພົນ Lee

(ຂ) ໄປຊ່ວຍນາຍພົນ Grant

(ຄ) ແຍກຣັຖພາກໃຕ້ຫຼື Confederacy

(ງ) ຍຶດເອົາດິນປູກຝ້າຍທີ່ມີຄຸນຄ່າສຳຄັນພາກເໜືອ

໗. ຜົນສະທ້ອນອັນສຳຄັນຂອງສົງຄາມກາງເມືອງກໍຄືວ່າ :

(ກ) ສົງຄາມດັ່ງກ່າວໄດ້ເຮັດໃຫ້ບັນຫາກ່ຽວກັບສິດທິຂອງຣັຖຕ່າງໆຢຸດຕິລົງ

(ຂ) ສົງຄາມດັ່ງກ່າວໄດ້ເຮັດໃຫ້ຄວາມສຳພັນຣະຫວ່າງສະຫະຣັຖອະເມຣິກາ ແລະປະເທດອັງກິດແໜ້ນແຟ້ນຂຶ້ນ

(ຄ) ສົງຄາມດັ່ງກ່າວໄດ້ເຮັດໃຫ້ອຸດສາຫະກັມເປັນພື້ນຖານເສຖກິດຂອງຊາດ ແທນທີ່ຈະແມ່ນກະສິກັມ

(ງ) ສົງຄາມດັ່ງກ່າວເຮັດໃຫ້ຊາວຜິວດຳໃນພາກໃຕ້ໄດ້ຮັບຄວາມສເມີພາບ.

ໝວດ ໔ : ການຂັດແຍ້ງແລະການຕ້ອນໂຮມ
ພາກ ໑໘ : ການເລືອກຕັ້ງໃນປີ ໑໘໖໘

ສັບໃໝ່ :

remove: ປົດອາຣາຊຸການ

Congress tried to remove Johnson from the Presidency.

unconstitutional: ບໍ່ຖືກຕ້ອງຕາມຣັຖທັມມະນູນ

Johnson thought the Tenure of Office Act was unconstitutional.

approval: ການເຫັນດີ

Johnson did not get the approval of Congress when he removed Stanton from office.

charge: ຂໍ້ກ່າວຫາ ຫຼື ກະໂທງ

The House of Representatives tried to impeach Johnson with 11 charges.

Scalawag: ຄົນພື້ນຖານໃນພາກໃຕ້ທີ່ສນັບສນູນແລະຮ່ວມມືກັບຣັຖບານພັກໂລງການປັ້ນປູການສ້າງສາເພື່ອຫາປະໂຍດສ່ວນຕົວ.

Many Scalawags were considered to be traitors by the Southerners.

Carpetbagger: ຄົນພາກເໜືອທີ່ລົງໄປຢູ່ພາກໃຕ້ຫຼັງຈາກສົງຄາມກາງເມືອງເພື່ອສແວງຫາຜົນປະໂຍດທາງການເມືອງແລະຊູ່ລອຍ.

Southerners also thought the Carpetbaggers were intruders and the blacks were collaborators.

corruption: ການສໍ້ລາດບັງຫຼວງ

There was a lot of corruption during the Reconstruction years.

READING

16.1. RECONSTRUCTION AND THE ELECTION OF 1876

16.1.1. The Civil War ended in 1865. The years between 1865 and 1876 are known as the Reconstruction years. During this time American Presidents and the United States Congress attempted to rebuild and reunite the country which had been damaged and divided by the Civil War. However, there were many problems which occurred during the Reconstruction years.

16.1.2. The first problem was the conflict between the Presidents and the United States Congress. After Abraham Lincoln was assassinated, Vice President Johnson became the President of the United States. He became President at a time when the Congress was determined to limit the power of the President. In an effort to limit the President's power, Congress passed the Tenure of Office Act. This law said that the President could not remove a federal official without the approval of the Congress. Johnson thought that the law was unconstitutional and ignored it when he dismissed Edwin M. Stanton, the Secretary of War, without the consent of Congress. The Congress tried to "**impeach**" Johnson. They tried to stop him from being President. The effort failed, but Republicans no longer trusted Johnson. They did not want him to be the President again in 1868. The Republicans chose Ulysses S. Grant, the former Civil War General, to run for President in 1868. He won the election and was President for two terms. But Grant, like Johnson, was not able to control Congress.

16.1.3. Because neither Johnson nor Grant could control Congress' Reconstruction Plan, a second problem occurred. Many different groups of people appeared in the South. Instead of helping the South become part of the nation again, these groups continued to anger the Southerners. Congress sent many soldiers to the South to try to restore order and to protect the newly-won rights of the blacks. The Southerners did not like having the soldiers on their land. Also,many Northerners came to the South to get rich. The Southerners called these intruders "**Carpetbaggers**". The newly-freed blacks now had a new life. Many of them took jobs that were once held by whites in the federal and state governments. This angered whites so much that many of them organized secret hate societies against the blacks. Two of the groups, the Ku Klux Klan and the Knights of the White Magnolia, killed or terrorized many blacks. They also terrorized white Southerners known as "Scalawags." Scalawags were ex-Confederates who cooperated with the Reconstruction government. All the different groups -- the soldiers, the Carpetbaggers, the ex-slaves, the Scalawags, the Ku Klux Klan, and the Knights of the White Magnolia -- helped keep Southern anger against the North alive. They did not help to reunite the two sections.

16.1.4. The third problem which occurred during Reconstruction years related to money. There were two types of money problems: corruption and depression. Boss Tweed in New York City and the "Whiskey Ring" in St. Louis were just two examples of corruption that could be found throughout the nation. The economy was not stable. Railroads were developing so fast that the country's credit was weakened. World demand for American farm products had grown smaller. In 1873 one of the country's biggest banks -- Jay Cook and Company-- failed. Hundreds of businesses had to close; many people lost their jobs. The panic of 1873 started a terrible depression which President Grant could not lessen or change.

16.2. THE ELECTION OF 1876: A COMPROMISE BETWEEN REPUBLICANS AND DEMOCRATS

16.2.1. The problems of the Reconstruction years -- the conflict between the President and Congress, the appearance of different groups in the South which further divided the nation and the problems of corruption and depression -- were all issues in the election of 1876 between the Republican, Rutherford Hayes, and the Democrat, Samuel Tilden. Although Tilden won the popular vote, neither candidate received the clear majority of electoral votes (185) needed to win the Presidency. Tilden had received 184 electoral votes and Hayes had received 165. A dispute centered around four Southern states which had sent in two different sets of 20 votes. Whoever won these 20 votes would have the required 185 and would become the winner. Both Republicans and Democrats said they had won these votes. The House of Representatives created a special Commission of 15 members to decide these votes. The Commission voted 8-7 that Hayes had won the votes. Rutherford Hayes became the new President. However, to avoid making the Southerners angry, the Commission forced Hayes to accept two conditions that would please the South:

1. Federal troops must be withdrawn from the South and
2. White Southerners were allowed to organize their own civil governments.

16.2.2. President Hayes began his job by removing the federal troops from Louisiana and South Carolina. After federal troops left, white southerners quickly got back their former positions. Soon the whites controlled all political and social activities in the South. By compromising with the Southern Democrats, Northern Republicans had given up their efforts to protect the rights of the blacks. After 10 years, the Reconstruction Plan had failed to changed the social relationship between the whites and the blacks.

EXERCISES

I. Word Search Puzzle.

Directions: Find and circle the words in the word search puzzle below. The words will be found vertically, horizontally, and diagonally. When you find a word, write it and then define it.

O R S T V Y S U P R E M E T O N S C
A S O N T P R E M O V E P S T O R O
B T U L R S T R A I T O R M N O Q R
C S I N O Q C R I N T E R N A L M R
D U N C O N S T I T U T I O N A L U
G P O H A T B E T R A Y N O J P P P
E E T A S R O E R U I N O O K P Q T
F M U R T O P P S D O O R M T R R I
G E U G C T N S O E O I O B O O K O
I M P E A C H E D R T I L I K U S N
H E R S R O P S O Y P R Q U T E T S
O C S R N O C O L L A B O R A T O R
S Y W I T H D R A W I N G N O T Q R

GUILTY
REMOVE
TRAITOR
CORRUPTION
WITHDRAWING
COLLABORATOR
IMPEACH
SUPREME
UNCONSTITUTIONAL
MAJORITY
BOOK
BETRAY
INTRUDER
CHARGES
INTERNAL

II. Matching

Match the term in the left column with a description in the right column.

	A	B
____	a. remove	1. the act of approving.
____	b. impeach	2. the offering and accepting bribes.
____	c. scalawag	3. to move from a position occupied.
____	d. corruption	4. to charge with malfeasance in office before a proper tribunal.
____	e. approval	5. to bring back into existence or use.
____	f. intruder	6. to coerce by intimidation or fear.
____	g. majority	7. a sudden terror, often affecting many people at once.
____	h. panic	8. one who enters as an improper or unwanted element.
____	i. terrorize	9. number of votes for one side which exceed those for the other side.
____	h. restore	10. a southerner who worked with the Reconstruction government.

III. Time-line study

Put each event at the appropriate time on the time-line below

1. The Civil War started.
2. Ulyssess Grant was nominated as the Republican Presidential candidate.
3. The Emancipation Proclamation was declared by President Lincoln.
4. The end of the Civil War.
5. The last federal troops withdrew from the South.
6. The presidential election between Samuel Tilden and Rutherford Hayes.
7. The first economic depression occurred in the U.S.A.

8. The Congress adopted the Tenure of Office Act.



IV. Multiple Choice.

Select the number preceding the word or expression that best completes each statement.

1. Hayes' opponent in the Presidential election of 1876 was (a)General Sherman (b)Samuel Tilden (c)William Richardson.

2. During President Grant's administration a notorious and corrupt local political machine was (a) the Knights of the White Camelia (b) Tweed Ring (c) Ku Klux Klan.

3. In order to carry out their programs, the Radical Republicans tried to (a) reduce the power of the President (b) enlarge the size of the army (c) keep blacks from voting.

4. Carpetbaggers were generally (a) welcomed in the South (b) regarded by Southerners as intruders (c) opposed to the Reconstruction Plan of the Government.

5. President Johnson and Congress argued about (a) freeing the slaves (b) who had the power to plan and to carry out Reconstruction policies (c) the presidential election in 1868.

ບົດອ່ານ

໑໕.໑. ປັນຫາຍຸ້ງຍາກໃນຣະຫວ່າງສໄໝຟື້ນຟູການສ້າງສາ

໑໕.໑.໑. ປັນຫາໃນການຟື້ນຟູການສ້າງສາປະເທດເປັນເຫດໃຫ້ມີການຂັດແຍ່ງຣະຫວ່າງສະພາແລະປະທານາທິບໍດີເກີດຂຶ້ນ. ສະພານັ້ນຕ້ອງການຄວບຄຸມໂຄງການການສ້າງສາທັງໝົດ ແລະໃນຂະນະດຽວກັນສະພາຍັງຕ້ອງການໃຫ້ປະທານາທິບໍດີມີອຳນາດຢູ່ໃນຂອບເຂດຈຳກັດເທົ່ານັ້ນ. ດັ່ງນັ້ນພວກທີ່ມີຄວາມຄິດເຫັນອັນຮຸນແຮງຊຶ່ງໃນເວລານັ້ນມີອິດທິພົນທີ່ສຸດໃນສະພາຈຶ່ງໄດ້ອອກຄຳສັ່ງເອີ້ນວ່າ Tenure of Office Act ຄຳສັ່ງສະບັບດັ່ງກ່າວນີ້ໄດ້ບົ່ງໄວ້ວ່າ ປະທານາທິບໍດີບໍ່ມີສິດປົດປ່ອຍຂ້າຣາຊການຜູ້ໃດຜູ້ນຶ່ງອອກຈາກຣັຖບານຖ້າຫາກບໍ່ໄດ້ຮັບການຮັບຮູ້ແລະເຫັນດີຈາກສະພາ. ປະທານາທິບໍດີ Johnson ເຫັນວ່າຄຳສັ່ງ Tenure of Office Act ບໍ່ຖືກຕ້ອງຕາມຣັຖທັມມະນູນດັ່ງນັ້ນທ່ານຈຶ່ງຕ້ອງການໃຫ້ສານສູງສຸດເປັນຜູ້ພິຈາຣະນາຕີຄວາມໝາຍຂອງຄຳສັ່ງດັ່ງກ່າວໃຫ້ແກ່ທ່ານ. ໃນປີ ໑໙໒໖ ເຖິງວ່າສານສູງສຸດສນັບສນູນຄວາມຄິດຂອງປະທານາທິບໍດີກໍຕາມ ແຕ່ທາງສານເອງບໍ່ສາມາດທີ່ຈະກະທຳສິ່ງໃດຊ່ອຍໄດ້. ການຂັດແຍ່ງໄດ້ລະເບີດຂຶ້ນເມື່ອປະທານາທິບໍດີ Johnson ປົດຣັຖມົນຕີປ້ອງກັນປະເທດຄືທ່ານ Edwin M. Stanton ອອກຈາກໜ້າທີ່ໂດຍບໍ່ໄດ້ຮັບຄວາມເຫັນຈາກສະພາສູງ. ສະພາຜູ້ແທນຣາສດອນກ່າວວ່າປະທານາທິບໍດີມີຄວາມຜິດຢູ່ສິບເອັດກະໂທງ. ໃນທີ່ສຸດສະພາສູງເຫັນວ່າປະທານາທິບໍດີ Johnson ນັ້ນບໍ່ມີຄວາມຜິດແຕ່ປະການໃດ. ນັບຈາກນັ້ນເປັນຕົ້ນມາພວກ Republican ຂາດຄວາມເຊື່ອຖືແລະບໍ່ຕ້ອງການໃຫ້ທ່ານ Johnson ສມັກເປັນປະທານາທິບໍດີອີກຕໍ່ໄປ. ດ້ວຍເຫດນີ້ນາຍພົນ Ulysses S. Grant ວິຣະບຸລຸດຂອງສົງຄາມກາງເມືອງຈຶ່ງໄດ້ຖືກແຕ່ງຕັ້ງຈາກພັກ Republican ໃຫ້ເປັນຜູ້ສມັກໃນການເລືອກຕັ້ງປະທານາທິບໍດີໃນປີ ໑໘໖໘.

໑໕.໑.໒. ນາຍພົນ Grant ຖືກເລືອກເປັນປະທານາທິບໍດີໂດຍໄດ້ຮັບຄະແນນສຽງສ່ວນຫຼາຍຈາກຊາວຜິວຂາວໃນພາກເໜືອແລະໄດ້ຮັບຄະແນນສຽງເຕັມຮ້ອຍເປີເຊັນຈາກພວກຜິວດຳໃນພາກໃຕ້. ນາຍພົນ Grant ປະຈຳຢູ່ທຳນຽບຂາວສອງສໄໝແລະໃນຣະຫວ່າງຄອງຕຳແໜ່ງຢູ່ນັ້ນເປັນເວລາແປດປີ ທ່ານບໍ່ສາມາດທີ່ຈະຄວບຄຸມໂຄງການຟື້ນຟູການສ້າງສາໄດ້. ຄວາມຈິງແລ້ວໂຄງການຟື້ນຟູການສ້າງສານັ້ນໄດ້ຢູ່ໃນກຳມືຂອງພວກທີ່ມີຄວາມເຫັນອັນຮຸນແຮງໃນສະພາຕ່າງຫາກ ແລະພວກດັ່ງກ່າວໄດ້ຍຶດເອົາຣັຖຕ່າງໆທີ່ເຄີຍສັງກັດຢູ່ໃນ Confederacy ໃນສໄໝກ່ອນນັ້ນໃຫ້ຢູ່ກ້ອງອຳນາດຂອງທະຫານ. ປະຊາຊົນທາງພາກໃຕ້ບໍ່ມັກຣັຖບານທີ່ມີໂຄງການຟື້ນຟູການສ້າງສາກໍເພາະວ່າມີກຳມະກອນຈຳພວກໃໝ່ສອງຈຳພວກທີ່ເຂົ້າເຈົ້າຕ້ອງໄດ້ຮັບຮູ້ : ພວກ Scalawags ແລະພວກ Carpetbaggers. ພວກ Scalawags ແມ່ນພວກ

ຈາວພາກໃຕ້ທີ່ໄດ້ການຮ່ວມມືກັບຣັຖບານທີ່ຈີ້ນະໂຍບາຍຟື້ນຟູການສ້າງສາ. ສ່ວນພວກ Carpetbaggers ນັ້ນແມ່ນພວກຈາວພາກເໜືອທີ່ຫຼັ່ງໄຫຼລົງໄປທາງພາກໃຕ້ເພື່ອສ້າງຄວາມລ້ຳລວຍ. ນອກຈາກນັ້ນກໍຍັງມີພວກຜິວດຳທີ່ໄດ້ຮັບອິສຣະພາບແລະໄດ້ຮັບຕຳແໜ່ງໃນວົງຣັຖບານຣະດັບຣັຖແລະໃນຣັຖບານສ່ວນກາງພ້ອມກັບມີສະມາຊິກສະພາທີ່ເປັນຄົນດຳທີ່ມາຈາກພາກໃຕ້ອີກດ້ວຍ ຊຶ່ງທັງໝົດນີ້ໄດ້ເຮັດໃຫ້ພວກຈາວຜິວຂາວໃນພາກໃຕ້ເກີດບໍ່ພໍໃຈເປັນທີ່ສຸດ. ດ້ວຍເຫດນີ້ເຂົາເຈົ້າຈຶ່ງໄດ້ຈັດຕັ້ງສະມາຄົມລັບຫຼາຍສະມາຄົມເພື່ອຕໍ່ຕ້ານກັມມະກອນຈຳພວກໃໝ່ນັ້ນແລະຕໍ່ຕ້ານພວກຄົນດຳ. ກຸ່ມຕໍ່ຕ້ານທີ່ມີຊື່ສຽງສອງກຸ່ມກໍຄືພວກ the Ku Klux Kla ພວກ the Knights of the White Camelia ພວກກຸ່ມເຫຼົ່ານີ້ຖືພວກ Scalawags ເປັນພວກທໍຣະຍົດຕໍ່ເຂົາເຈົ້າ ຖືພວກ Carpetbaggers ເປັນພວກບຸກລຸກແລະຖືພວກດຳເປັນພວກທີ່ເຮົ້າຮ້າວຣັຖບານໃໝ່. ພວກທີ່ຖືກຖືເປັນພວກ "ທໍຣະຍົດ" ພວກ "ບຸກລຸກ" ແລະພວກ "ເຮົ້າຮ້າວ" ຫຼາຍຄົນໄດ້ຖືກຂ້າຈາກພວກ the Ku Klux Klan ແລະພວກ the Knights of the White Camelia.

໑໖.໑.໓. ໃນສໄໝຟື້ນຟູການສ້າງສານັ້ນ ຣັຖບານກາງໄດ້ສິ້ນເປືອງເງິນງົບປະມານອັນຫຼວງຫຼາຍທີ່ສຸດຈຶ່ງເຮັດໃຫ້ມີການສໍ້ຣາດບັງຫຼວງເກີດຂຶ້ນ. ທີ່ຈິງແລ້ວການສໍ້ຣາດບັງຫຼວງນັ້ນໄດ້ເກີດມີຂຶ້ນໃນຕອນທີ່ສົງຄາມກາງເມືອງໄດ້ສິ້ນສຸດລົງພໍດີ (ໃນພາກເໜືອສະມາຊິກຂອງພັກ Democratic Party ຄືທ່ານ William Tweed ໄດ້ກອດເອົາເງິນກ່ວາພັນລ້ານໃນຄັງເງິນຂອງເມືອງ New York City). ຢູ່ເມືອງ St. Louis ຣັຖບານໄດ້ເສັຽເງິນເປັນຈຳນວນຫຼາຍລ້ານໂດລາຈາກເກັບພາສີຂອງ "Whisky Ring". ປະເທດຊາດໄດ້ຮັບຄວາມລຳບາກຍ້ອນການສໍ້ຣາດບັງຫຼວງດັ່ງກ່າວ. ເນື່ອງຈາກການສ້າງທາງຣົດໄຟໄດ້ຂຍາຍຕົວໄວເກີນຄວນດັ່ງນັ້ນເງິນຕຣາແລະຊື່ສຽງຂອງປະເທດຈຶ່ງໄດ້ຮັບການກະທົບກະເທືອນ. ໃນເວລານັ້ນສະຫະຣັຖອະເມຣິກາໄດ້ສູນເສັຽຕລາດສຳຫຼັບຂາຍພືດປູກຫຼາຍແຫ່ງໃນໂລກ. ໃນເດືອນກັນຍາ ປີ ໑໘໗໓ ທະນາຄານນຶ່ງທີ່ໃຫຍ່ທີ່ສຸດໃນປະເທດຄືທະນາຄານ Jay Cook and Company ໄດ້ລົ້ມຈົມໄປ. ບໍຣິສັດການຄ້າຫຼາຍຮ້ອຍບໍຣິສັດຈຳເປັນຕ້ອງຍຸດຕິກິຈການແລະປະຊາຊົນຈຳນວນຫຼາຍຂາດວຽກເຮັດງານທຳ. ຄວາມຫຍຸ້ງຍາກສັບສົນໃນປີ ໑໘໗໓ ໄດ້ພາໃຫ້ເກີດມີການປັ່ນປ່ວນດ້ານເສຖກິດອັນຮ້າຍກາດຊຶ່ງບໍ່ເຄີຍມີມາກ່ອນໃນປະເທດ. ປະທານາທິບໍດີ Grant ບໍ່ສາມາດທີ່ຈະແກ້ໄຂສະພາບການດັ່ງກ່າວໄດ້.

໑໖.໑.໔. ຫຼັງຈາກປະເທດຊາດໄດ້ຫອບໂຮມກັບຄືນບໍ່ເທົ່າໃດປີ ພວກຈາວເໜືອກໍໄດ້ປະຖິ້ມໂຄງການຟື້ນຟູການສ້າງສານັ້ນໄປ. ຈາວພາກເໜືອບາງຈຳພວກເຫັນວ່າໂຄງການດັ່ງກ່າວເປັນການຜິດພາດອັນໃຫຍ່ຫຼວງທັງນີ້ກໍເພາະວ່າໂຄງການທີ່ປະຕິບັດມານັ້ນເປັນການສ້າງສັງຄົມໃໝ່ຂຶ້ນໃນພາກໃຕ້ ຊຶ່ງເຮັດໃຫ້ພວກທີ່ເຄີຍຢູ່ໃນ

ຣັຖທີ່ສັງກັດໃນ Confederacy ໄດ້ອຳນາດຄືນແລະດຳເນີນວິທີການໃໝ່ສຳຫຼັບປະໂຍດຂອງເຂົາເຈົ້າເອັງໃນພາກໃຕ້. ວິທີການໃໝ່ (ຫຼື home rule) ໝາຍເຖິງພວກ Democrats ກຳເອົາອຳນາດຈາກພວກ Republicans ໄປແລະໝາຍເຖິງການໃຊ້ອຳນາດຍິ່ງໃຫຍ່ຂອງຄົນຜິວຂາວຄືນ. ນັບປີກ່ອນທີ່ຣະຍະຂອງການຟື້ນຟູການສ້າງສາຈົບລົງຄວາມວຸ້ນວາຍທາງການເມືອງໄດ້ສັ່ນສະເທືອນທົ່ວປະເທດ. ຄວາມວຸ້ນວາຍດັ່ງກ່າວເກີດຈາກການແຂ່ງຂັນສມັກເລືອກຕັ້ງເປັນປະທານາທິບໍດີຣະຫວ່າງຕົວແທນຂອງພັກ Republican ຄືທ່ານ Governor Rutherford Hayes ແລະທ່ານ Samuel Tilden ຊຶ່ງເປັນຕົວແທນຂອງພັກ Democratic Party ໃນປີ ໑໘໗໖ ນັ້ນເອັງ.

໑໖.໒. ຂໍ້ຕົກລົງຣະຫວ່າງພວກ Democrats ແລະ Republicans.

໑໖.໒.໑. ເມື່ອເຫັນວ່າຄວາມຕ້ອງການຂອງປະຊາຊົນທົ່ວໄປຢາກໃຫ້ມີການປັບປຸງສະພາບການຕະລົ້ນເລື້ອຍສະນັ້ນພວກ Democrats ຈຶ່ງພະຍາຍາມຫາທາງເອົາໄຊຊະນະໃນການເລືອກຕັ້ງປະທານາທິບໍດີ ໂດຍສົ່ງທ່ານ Samuel Tilden ເຂົ້າແຂ່ງຂັນ. ທ່ານ Samuel Tilden ນັ້ນມີຊື່ສຽງຍ້ອນວ່າທ່ານສາມາດທັບມ້າງອົງການຂອງທ່ານ Tweed ໃນ New York ໄດ້. ພັກ Republican Party ກໍ່ມີຕົວແທນທີ່ມີຊື່ສຽງເຊັ່ນກັນຄືທ່ານ Governor Rutherford Hayes ນັກປະຕິຮູບຈາກ Onio.

໑໖.໒.໒. ຜົນຂອງການລົງຄະແນນສຽງເລືອກຕັ້ງຈາກປະຊາຊົນທົ່ວໄປປາກົດວ່າທ່ານ Tilden ໄດ້ສຽງຫຼາຍກວ່າທ່ານ Hayes ໒໕໐,໐໐໐ ສຽງ ແລະຜົນຂອງການລົງຄະແນນສຽງເລືອກຕັ້ງຈາກຄະນະຜູ້ແທນຈາກຣັຖຕ່າງໆກໍ່ປາກົດວ່າທ່ານ Tilden ໄດ້ສຽງຫຼາຍກວ່າທ່ານ Hayes ເຊັ່ນດຽວກັນຄື ໑໘໔ ສຽງ ຕໍ່ ໑໖໕ ສຽງ. ດ້ວຍເຫດນີ້ໜັງສືພິມສ່ວນຫຼາຍຈຶ່ງເຂົ້າໃຈວ່າທ່ານ Tilden ໄດ້ໄຊຊະນະ. ຄວາມຈິງແລ້ວພວກໜັງສືພິມເຫຼົ່ານັ້ນເຂົ້າໃຈຜິດເພາະວ່າທ່ານ Tilden ຕ້ອງໄດ້ສຽງເພີ່ມຕື່ມອີກສຽງນຶ່ງເພື່ອໃຫ້ຄົບ ໑໘໕ ສຽງຈຶ່ງຖືວ່າຊະນະໄດ້.

໑໖.໒.໓. ຕາມທັມມະດາໃນເມື່ອບໍ່ມີຜູ້ສະໝັກຮັບເລືອກຕັ້ງເປັນປະທານາທິບໍດີຜູ້ໃດໄດ້ຄະແນນສຽງສ່ວນຫຼາຍຢ່າງແຈ້ງຂາວແລະຄົບຖ້ວນຈາກການລົງຄະແນນສຽງເລືອກຕັ້ງຂອງຄະນະຜູ້ແທນຈາກຣັຖຕ່າງໆແລ້ວກໍ່ຈະແມ່ນສະພາຜູ້ແທນຣາສດອນເອັງເປັນຜູ້ເລືອກເອົາປະທານາທິບໍດີ. ແຕ່ວ່າສຳຫຼັບການເລືອກຕັ້ງໃນປີ ໑໘໗໖ ນັ້ນເນື່ອງຈາກສີ່ຣັຖໃນພາກໃຕ້ໄດ້ສົ່ງບັດຄະແນນສຽງເປັນສອງຊຸດຕ່າງກັນສະນັ້ນຈຶ່ງເກີດມີການຜິດຖຽງກັນຂຶ້ນ.

ພວກ Democrats ແລະພວກ Republicans ຕ່າງຝ່າຍຕ່າງກໍອ້າງວ່າບັດລະແນນສຽງເຫຼົ່ານັ້ນເປັນຂອງພວກຕົນ. ສະເພາະກໍລະນີເຊັ່ນນີ້ ຣັຖທັມມະນູນເອງກໍບໍ່ໄດ້ບົ່ງວິທີແກ້ໄຂອັນແຈ່ມແຈ້ງໄວ້ແຕ່ຢ່າງໃດ. ດັ່ງນັ້ນສະພາຜູ້ແທນຣາສດອນຈຶ່ງໄດ້ຕັ້ງຄະນະກັມມະການຂຶ້ນເພື່ອຕິດສືບເຣື່ອງນີ້. ຄະນະກັມມະການໄດ້ລົງຄະແນນສຽງ ໘ ຕໍ່ ໗ ໃຫ້ບັດລົງຄະແນນຈາກສີ່ຣັຖໃນພາກໃຕ້ເປັນຂອງທ່ານ Hayes. ໃນທີ່ສຸດທ່ານ Hayes ກໍໄດ້ຮັບການເລືອກຕັ້ງເປັນປະທານາທິບໍດີໄປໂດຍມີຂໍ້ຜູກມັດບາງປະການທີ່ທ່ານຈະຕ້ອງປະຕິບັດເພື່ອໃຫ້ຖືກໃຈປະຊາຊົນໃນພາກໃຕ້. ຂໍ້ຜູກມັດຢ່າງນຶ່ງນັ້ນກໍຄືວ່າປະທານາທິບໍດີ Hayes ຕ້ອງຖອນກອງທະຫານຂອງຣັຖບານກາງກອງສຸດທ້າຍອອກຈາກພາກໃຕ້ພ້ອມກັບອະນຸຍາດໃຫ້ພວກຜິວຂາວໃນພາກໃຕ້ນັ້ນຕັ້ງຣັຖບານພົລເຣືອນຂອງເຂົາເຈົ້າ.

໑໓.໒.໔. ປະທານາທິບໍດີ Hayes ໄດ້ຖອນກອງທະຫານຣັຖບານກາງອອກຈາກ Louisiana ແລະ South Carolina ໃນຕອນທ່ານເລີ່ມຮັບຕຳແໜ່ງຂຶ້ນທຳອິດ. ຫຼັງຈາກກອງທະຫານດັ່ງກ່າວໄດ້ຖອນຕົວໄປແລ້ວ ພວກຊາວຜິວຂາວໃນພາກໃຕ້ກໍກັບເອົາອຳນາດເດີມແລະສ້າງການຄວບຄຸມກິຈການທາງສັງຄົມແລະການເມືອງທັງໝົດໃນພາກໃຕ້ຢ່າງທັນທີ. ເພື່ອມອບອຳນາດຄວາມຍິ່ງໃຫຍ່ຄືນໃຫ້ແກ່ພວກຜິວຂາວໃນພາກໃຕ້ແລ້ວ ປະຊາຊົນພາກເໜືອກໍໄດ້ຢຸດຕິຄວາມພະຍາຍາມທາງດ້ານປ້ອງກັນສິດທິຂອງພວກຊາວຜິວດຳ. ດ້ວຍເຫດນີ້ພວກຜິວດຳໃນພາກໃຕ້ສຸດທ້າຍໄດ້ຢູ່ໃນສັງຄົມທີ່ພວກຜິວຂາວມີອຳນາດຄວາມຍິ່ງໃຫຍ່ໃໝ່ອີກ. ເປັນເວລາສິບປີທີ່ໂຄງການຟື້ນຟູການສ້າງສາໄດ້ພະຍາຍາມດັດແປງປັບປຸງຄວາມສຳພັນລະຫວ່າງພວກຜິວດຳແລະພວກຜິວຂາວ ແຕ່ໃນທີ່ສຸດກໍພົບກັບຄວາມລົ້ມເຫລວ.

ບົດຝຶກຫັດ

໑. ຊອກຫາສັບ :

ຄຳແນະນຳ : ຈົ່ງຊອກຫາສັບແລ້ວຂີດວົງກົມອ້ອມສັບເຫຼົ່ານັ້ນໃນຕະລາງສັບຂ້າງລຸ່ມນີ້. ໃຫ້ຊອກຫາສັບດັ່ງກ່າວ ຕາມທາງຕັ້ງ ທາງນອນ ແລະ ທາງຂວາງ. ເມື່ອພົບເຫັນສັບນັ້ນແລ້ວໃຫ້ຂຽນເອົາໄວ້ພ້ອມຄວາມໝາຍຫຼືຄຳອະທິບາຍ.

```
O R S T V Y S U P R E M E T O N S C
A S O N T P R E M O V E P S T O R O
B T U L R S T R A I T O R M N O Q R
C S I N O Q C R I N T E R N A L M R
D U N C O N S T I T U T I O N A L U
G P O H A T B E T R A Y N O J P P P
E E T A S R O E R U I N O O K P Q T
F M U R T O P P S D O O R M T R R I
G E U G C T N S O E O I O B O O K O
I M P E A C H E D R T I L I K U S N
H E R S R O P S O Y P R Q U T E T S
O C S R N O C O L L A B O R A T O R
S Y W I T H D R A W I N G N O T Q R
```

GUILTY
REMOVE
TRAITOR
CORRUPTION
WITHDRAWING
COLLABORATOR
IMPEACH
SUPREME
UNCONSTITUTIONAL
MAJORITY
BOOK
BETRAY
INTRUDER
CHARGES
INTERNAL

໒. ການປະກອບສັບແລະຄຳອະທິບາຍໃຫ້ຖືກຕ້ອງກັນ : ຈົ່ງຈັດເອົາຄຳເວົ້າແຕ່ລະຄຳໃນໝວດ (ກ) ໃຫ້ຖືກກັບຄຳອະທິບາຍໃນໝວດ (ຂ) ໂດຍຂຽນຄຳຕອບຊຶ່ງເປັນຕົວເລກໃສ່ຊ່ອງວ່າງທີ່ປະໄວ້ບົນສຳລັບຄຳຕອບທຸກຄຳ.

ໝວດ (ກ)	ໝວດ (ຂ)
______(ກ) ມີຄວາມຜິດ	(໑) ໄດ້ປຽບ ຫຼື ໂອກາດ
______(ຂ) ກ່າວຫາວ່າມີຄວາມຜິດ	(໒) ພາຍໃນ, ເລື່ອງຂອງພາຍໃນປະເທດ.
______(ຄ) ສ່ວນຫຼາຍ	(໓) ບໍ່ສາມາດຕົກລົງກັນໄດ້
______(ງ) ຄົນຜິວຂາວໃນພາກໃຕ້ທີ່ສະໜັບສະໜູນ ແລະຮ່ວມມືກັບລັດຖະບານທີ່ມີໂຄງການຟື້ນຟູ ການສ້າງສາເພື່ອຜົນປະໂຍດສ່ວນຕົວ.	(໔) ມີຄວາມຜິດ

321

______(ຈ) ຜູ້ທໍລະຍົດ	(໔) ການໃຕ້ ຫຼື ການຮັບສິນບົນ
______(ສ) ການສໍ້ລາດບັງຫຼວງ	(໕) ການກ່າວຫາວ່າມີຄວາມຜິດ
______(ຊ) ອຳນາດຄວາມຍິ່ງໃຫຍ່	(໖) ຈຳນວນບັດລົງຄະແນນສຽງຂອງຝ່າຍນຶ່ງທີ່ຫຼາຍກວ່າອີກຝ່າຍນຶ່ງ.
______(ຍ) ໄດ້ປຽບ ຫຼື ໂອກາດ	(໗) ຄົນໃນພາກໃຕ້ທີ່ເຮັດວຽກຮ່ວມຣັຖບານທີ່ມີໂຄງການຟື້ນຟູການສ້າງສາ.
______(ດ) ຕົກລົງກັນບໍ່ໄດ້	(໘) ຜູ້ທີ່ທໍລະຍົດຕໍ່ເພື່ອນຝູງ
______(ຕ) ນາຍໃນ	(໑໐) ມີອຳນາດສູງສຸດ.

໓. ໝາຍກຳນົດປີ : ຈົ່ງໝາຍປີຂອງເຫດການໃນປະໂຍກຕໍ່ລົງໄປນີ້ໃຫ້ຖືກຕ້ອງ.

໑. ສົງຄາມກາງເມືອງໄດ້ເລີ້ມ

໒. Ulysses Grant ຖືກແຕ່ງຕັ້ງໃຫ້ເປັນຜູ້ສະໝັກຮັບເລືອກຕັ້ງຂອງພັກ Republican.

໓. ປະທານາທິບໍດີ Lincoln ໄດ້ປະກາດປົດປ່ອຍຂ້າທາດໃຫ້ເປັນອິສຣະ

໔. ການຢຸດຕິສົງຄາມກາງເມືອງ

໕. ກອງທະຫານຣັຖບານກາງກອງສຸດທ້າຍຖອນອອກຈາກພາກໃຕ້

໖. ການເລືອກຕັ້ງປະທານາທິບໍດີຣະຫວ່າງ Samuel Tilden ແລະ Rutherford Hayes.

໗. ການປັ່ນປ່ວນດ້ານເສຖກິດເກີດຂຶ້ນໃນສະຫະຣັຖອະເມຣິກາຄັ້ງທຳອິດ

໘. ສະພາອອກດຳຣັດ The Tenure of Office Act.

໔. ເລືອກຄຳຕອບ : ຈົ່ງເລືອກເອົາຕົວອັກສອນທີ່ຢູ່ໜ້າສັບຫຼືຄຳເວົ້າທີ່ມີຄວາມເໝາະສົມທີ່ສຸດສຳຫຼັບປະໂຍກແຕ່ລະປະໂຍກ.

໑. ຄູ່ແຂ່ງຂອງທ່ານ Hayes ໃນການເລືອກຕັ້ງປະທານາທິບໍດີໃນປີ ໑໘໗໖ ແມ່ນ :
   - (ກ) ນາຍພົນ Sherman
   - (ຂ) Samuel Tilden
   - (ຄ) William Richardson.

໖. ໃນລະຫວ່າງທີ່ປະທານາທິບໍດີ Grant ຄອງຕຳແໜ່ງຢູ່ນັ້ນກຸ່ມທີ່ສໍ້ໂກງທີ່ນອງນັ້ນແມ່ນ :

(ກ) The Knights of the White Camelia

(ຂ) Tweed Ring

(ຄ) Ku Klux Klan

໗. ເມື່ອປະຕິບັດຕາມໂຄງການຂອງເຂົາເຈົ້າ ພວກທີ່ມີຄວາມເຫັນຮຸນແຮງໃນພັກ Republican. ໄດ້ພະຍາຍາມ :

(ກ) ຕັດອຳນາດຂອງປະທານາທິບໍດີລົງ

(ຂ) ເພີ່ມກຳລັງກອງທັບ

(ຄ) ຫ້າມພວກຜິວດຳຢ່ອນບັດລົງຄະແນນສຽງ

໘. ພວກ Carpetbaggers ໂດຍທົ່ວໄປ :

(ກ) ຖືກຕ້ອນຮັບຢ່າງດີໃນພາກໃຕ້

(ຂ) ຄົນພາກໃຕ້ຖືວ່າເປັນພວກບຸກລຸກ

(ຄ) ຄັດຄ້ານໂຄງການຟື້ນຟູການສ້າງສາຂອງຣັຖບານ

໙. ປະທານາທິບໍດີ Johnson ແລະສະພາຖົກຖຽງກັນກ່ຽວກັບ :

(ກ) ການປ່ອຍຂ້າທາດເປັນອິສລະ

(ຂ) ເຣື່ອງວ່າໃຜມີອຳນາດໃນການວາງໂຄງການແລະປະຕິບັດ
ນະໂຍບາຍຂອງການຟື້ນຟູສ້າງສາປະເທດ.

(ຄ) ການເລືອກຕັ້ງປະທານາທິບໍດີໃນປີ ໑໘໖໘

Section V
The Transformation Of A Nation

ໝວດ ໕ : ການປ່ຽນແປງຂອງຊາດ

ພາກ ໑໗ : ລະຍະການພັດທະນາດ້ານອຸດສາຫະກັມ

ສັບໃໝ່ :

cattle raising: ການລ້ຽງສັດ

The industries of mining and cattle raising developed in the West.

gold rush: ການຍົກຍ້າຍຂອງພວກຂຸດແຮ່ເປັນຈຳນວນຫລາຍເຂົ້າໄປສູ່ California, Colorado ແລະ Arizona ໃນປີ ໑໘໔໐, ໑໘໖໐, ໑໘໗໐ ເນື່ອງຈາກມີການຄົ້ນພົບຄຳໃນແຂວງນັ້ນ.

During the gold rush, many miners moved to California.

ghost town: ເປັນເມືອງທີ່ປະປ່ອຍຖິ້ມໄວ້ຈາກພວກຂຸດແຮ່ຫລັງຈາກທີ່ເຂົາເຈົ້າໄດ້ຍ້າຍໄປແຫ່ງອື່ນເພື່ອຊອກຫາຄຳຫລືໂລຫະທີ່ມີຄຸນຄ່າຢ່າງອື່ນ.

When the miners moved to new area, the towns they left behind were ghost town.

railroad terminal: ບ່ອນຢຸດຈຸດສຸດທ້າຍຂອງທາງລົດໄຟ

Ranchers moved their cattle to the railroad terminals in the Mid-West.

long drive: ໝາຍເຖິງການນຳເອົາຝູງສັດຈາກ Texas ໄປສູ່ທາງລົດໄຟທີ່ Kansas
ແລະ Nebraska ໃນປີພາຍຫລັງສົງຄາມກາງເມືອງ.

Walking the cattle from Texas to market was called the drive.

irrigation: ຊົລະປະທານ

crop rotation: ວິທີ່ໃຊ້ປູກແບບຫມູນວຽນ

New inventions, such as barbed wire, irrigation and crop rotation helped farmers become richer.

bonanza farmer: ພວກຊາວນາທີ່ໄດ້ຮັບຜົນການເພາະປູກດີທີ່ສຸດໃນເຂດດິນແດນໃໝ່.
ພວກຊາວນາຈຳພວກນີ້ຢູ່ທາງພາກເໜືອແລະໃນລັດ South Dakota.

The farmers who became wealthy were called bonanza farmers.

crop-lien farmer: ຊາວນາທີ່ຢືມເງິນຈາກພໍ່ຄ້າແລະເຈົ້າຂອງດິນເພື່ອຊື້ເອົາດິນແລະເຄື່ອງໃຊ້
ເຄື່ອງມືຕ່າງໆ. ເວລາເກັບກ່ຽວເຂົາເຈົ້າຕ້ອງໃຊ້ເງິນທີ່ຢືມນັ້ນຄືນ
ດ້ວຍເຄື່ອງປູກຂອງປົວຂອງຕົນ.

transcontinental lines: ເສັ້ນທາງລົດໄຟຜ່ານປະເທດ

The railroad companies built four transcontinental lines across the United States.

vertical organization: ໂຄງການທີ່ບໍລິສັດຄອບຄຸມທຸກຢ່າງທີ່ຈຳເປັນແກ່ການດຳເນີນງານ.

Andrew Carnegie used the vertical organization method of development to increase the size of his industry.

meat packing: ການຫຸ້ມຊີ້ນ

The meat packing industry grew in the Chicago, Illinois area.

union: ສະມາຄົມກັມມະກອນ

The labor unions were organized by workers in an effort to get better working conditions.

trust: ສະມາຄົມບໍລິສັດການຄ້າ

Wealthy industrialists such as Rockefeller and Carnegie used trusts to create a monopoly in the oil and steel industries.

monopoly: ການຜູກຂາດໃນດ້ານການຄ້າ

lockout: ການປະຕິເສດບໍ່ຮັບຈ້າງພະນັກງານຈາກນາຍຈ້າງ. ວິທີການນີ້ເຄີຍຖືກໃຊ້ເພື່ອທຳລາຍຫຼືເຮັດ
ການຈັດຕັ້ງຂອງສະມາຄົມກັມມະກອນອ່ອນລົງ.

blacklist: ບັນຊີຊື່ຂອງສະມາຊິກສະມາຄົມກັມມະກອນຊຶ່ງນອກຕໍ່ຕ້ານສະມາຄົມດັ່ງກ່າວຈັດໄວ້ເພື່ອໃຫ້ສະມາຊິກໄດ້ອ່ານ

The labor bosses tried to stop worker' strikes in three ways: the lockout, the blacklist, and the yellow dog contract.

the yellow dog contract: ຄຳສັນຍາລະຫວ່າງນາຍຈ້າງແລະລູກຈ້າງ. ໃນຄຳສັນຍານັ້ນ
ຜູ້ເປັນລູກຈ້າງແຈ້ງວ່າຈະບໍ່ເຂົ້າຮ່ວມກັບສະມາຄົມກັມມະກອນ.

violence: ຄວາມຮຸນແຮງ

There was often violence between striking workers and the maangement.

concern: ຄວາມເປັນຫ່ວງ

The Meat Inspection Act was created after consumers indicated concern over the quality of meat being sold at the markets.

consumer: ຜູ້ບໍລິໂພກ

READING

17.1. NEW ECONOMIC DEVELOPMENTS

17.1.1. The years between 1875 and 1900 were a time of great growth for American industry. The New England and Northern states, already industrial areas, continued to attract new factories and businesses. In addition, industry began to develop in the primarily rural areas of the South and the West.

17.1.2. The mining, cattle raising and farming industries which had dominated the West for almost a hundred years began to develop rapidly. Because of the California gold rush in 1849, many miners had moved to the West. The rich miners formed mining companies, which bought equipment, hired workers and helped establish many small towns. When the mining companies and the miners moved West, businessmen followed them in pursuit of trade. Many new roads and railroads were built in the Far West to transport raw materials and goods to both the miners and the businessmen.

17.1.3. The cattle raising industry began to develop during the Civil War when beef from Texas was used to feed the Southern Armies. After the war, the industry flourished when the ranchers found that cattle could be raised cheaply in Texas and sold for high prices in the North and the East. Since the railroads reached only to Omaha, Nebraska, the ranchers had to move the herds from Texas to the railroad terminals in the Midwest. This moving of the herds was called the long drive.

17.1.4. In addition to mining and cattle raising, farming also became a vital industry on the Great Plains. At first, farming in the West was not as easy as cattle raising. The soil was poor and dry. But farmers invented new methods, such as scientific machinery, irrigation and crop rotation, to cultivate this land. Some farmers, most particulary those who grew wheat in North and South Dakota, became successful and rich. They became known as the "bonanza farmers".

17.1.5. While mining, cattle raising and farming industries were developing in the West, the textile, steel and petroleum industries were begining to flourish in the South. Before the Civil War the South was a rural area which produced tobacco, rice, cotton and indigo. The South did not have an Industrial Revolution like the North. But the Civil War destroyed almost everything in the South. So, from 1870 to 1900, many things changed. The South, rich in resources such as coal and iron ore, began to develop these resources. The poor whites and the freed blacks made up a large labor force to work in the newly constructed textile, steel and petroleum factories. Birmingham, Alabama became the second largest steel city in the United States.

17.2. THE ORGANIZATION OF INDUSTRY AND LABOR

17.2.1. American industry grew very fast after the Civil War. In 1859 industrial profits were 2 million dollars, but by 1900 industry had made about 13 billion dollars, and American factories were producing more goods than factories in any other country in the world.

17.2.2. Rich natural resources, large work forces, and high tariffs helped American industries to grow. Rapid transportation was needed to transport new materials and goods to and from the factories. As a result, the railroad industry became one of the most rapidly growing industries. Four transcontinental lines crossed the country. The Federal

Government gave the railroad companies public land for the tracks. Steel was badly needed to make the rails.

17.2.3. As factories were built and industries grew, many industrial leaders became very wealthy. Andrew Carnegie, the founder of the U.S. Steel Corporation, became very rich. Carnegie used the **vertical organization** method to expand his corporation. By 1900 his company was producing one-fourth of the total world steel product. Another wealthy industrialist was John D. Rockefeller, the king of the oil industry. He was the leader of the Standard Oil Company. Like Carnegie, he used the vertical organizaton method to build up his industry. The Standard Oil Company grossed over two million dollars by selling oil in 1900. The same vertical growth was found in the food industry. The expanding cattle industry helped the **meat packing** industry to grow. Chicago and Kansas City became important **meat-packing** centers.

17.2.4. These industries continued to grow and their leaders continued to become wealthier because they formed the **trusts** to protect their businesses. Industrialists like Carnergie and Rockefeller bought up all the small companies which could not compete with their bigger ones. Buying up the small companies allowed the industries to create **monopolies**. A monopoly meant that a product was controlled by just one company or group. Standard Oil Company was one of these monopolies. It controlled the prices of oil and became so powerful that it could make demands in the U.S. Congress.

17.2.5. All of these industries needed large work forces to grow. But leaders took advantage of workers and did not treat them fairly. Workers worked long hours in poor conditions for little pay. In an effort to improve their situation, workers organized **unions**. The unions helped the workers to get better working conditions, shorter working hours, and better pay. From 1866 to 1890 there were three famous unions -- the National Labor Union (NLU), the Knights of Labor, and the American Federation of Labor (AFL). All of these unions helped the workers and their families improve their lives.

17.3. THE RESPONSE TO UNIONIZATION

17.3.1. When the unions were organized, the leaders of the industries wanted to stop them. They used **lockouts**, the **blacklist**, and **yellow-dog contracts** (see glossary) to break up the unions. These methods angered union workers so much that they often fought with factory guards or policemen. This violence, which caused so much bloodshed and so many deaths, attracted the attention of the government. In 1913 Congress set up the Department of Labor, which passed many laws to help the workers and to protect children who worked in factories.

17.3.2. The federal government also passed laws to protect the **consumer**. In 1887 the Interstate Commerce Commission Act was adopted. The Commission stopped all unfair railroad practices. The U.S. Congress passed the Meat Inspection Act and Pure Food and Drug Act. These two acts controlled the quality and the purity of the food and drugs that were produced by the factories.

EXERCISES

I. Word search puzzle:

Directions: Find and circle the words in the word search puzzle below. The words will be found vertically, horizontally, and diagonally. When you find a word, write it and then define it.

```
I N D U S T R I A L I Z A T I O N
R B X G O L D R U S H P M T V R A
R O X H U X X X M X R A O E E G B
I N L O N G D R I V E C N R R A C
G A X S I O X X N M M K O M T N D
A N P T O L X X I E R I P I I I E
T Z O T N D X X N A A N O N C Z F
I A R O T A T E G T F G L A A E G
O X C W O R L D W I D E Y L L X H
N X X N U T R I T I O N O S X X J
```

GOLDRUSH
GHOSTTOWN
LONG DRIVE
NUTRITION
MINING
WORLDWIDE
TERMINALS
IRRIGATION
VERTICAL
INDUSTRIALIZATION

ROTATE
GOLD
FARMER
UNION
CROP
MONOPOLY
PACKING
MEAT
ORGANIZE

II. Matching:

Match each word in column A with the explanation or definition in column B. Write the number of each answer in the space provided.

A

a. gold rush
b. long drive
c. bonanza farmers
d. lockout

B

1. the founder of the Standard Oil Company.
2. an agreement between employer and employee in which the worker states that he will not join the union.
3. the founder of the U.S. Steel Company.

____ e. blacklist

____ f. yellow-dog contract

____ g. Andrew Carnegie

____ h. John D. Rockefeller

4. the most successful farmer on the frontier.
5. the large movement of the miners into California, Colorado, and Arizona to get rich.
6. a term used to refer to the moving of herds from Texas to the railroad terminals in the North.
7. the refusal of an employer to give jobs to workers.
8. a list of known union members which is used by anti-union businessmen.

III. Map work

Color the map below and put the name of the Southern states, New England, the Great Plains, and the Dakotas.



IV. True or False

_____ 1. Mining, farming, and cattle raising were in New England.

_____ 2. The Gold Rush was in the Appalachian Mountains.

_____ 3. A bonanza farmer is one who works with the long drive.

_____ 4. Wheat was the most profitable crop in the Dakotas.

_____ 5. Barbed wire helped to protect the land.

_____ 6. Birmingham is a steel city in Alabama.

_____ 7. There were 4 transcontinental lines which across the country at the end of the 19th century.

_____ 8. The workers organized unions to protect the employers.

_____ 9. The employers used the blacklist, the lockout, and the yellow-dog contract to help the workers.

ບົດອ່ານ

໑໗.໑. ການພັດທະນາເສຖກິດອັນໃໝ່

໑໗.໑.໑. ສະຫະລັດອະເມລິກາໄດ້ກາຍເປັນປະເທດອຸດສາຫະກັມໃນລະຫວ່າງປີ ໑໘໗໕ ຫາ ໑໙໐໐. ໂຮງງານອຸດສາຫະກັມໄດ້ເກີດຂຶ້ນໃນລັດ New England ແລະໃນພາກຕາເວັນຕົກສ່ວນເໜືອເປັນຕົ້ນທຳອິດ. ພາກຕາເວັນຕົກແລະໃຕ້ກໍໄດ້ມີການພັດທະນາອັນວ່ອງໄວເຊັ່ນດຽວກັນ. ການຂຸດບໍ່ແຮ່ ການປູກຝັງແລະການລ້ຽງສັດມີຢູ່ທາງພາກຕາເວັນຕົກ. ສ່ວນທາງພາກໃຕ້ນັ້ນ ມີໂຮງງານຕ່ຳຜ້າ ໂຮງງານຫຼໍ່ເຫຼັກ ແລະໂຮງງານກັ່ນນ້ຳມັນເປັນສຳຄັນ.

໑໗.໑.໒. ການຂຸດບໍ່ແຮ່ແລະການລ້ຽງສັດເປັນກິຈການອັນສຳຄັນຊຶ່ງຄົງຄືຢູ່ໃນພາກຕາເວັນຕົກເປັນເວລາເກືອບຮ້ອຍປີ. ນັບຕັ້ງແຕ່ເວລາມີການຄົ້ນພົບແຮ່ຄຳໃນ California ພວກຂຸດບໍ່ແຮ່ຈຳນວນຫຼາຍໄດ້ຍ້າຍໄປຕັ້ງຖິ່ນຖານໃນພາກຕາເວັນຕົກ. ພວກຂຸດບໍ່ແຮ່ທີ່ຮ່ຳລວຍກໍໄດ້ຕັ້ງບໍຣິສັດຂຸດບໍ່ແຮ່ຂຶ້ນຫຼາຍບໍຣິສັດ. ເຂົາເຈົ້າມີທຶນພຽງພໍເພື່ອຊື້ເຄື່ອງອຸປກອນຕ່າງໆພ້ອມກັບຈ້າງພວກຄົນງານທັງຫຼາຍ. ເຂົາເຈົ້າເປັນຜູ້ຄວບຄຸມການຂຸດບໍ່ແຮ່ຕໍ່ໄປໃນແຖບນັ້ນ ແລະໄດ້ສ້າງຕັ້ງເມືອງນ້ອຍໆຂຶ້ນຫຼາຍແຫ່ງດ້ວຍກັນ. ເມື່ອເຂົາເຈົ້າບໍ່ສາມາດຄົ້ນຫາຄຳໄດ້ຕື່ມອີກ ເຂົາເຈົ້າກໍຍົກຍ້າຍໄປແຫ່ງອື່ນ. ເມືອງຕ່າງໆທີ່ເຂົາເຈົ້າປະຖິ້ມໄວ້ນັ້ນເອີ້ນວ່າ ghost towns. ຕົວຢ່າງ Denver ເປັນເມືອງນຶ່ງທີ່ພວກຂຸດບໍ່ແຮ່ໄດ້ປະຖິ້ມໄວ້ຊຶ່ງພາຍລຸນມາກໍເລີຍກາຍເປັນເມືອງໃຫຍ່ເມືອງນຶ່ງຂອງລັດ Colorado ໃນເວລາທີ່ບໍຣິສັດຂຸດແຮ່ທັງຫຼາຍຍ້າຍໄປທາງຕາເວັນຕົກນັ້ນພວກນັກທຸຣະກິດກໍໄດ້ຕິດຕາມໄປເພື່ອເຮັດການຄ້າ. ເຫດດັ່ງກ່າວໄດ້ພາໃຫ້ມີການສ້າງສາຖະໜົນຫົນທາງແລະທາງລົດໄຟຂຶ້ນຫຼາຍສາຍໃນພາກຕາເວັນຕົກໄກເພື່ອຄວາມເໝາະສົມແກ່ສະພາບການ.

໑໗.໑.໓. ໃນລະຫວ່າງສົງຄາມກາງເມືອງອາຫານສຳຫຼັບລ້ຽງກອງທັບຂອງພາກໃຕ້ນັ້ນໄດ້ແກ່ຊີ້ນທີ່ໄດ້ມາຈາກລັດ Texas ເປັນສ່ວນໃຫຍ່. ຫຼັງຈາກສົງຄາມ ພວກເຈົ້າຂອງທົ່ງນາທັງຫຼາຍຈຶ່ງເຫັນວ່າການລ້ຽງສັດໃນລັດ Texas ເປັນການລົງທຶນນ້ອຍແລະສາມາດສົ່ງຂາຍທາງພາກເໜືອແລະພາກຕາເວັນອອກດ້ວຍລາຄາສູງ. ເມື່ອທາງລົດໄຟຮອດແຕ່ພຽງເມືອງ Omaha ລັດ Nebraska ເທົ່ານັ້ນ ສັນພວກເຈົ້າຂອງທົ່ງນາຈຶ່ງຕ້ອງໄດ້ນຳເອົາຝູງສັດຈາກ Texas ໄປຂຶ້ນລົດໄຟຊຶ່ງຢູ່ທາງພາກເໜືອ. ການນຳເອົາຝູງສັດດັ່ງກ່າວໄປສູ່ສະຖານີລົດໄຟເອີ້ນວ່າ Long drive. ການເຄື່ອນເອົາຝູງສັດໃນຈຳນວນໄດ້ຢຸດຕິລົງຕອນທີ່ທາງລົດໄຟໄດ້ໄປເຖິງບໍຣິເວນລ້ຽງສັດດັ່ງກ່າວ. ດ້ວຍເຫດນີ້ຈຶ່ງມີການປະດິດລວດໜາມໝາກຈັບຂຶ້ນ

ເພື່ອປ້ອງກັນຊື້ສວນແລະຕັ້ງໄຮ່ຕັ້ງນາໃນທ້ອງທົ່ງທີ່ເອີ້ນວ່າ Great Plains. ການລ້ຽງສັດເປັນອຸດສະຫະກັມປະເພດນຶ່ງທີ່ສຳຄັນທີ່ສຸດໃນພາກຕາເວັນຕົກສ່ວນກາງ (Mid-West).

໑໗.໑.໔. ນອກຈາກການຂຸດບໍ່ແຮ່ແລະການລ້ຽງສັດແລ້ວ ການປູກຝັງກໍເປັນກິຈການທີ່ມີຄວາມສຳຄັນຕໍ່ຊີວິດການເປັນຢູ່ໃນ Great Plainsເຊັ່ນດຽວກັນ. ໃນຂັ້ນຕົ້ນການປູກຝັງໃນພາກຕາເວັນຕົກບໍ່ສະດວກເໝືອນກັບກັບການລ້ຽງສັດ ເນື່ອງຈາກດິນບໍ່ດີແລະຂາດແຄນນ້ຳ. ສະນັ້ນພວກຊາວນາຈຶ່ງຈຳເປັນຕ້ອງປະດິດວິທີປູກຝັງສຳລັບທ້ອງຖິ່ນນັ້ນຂຶ້ນເຊັ່ນການຂຸດຊົລປະທານແລະໃຊ້ພືດປູກແບບຊຸມນອຣນ. ຊາວນາບາງຕົນກໍໄດ້ຮັບຜົນດີແລະລ້ຳລວຍ. ພວກທີ່ລ້ຳລວຍນີ້ເອີ້ນວ່າ bonanza farmers. ພືດທີ່ມີຄຸນຄ່າແລະນຳຜົນກຳໄຮໄດ້ດີໃນພາກເໜືອແລະໃນ South Dakota ນັ້ນແມ່ນເຂົ້າບະເລ.

໑໗.໑.໕. ຈາກປີ ໑໘໗໗ ຫາ ໑໙໐໐ ຝ້າຍແລະຢາສູບເປັນພືດຜົນທີ່ສຳຄັນໃນພາກໃຕ້. ພວກຊາວນາທີ່ຮັ່ງມີໄດ້ພາກັນຊື້ເອົາສວນປູກຝັງທັງໝົດແລະໄດ້ຕັ້ງຣະບົບການເປັນເຈົ້າຂອງດິນອັນໃໝ່. ພວກຊາວຜິວຂາວແລະຜິວດຳທີ່ທຸກຈົນແລະບໍ່ສາມາດຊື້ດິນໄດ້ກໍຕ້ອງເຮັດວຽກໃຫ້ແກ່ພວກລ້ຳລວຍໃນປະເພດ Share-crop farmers ຫຼື Crop-lien farmersພວກ Share-crop farnmers ນີ້ເຊົ່າທີ່ດິນແລະຈ່າຍຄ່າເຊົ່າດ້ວຍເຄື່ອງປູກຂອງຝັງທີ່ເກັບກ່ຽວໄດ້ໃນແຕ່ລະປີ. ສຳລັບພວກ VCrop-lien farmers ນັ້ນຢືມເງິນມາຈາກພໍ່ຄ້າຊາວຂາວ ຫຼື ຈາກເຈົ້າຂອງທີ່ດິນເພື່ອເອົາມາຊື້ດິນ ເຄື່ອງມື ແລະແນວເຄື່ອງປູກຕ່າງໆ. ຫຼັງຈາກການເກັບກ່ຽວພວກ Crop-lien farmers ຕ້ອງມອບເຄື່ອງປູກຂອງຝັງຂອງຕົນເກືອບທັງໝົດໃຫ້ແກ່ເຈົ້າຂອງເງິນແທນເງິນທີ່ຢືມມາ.

໑໗.໑.໖. ສົງຄາມກາງເມືອງໄດ້ທຳລາຍທຸກຢ່າງໃນພາກໃຕ້. ໃນລະຫວ່າງສົງຄາມນັ້ນ ໂຮງງານອຸດສາຫະກັມບໍ່ມີຄວາມສຳຄັນເລີຍ. ແຕ່ວ່າຈາກປີ ໑໘໗໐ ຫາ ໑໙໐໐ ນັ້ນໄດ້ມີຫຼາຍຢ່າງປ່ຽນແປງ. ພາກໃຕ້ມັ່ງຄັ່ງສົມບູນໄປດ້ວຍຊັພຍາກອນຕ່າງໆເຊັ່ນ ຖ່ານຫີນ ແລະ ທາດເຫຼັກດັ່ງນີ້ເປັນຕົ້ນ. ຄົນງານຕາມໂຮງງານຫັຕຖກັມຕ່າງໆແມ່ນພວກຄົນຜິວຂາວທີ່ທຸກຍາກແລະພວກຜິວດຳທີ່ຖືກປົດປ່ອຍເປັນອິສຣະເປັນສ່ວນໃຫຍ່. ເມືອງ Birmingham ໃນຣັຖ Alabama ໄດ້ກາຍເປັນສູນກາງຂອງໂຮງງານຫຼໍ່ເຫຼັກທີ່ໃຫຍ່ທີ່ສຸດອັນດັບສອງໃນສະຫະຣັຖອະເມຣິກາ.

໑໗.໒. ການຈັດຕັ້ງໂຮງງານອຸດສາຫະກັມ ແລະ ກັມມະກອນ

໑໗.໒.໑. ຫຼັງຈາກສົງຄາມກາງເມືອງ ໂຮງງານອຸດສາຫະກັມຂອງສະຫະຣັຖອະເມຣິກາໄດ້ຈເຣີນເຕີບໂຕຂຶ້ນໄວທີ່ສຸດ. ໃນປີ ໑໘໕໙ ໂຮງງານອຸດສາຫະກັມດັ່ງກ່າວທຳເງິນໄດ້ ໒ ພັນລ້ານໂດລາ. ຕໍ່ມາໃນປີ ໑໙໐໐ ທຳເງິນໄດ້ ໑໓ ພັນລ້ານໂດລາ ແລະໄດ້ກາຍເປັນໂຮງງານອຸດສາຫະກັມອັນດັບນຶ່ງໃນໂລກ.

໑໗.໒.໒. ສິ່ງທີ່ພາໃຫ້ອຸດສາຫະກັມໃນສະຫະຣັຖອະເມຣິກາຈເຣີນເຕີບໂຕກໍ່ຄື ຄວາມອຸດົມສົມບູນຂອງຊັພຍາກອນທັມຊາດ ຈຳນວນກັມມະກອນອັນມະຫາສານ ແລະພາສີສິນຄ້າຂາເຂົ້າອັນສູງນັ້ນເອງ. ການສ້າງສາທາງລົດໄຟເປັນອຸດສາຫະກັມຢ່າງນຶ່ງທີ່ຂຍາຍຕົວໄວທີ່ສຸດ. ທາງລົດໄຟທີ່ຕັດຜ່ານປະເທດມີຢູ່ສີ່ສາຍດ້ວຍກັນ. ຣັຖບານກາງໄດ້ມອບທີ່ດິນຫຼວງໃຫ້ແກ່ບໍຣິສັດລົດໄຟເພື່ອສ້າງທາງ. ໃນເວລານັ້ນເຫຼັກໄດ້ຂາດເຂີນທີ່ສຸດສຳຫຼັບການສ້າງສາລາງລົດໄຟ.

໑໗.໒.໓. ຜູ້ກໍ່ຕັ້ງບໍຣິສັດຫຼໍ່ເຫຼັກຄັ້ງທຳອິດໃນສາຫະຣັຖອະເມຣິກາແມ່ນທ່ານ Andrew Carnegie. ທ່ານ Carnegie ໄດ້ໃຊ້ວິທີ Vertical organizationໃນການຕັ້ງບໍຣິສັດຂອງທ່ານ. ບໍຣິສັດໄດ້ຜລິດ ນຶ່ງສ່ວນສີ່ຂອງຈຳນວນການຜລິດເຫຼັກທັງໝົດໃນໂລກ. ທ່ານ John D. Rockefeller ແມ່ນຣາຊາແຫ່ງບໍຣິສັດຜລິດນ້ຳມັນ. ທ່ານເປັນຫົວໜ້າຂອງບໍຣິສັດ Standard Oil Company. ທ່ານເອງກໍ່ມັກໃຊ້ວິທີ Vertical organizationເໝືອນກັນ. ໃນປີ ໑໙໐໐ ບໍຣິສັດ Standard Oil Company ຂາຍນ້ຳມັນໄດ້ກ່ວາ ສອງລ້ານໂດລາ. ໂຮງງານຜລິດອາຫານກໍ່ມີຄວາມກ້າວໜ້າໄປໃນທຳນອງດຽວກັນ. ທຸຣະກິດການຂ້າສັດໄດ້ເຮັດໃຫ້ໂຮງງານທີ່ຈຸນຈເຣີນງອກງາມຂຶ້ນ. ສູນກາງຂອງໂຮງງານທີ່ຈຸນທີ່ສຳຄັນມີສອງແຫ່ງຄືເມືອງ Chicago ແລະເມືອງ Kansas City. ເມື່ອຄວາມຈເຣີນກ້າວໜ້າໂຮງງານອຸດສາຫະກັມຕ່າງໆເຫຼົ່ານີ້ມີຄວາມຕ້ອງການໃຊ້ຄົນງານເປັນຈຳນວນຫຼາຍທີ່ສຸດ. ພວກຄົນທັງຫຼາຍບໍ່ໄດ້ຮັບການດູແລເບິ່ງແຍງ ຢ່າງເປັນທັມເພາະວ່າເຂົາເຈົ້າຕ້ອງໄດ້ຢູ່ເຮັດວຽກດົນແລະໄດ້ຮັບຄ່າຈ້າງຕ່ຳ.

໑໗.໒.໔. ພວກບໍຣິສັດໂຮງງານອຸດສາຫະກັມຕ່າງໆໄດ້ຕັ້ງສະມາຄົມຂຶ້ນ (trusts)ເພື່ອປ້ອງກັນທຸຣະກິດການຄ້າຂອງເຂົາເຈົ້າ. ເຂົາເຈົ້າໄດ້ຊື້ເອົາບໍຣິສັດເລັກນ້ອຍທີ່ບໍ່ສາມາດແຂ່ງຂັນກັບບໍຣິສັດທີ່ໃຫຍ່ກວ່ານັ້ນທັງໝົດເພື່ອເຂົາເຈົ້າຈະໄດ້ການຜູກຂາດໃນການຄ້າຕ່າງໆ. ບໍຣິສັດທີ່ໄດ້ການຜູກຂາດເຊັ່ນບໍຣິສັດບວງກັບບໍຣິສັດ

Standard Oil Companyທີ່ຄວບຄຸມລາຄາຂອງນ້ຳມັນແລະນອກຈາກນັ້ນກໍຍັງຄອບຄຸມສະພາຂອງສະຫະຣັຖອະເມຣິກາອີກດ້ວຍ.

໑໗.໒.໕. ເພື່ອປ້ອງກັນວິທີການຂອງເຈົ້າຈ້າງ ພວກພະນັກງານກັມມະກອນກໍໄດ້ຈັດຕັ້ງສະມາຄົມຂອງເຂົາເຈົ້າເໝືອນກັນ. ສະມາຄົມດັ່ງກ່າວຊ່ວຍໃຫ້ພວກກັມມະກອນໄດ້ຮັບການເບິ່ງແຍງກ່ຽວກັບສະພາບການເຮັດວຽກດີຂຶ້ນ ເວລາເຮັດວຽກສັ້ນລົງ ແລະໄດ້ຄ່າຈ້າງຫຼາຍຂຶ້ນ. ຈາກປີ ໑໘໖໖ ຫາ ໑໘໙໐ ສະມາຄົມກັມມະກອນທີ່ມີຊື່ສຽງມີຢູ່ສາມສະມາຄົມດ້ວຍກັນຄື The National Labor Union (NLU), the knights of labor ແລະ The American Federation of Labor (AFL) ສະມາຄົມເຫຼົ່ານີ້ໄດ້ຊ່ວຍໃຫ້ພວກກັມມະກອນທັງຄອບຄົວຂອງເຂົາເຈົ້າໄດ້ຮັບຊີວິດການເປັນຢູ່ອັນດີ.

໑໗.໓. ຜົນສະທ້ອນຂອງອຸດສາຫະກັມ

໑໗.໓.໑. ໃນເວລາທີ່ສະມາຄົມກັມມະກອນຈັດຕັ້ງຂຶ້ນມາ ພວກຫົວໜ້າຂອງໂຮງງານອຸດສາຫະກັມຫຼາຍບໍ່ເຫັນດີນຳ ດັ່ງນັ້ນເຂົາເຈົ້າຈຶ່ງໃຊ້ວິທີການຕ່າງໆເຊັ່ນ ປະຕິເສດບໍ່ຮັບເອົາພະນັກງານ (Lockout) ເຮັດບັນຊີດຳ (blacklist) ແລະໃຫ້ພະນັກງານສັນຍາວ່າຈະບໍ່ເຂົ້າຮ່ວມສະມາຄົມກັມມະກອນ (The yellow dog contract) ດັ່ງນີ້ເປັນຕົ້ນ ເພື່ອທັບມ້າງສະມາຄົມກັມມະກອນເຫຼົ່ານັ້ນ ຈຶ່ງເປັນເຫດໃຫ້ພວກພະນັກງານທີ່ຢູ່ໃນສະມາຄົມດັ່ງກ່າວໄດ້ຮັບການກະທົບກະເທືອນໃຈເປັນທີ່ສຸດ. ໃນບາງຄັ້ງພວກພະນັກງານກໍໄດ້ຕໍ່ສູ້ກັນກັບເຈົ້າໜ້າທີ່ຮັກສາໂຮງງານ ແລະໃນບາງຄັ້ງກໍ່ຕໍ່ສູ້ກັບຕຳຣວດ. ການປະທະກັນລົງໄດ້ພາໃຫ້ມີການເລືອດຕົກຢາງອອກ ຫຼື ມີການຕາຍ ແລະກໍ່ເດືອດຮ້ອນໄປເຖິງຣັຖບານ. ໃນປີ ໑໙໑໓ ສະພາໄດ້ຕັ້ງກະຊວງແຮງງານຂຶ້ນ (The Department of labor) ພ້ອມກັບໄດ້ອອກກົດໝາຍຫຼາຍຢ່າງເພື່ອຊ່ວຍພວກຄົນງານກັມມະກອນ. ນອກຈາກນັ້ນຣັຖບານເອງກໍໄດ້ອອກກົດໝາຍເພື່ອປ້ອງກັນຄົນງານທີ່ຢູ່ໃນວັຍເດັກນ້ອຍອີກ.

໑໗.໓.໒. ສຳຫຼັບຜູ້ບໍຣິໂພກຫຼືຜູ້ຈັບຈ່າຍຊື້ເຄື່ອງຂອງທີ່ຜລິດຈາກໂຮງງານນັ້ນ ຣັຖບານກໍໄດ້ອອກກົດໝາຍເພື່ອປ້ອງກັນເຂົາເຈົ້າເໝືອນກັນ. ໃນປີ ໑໘໘໗ ໄດ້ມີດຳຣັດກ່ຽວກັບຄະນະກັມມະການການຄ້າລະຫວ່າງຣັຖອອກມາ (The Interstate Commerce Commission Act) ຄະນະກັມມະການດັ່ງກ່າວໄດ້ຢັບຢັ້ງສິ່ງທີ່ບໍ່ເປັນທັມທຸກຢ່າງຂອງບໍຣິສັດຣົດໄຟທີ່ໄດ້ກະທຳລົງໄປ. ປະທານາທິບໍດີ Theodore Roosevelt ໄດ້ຊື່ເປັນປະທານາທິບໍດີຄົນຫົວກ້າວໜ້າ. ທ່ານຕ້ອງການຈັດໃຫ້ກິຈການຄ້າທັງໝົດເຂົ້າຢູ່ໃນຣະບຽບ.

ໃນລະຫວ່າງທີ່ທ່ານຍັງດຳລົງຕຳແໜ່ງເປັນປະທານາທິບໍດີຢູ່ນັ້ນ ສະພາໄດ້ອອກດຳລັດກ່ຽວກັບການກວດຊີ້ນ (Meat Inspection Act) ແລະດຳລັດກ່ຽວກັບອາຫານບໍລິສຸດແລະຢາປົວພະຍາດ (Pure Food and Drug Act) ດຳລັດທັງສອງນີ້ໃຊ້ສຳລັບຄວບຄຸມ ຄຸນພາບແລະຄວາມບໍລິສຸດຂອງອາຫານແລະຢາປົວພະຍາດທີ່ຜະລິດຈາກໂຮງງານຕ່າງໆ. ຜູ້ບໍລິໂພກທັງຫຼາຍມີຄວາມພໍໃຈກັບດຳລັດທັງສອງນີ້ເປັນທີ່ສຸດ ດັ່ງນັ້ນບໍລິສັດການຄ້າໃນທຸກມື້ນີ້ຈຶ່ງປະຕິບັດໃຫ້ສອດຄ່ອງກັບດຳລັດທີ່ກ່າວມານັ້ນແລ້ວ.

ບົດຝຶກຫັດ

໑. ຊອກຫາສັບ :

I N D U S T R I A L I Z A T I O N
R B X G O L D R U S H P M T V R A
R O X H U X X X M X R A O E E G B
I N L O N G D R I V E C N R R A C
G A X S I O X X N M M K O M T N D
A N P T O L X X I E R I P I I I E
T Z O T N D X X N A A N O N C Z F
I A R O T A T E G T F G L A A E G
O X C W O R L D W I D E Y L L X H
N X X N U T R I T I O N O S X X J

GOLDRUSH
GHOSTTOWN
LONG DRIVE
NUTRITION
MINING
WORLDWIDE
TERMINALS
IRRIGATION
VERTICAL
INDUSTRIALIZATION

ROTATE
GOLD
FARMER
UNION
CROP
MONOPOLY
PACKING
MEAT
ORGANIZE

໔. ການປະກອບສັບແລະຄຳອະທິບາຍໃຫ້ຖືກຕ້ອງກັນ : ຈົ່ງຈັດເອົາແຕ່ລະສັບຄຳເວົ້າໃນໝວດ (ກ) ໃຫ້ຖືກກັບຄຳອະທິບາຍທີ່ມີໃນໝວດ (ຂ). ຈົ່ງຂຽນຄຳຕອບຈົ່ງເປັນຕົວເລກໃສ່ຊ່ອງວ່າງທີ່ປະໄວ້ນັ້ນ ສຳລັບຄຳຕອບທຸກຄຳ.

ໝວດ (ກ)	ໝວດ (ຂ)
(ກ) gold rush	(໑) ຜູ້ກໍ່ຕັ້ງບໍລິສັດ
(ຂ) ghost town	(໔) ຄຳສັນຍາລະຫວ່າງນາຍຈ້າງແລະລູກຈ້າງ. ໃນຄຳສັນຍານັ້ນຜູ້ເປັນລູກຈ້າງແຈ້ງວ່າຈະບໍ່ເຂົ້າຮ່ວມກັບສະມາຄົມກັມມະກອນ.
(ຄ) long drive	(໓) ຜູ້ກໍ່ຕັ້ງບໍລິສັດຫຼໍ່ເຫຼັກ
(ງ) bonanza farmers	(໘) ຊາວນາຜູ້ທີ່ໄດ້ຮັບຜົນທີ່ສຸດຈາກການປູກຝັງໃນພາກຕາເວັນຕົກ.
(ຈ) lockout	(໕) ເມືອງທີ່ພວກຂຸດບໍ່ແຮ່ປະຖິ້ມໄວ້
(ສ) black list	(໖) ການຍົກຍ້າຍຂອງພວກຂຸດບໍ່ແຮ່ເປັນຈຳນວນຫຼາຍ ເຂົ້າສູ່ ເພື່ອສ້າງຄວາມຮ່ຳລວຍ.
(ຊ) yellow dog contract	(໗) ໝາຍເຖິງການນຳເອົາຝູງສັດຈາກໄປຫາທາງລົດໄຟໃນພາກເໜືອ.
(ຍ) Andrew Carnegie	(໒) ຊາວນາຜູ້ທີ່ມອບເຄື່ອງປູກຂອງຝັງບາງສ່ວນໃຫ້ແກ່ເຈົ້າຂອງດິນແທນຄ່າຈ່າຍ.
(ດ) John D.Rockefeller	(໙) ການປະຕິເສດບໍ່ຮັບຈ້າງພະນັກງານຈາກນາຍຈ້າງ
(ຕ) share-crop farmer	(໑໐) ບັນຊີລາຍຊື່ຂອງສະມາຊິກສະມາຄົມກັມມະກອນໃຊ້ໂດຍພວກນັກການຄ້າທີ່ຕ້ານສະມາຄົມກັມມະກອນ.

ຄ. ຫັດໃສ່ແຜນທີ່ :

ຈົ່ງໃສ່ສີແຜນທີ່ຂ້າງລຸ່ມນີ້ ຫລັງໃຫ້ໃສ່ຊື່ພາກໃຕ້, New England, the Great Palains ແລະ the Dakotas.



________໑. ການຂຸດບໍ່ແຮ່ ການປູກຝັງ ແລະການລ້ຽງສັດນັ້ນຢູ່ໃນລັດ New England.

________໒. The Gold Rush ເກີດຂຶ້ນທີ່ Appalachians Mountains.

________໓. The ghost town ແມ່ນເມືອງນ້ອຍຊຶ່ງມີຮ້ານຄ້າຈຳນວນຫລາຍແລະພວກຂຸດບໍ່ແຮ່ຢູ່ກັນພວກທີ.

________໔. ຊາວນາທີ່ໄດ້ຮັບຜົນຈາກການປູກຝັງຫລາຍທີ່ສຸດຊື່ພວກ bonanza farmers ນັ້ນ ປະກອບອາຊີບດ້ວຍການນຳເອົາງົວສັດຈາກ Texas ໄປສູ່ທາງທິດໄປໃນພາກເໜືອ.

________໕. ເຂົ້າບະເລເປັນພືດທີ່ໃຫ້ຜົນກຳໄລໃນລັດ Dakota ທັງເໜືອແລະໃຕ້.

__________໖. ລອດສມານສມາກຈັບຊ່ອຍປ້ອງກັນທີ່ດິນ.

__________໗. Birmingham ເປັນເມືອງໂຮງງານຫຼໍ່ເຫຼັກໃນຣັຖ Alabama

__________໘. ໃນທ້າຍຂອງສັດຕວັດທີ ໑໙ ໄດ້ມີເສັ້ນທາງລົດໄຟຜ່ານປະເທດດ້ວຍກັນສີ່ເສັ້ນ.

__________໙. ພວກພະນັກງານຈັດຕັ້ງສະມາຄົມກັມມະກອນຂຶ້ນເພື່ອປ້ອງກັນນາຍຈ້າງ.

__________໑໐. ພວກນາຍຈ້າງໃຊ້ Blacklist, lockout ແລະ yellow dog contract ເພື່ອຊ່ອຍພວກຄົນງານ.

ຫມວດ ໔ : ການປ່ຽນແປງຂອງຊາດ

ພາກ ໑໗ : ການເລີ່ມຕົ້ນຂອງສະຫະລັດອະເມລິກາທັນສະໄໝ

ສັບໃໝ່ :

competition: ການແຂ່ງຂັນ

There was increasing competition between the Republican and Democratic parties.

industrialist: ເຈົ້າຂອງໂຮງງານອຸດສາຫະກັມ

The Republican Party was an alliance of industrialists from the Northeast and wealthy farmers from the Mid-West.

integrity: ຄວາມຊື່ສັດ

Republicans were concerned about the integrity of the Union.

spoils system: ລະບົບການປົກຄອງທີ່ເຊື່ອມໂຊມ

The spoils system appeared during Grant's administration.

irresponsible: ບໍ່ເອົາຄວາມຮັບຜິດຊອບ

merit system: ລະບົບຂຶ້ນເງິນເດືອນຫຼືເລື່ອນຊັ້ນໂດຍອີງໃສ່ຄຸນງາມຄວາມດີຂອງພະນັກງານ.

scholar; ນັກສຶກສາ

The journalist and scholars became reformers and worked to replace the spoils system with a merit system.

regardless: ບໍ່ຫ່ວງກັນ

The merit system said a civil servant should selected because of his ability, regardless of his political views.

reformer: ນັກປະຕິຮູບ

monetary standard: ມາດຕະຖານຂອງເງິນຕຣາ

The major issue of the 1890's was the battle over the monetary standard.

unemployment: ການວ່າງງານ

High tariff would help ease unemployment.

manipulate: ການຊັກຈູງ

Rich bankers used their money and power to manipulate Congressmen.

banker: ຫົວໜ້າທະນາຄານ

currency circulation: ການໝູນວຽນຂອງເງິນຕຣາ

Workers favored great currency circulation.

debtor: ຜູ້ຕິດໜີ້ ຫຼື ລູກໜີ້

Debtors wanted cheap money to pay their debts.

gold standard: ມາດຕະຖານຂອງຄຳ

Industrialists and businessmen favored the gold standard.

world power: ອຳນາດຣະດັບໂລກ

By 1900 the U.S. had become a world power.

target: ເປົ້າໝາຍ

The Hawaiian Islands became a target of the U.S. Navy in order to open a seaway to China and the Far East.

expansionists: ຜູ້ລຸກລາມ

Expansionist favored an open door policy for trade with China.

READING

18.1. THE PERIOD OF POLITICAL COMPETITION AND CORRUPTION

18.1.1. Between the Civil War and 1900, the United States of America changed from an agricultural into an industrial nation. As the economy grew and prospered, competition increased between the two major political parties: the Republican Party and the Democratic Party.

18.1.2. The Republican Party was basically an alliance between two groups: the industrialists in the Northeast and the wealthy farmers in the Midwest. Because the Republicans were concerned about the integrity of the Union and the freedom of the slaves, they had the support of many Northerners and the freedmen in the South.

18.1.3. Like the Republican Party, the Democratic Party was an alliance of two diverse groups: the wealthy Southerners who were against the abolition of slavery and the poor factory workers and immigrants who lived in the Northeast. The large number of workers received no benefits from the Republican Party which favored the wealthy industrialists, so they looked to the Democratic Party and organized labor unions for help.

18.1.4. After the Civil War, the Republicans controlled the U.S. Congress and the presidency while the Democrats controlled the governments of many states. Under President Grant's administration, corruption spread nationwide and a spoils system appeared. Many unqualified persons who had been faithful party supporters were placed in government jobs. This resulted in a government that was quickly becoming **inefficient, irresponsible,** and corrupt.

18.1.5. However, there were many honest Democrats and Republicans who opposed the spoils system and wanted to replace it with a **merit system.** In a merit system, officials selected for government jobs must be the best qualified people, regardless of their political views or party services. Of all the people who favored the merit system, the journalists and **scholars** were the most outspoken. They became the **reformers** and used newspapers and magazines to criticize the evils of the spoils system and to obtain support from honest people. They demanded action from Congress. In 1883, Congress passed the Pendleton Act. This act set up a Civil Service Commission which organized an examination to test the fitness of applicants for public service. Under this act only 14,000 of the 100,000 government workers were given civil service positions.

18.2. THE PROGRESSIVE MOVEMENTS

18.2.1. Besides working to eliminate the spoils system, these two parties also addressed many economic issues. The most important issues were the tariff, business regulation, and the **monetary standard.**

18.2.2. The Democrats and the Republicans took opposite stands on the tariff issue. Most of the active Democrats lived in the South and were farmers. They favored low tariffs which would enable them to buy cheaper goods and tools from foreign countries for their farms and plantations. The Republicans, many of whom were industrialists, wanted to levy high tariffs on imported goods. A high tariff was the most effective means to stop foreign goods from flooding the country, to ease **unemployment**, and to keep the economy growing.

18.2.3. Members of both parties were becoming increasingly concerned about the issue of business regulation. The Constitution had given Congress the power to regulate commerce among states. However, it was a very difficult task to regulate many of the interstate business activities. The railroad companies, for example,were owned and run by the strongest and wealthiest groups in the country. These powerful groups were able to **manipulate** Senators and, thereby, gain support in Congress. The small businessmen became worried that trusts and monopolies would never be eliminated. They urged the reformers in Congress to pass laws to regulate commerce between the states. In 1877, Congress responded by passing the Interstate Commerce Act (ICA). This act set up an Interstate Commerce Commission (ICC) to regulate business operations, services and rates of interstate carriers. In the beginning, the commission was not very powerful and people still felt that the government was not doing enough to stop the growth of trusts and monopolies. So, in 1890, Congress passed the Sherman Antitrust Act. Although the act was designed to stop the rise of monopolies, it was so unclear that it had little effect and the monopolies continued to grow.

18.2.4. Another issue in the 1890's was the battle over the monetary standard. Every group had its own idea of what the monetary standard should be. The industrialists, bankers, and businessmen favored the gold system. They wanted to limit currency circulation and thereby protect the prices of their products and the interests of their loans. The workers favored both gold and silver as the monetary standard. They demanded that the government increase the amount of currency circulation based on silver and gold. The farmers and the other debtors wanted "cheap money" with which to pay their debts. By cheap money, they meant paper money that was not backed by gold and silver. Industrialists, bankers and businessmen used their money and power to defeat the supporters of the poor farmers and debtors in Congress and in the 1896 presidential election, William McKinley, who was regarded as the leader of those groups who favored the gold standard, was elected President, and in 1897 gold was officially adopted as the standard of currency.

18.3. THE NATION BECOMES A WORLD POWER

18.3.1. As American industry continued to grow, the United States found that it needed foreign markets in which to sell its products. Both businessmen and military leaders supported territorial expansion by seeking new markets and looking for places to build new naval bases. America quickly began to gain new lands. In 1878, the U.S. built a naval base in Pago Pago, Samoa Islands. The British and German governments protested. They sent battle ships to the area, but Great Britain soon withdrew. The United States and Germany divided the islands between them.

18.3.2. The Hawaiian Islands were another target of the U.S. Navy Department and American businessmen. If the U.S. Navy controlled these islands, it could easily open a new seaway to China and the Far East. In addition, American businessmen had invested heavily in the sugar plantations in Hawaii during 1880's. In 1890, Queen LiLiuokalani became ruler of the islands. She wanted to decrease the power of Americans in the islands. To protect their interests, American residents planned a revolution. In 1898, the Hawaiian Islands were annexed to the U.S. after a successful revolution against the Queen was carried out by American residents with the support of the U.S. minister to Hawaii.

18.3.3. The next target was China. For years, China had been forced to sign treaties with European nations to give them trading rights in China. American businessmen also wanted to have a share of the Chinese market. The U.S. government proposed the "open door policy". This policy provided equal trading rights in China to all nations.

18.3.4. The American expansionists were worried about the presence of Spain in Cuba and in the Caribbean Islands. For many years, the Cubans had been fighting against Spain for their independence. President McKinley did not want to interfere in Cuban affairs but there were many Americans living in Havana at that time and, to protect their lives, the U.S. Government sent the battleship, Maine, to Havana. The ship was blown up in the harbor and 260 American sailors were killed. President McKinley was under heavy public pressure to act. He asked Congress to declare war on Spain and Congress agreed. The war between the U.S. and Spain did not take place only in the Caribbean Sea but also in the Philippine Islands. The war lasted only a few months. Spain lost the war and had to cede Puerto Rico, Guam Island, and the Philippine Islands to the United States. Cuba became an independent nation. By 1900 the United States had become a major world power. The growth of industry and the expansion of commerce had caused the nation, which had previously favored a policy of isolation and neutrality, to seek the acquisition of overseas land and territories as markets for its manufactured products.

EXERCISES

I. **Word search puzzle:**

Directions: Find and circle the words in the word puzzle below. The words will be found vertically, horizontally, and diagonally. When you find a word in the puzzle, write it and then define it.

COMPETITION
CORRUPT
EXPANSIONIST
ROAD
SEAWAY
WORLD POWER
MERIT SYSTEM
STANDARD
JOURNALIST
MONETARY
EXPLOIT
CONGRESS
OPEN DOOR
INTEGRITY
BANKER
FACTORY
FARMER
DEMOCRATS
REFORMER
EVIL
CURRENCY
SCHOLAR
GOLD
TARGET

C O M P E T I T I O N T A R G E T W

J D O S X M O T C F A R M E R O W O

O E N T P C O R R U P T O F C P O R

U M E A A C O N G R E S S O O E R L

R O T N N F A C T O R Y N R N N O D

N C A D S E X P L O I T I M G D W P

A R R A I R O A D E V I L E R O O O

L A Y R O L S E A W A Y U R E O R W

I T O D N C U R R E N C Y O S R T E

S S N B I N T E G R I T Y R S U H R

T E O M S C H O L A R T G O L D S A

M E R I T S Y S T E M B A N K E R T

II. Matching Match each word in column A with the explanation or definition in column B. Write the number of each answer in the space provided.

	A	B
_____	a. monopoly	1. a policy first suggested by U.S. in 1889 which declared that all nations should have equal trading rights in China.
_____	b. civil service	2. the practice of giving government jobs in return for political support.
_____	c. reformer	3. having to do with improvement, moving forward.
_____	d. immigrant	4. public jobs in federal, state, and local governments awarded on the basis of merit.
_____	e. open door policy	5. a person from one country who enters another country to become a permanent resident.
_____	f. spoils system	6. one who wants to improve conditions.
_____	g. progressive	7. control of an industry or the supply of an item by one group or company.

III. True or False

Read each statement. Put a T next to each statement if it is true. Put a F in that space if it is false.

____ 1. The two main U.S. political parties are the Republican Party and the Democratic Party.

____ 2. The Democratic Party was very strong in the South and in certain areas in the Northeast.

____ 3. Under President Grant's administration, corruption did not spread.

____ 4. The reformers were the people who favored the spoils system.

____ 5. The Democrats favored high tariffs to protect their farms and plantation products.

____ 6. There was a big fight between the U.S. Navy and the British Navy in the Samoa Islands.

____ 7. In 1890, Queen LiLiuokalani became an industrialist in Hawaii.

____ 8. The open door policy limits Chinese immigration to the U.S. each year.

____ 9. Cuba was annexed to the U.S. at a meeting between the U.S. Congress and the President of Cuba.

____ 10. Puerto Rico was colony of Japan during 1889.

IV. Fill in the blanks. Complete each statement by writing the correct word or group of words in the blanks: political life, economic life, integrity, spoils system, merit system, eliminate, manipulate, monopolies, currency circulation, cheap money, the open door policy.

1. There were many changes in the ________ as well as __________ of the nation.

2. The Republicans were concerned about the _________ of the Union and the freedom of the slaves.

3. Under President Grant's administration a corrupt system expanded nationwide and a ______________ appeared.

4. Many honest Democrats and Republicans opposed the spoils system and wanted to replace it with a ___________ .

5. Besides working to ___________ the spoils system, these two parties also had many economic plans.

6. These groups could ___________________ Senators and get

support from Congress.

7. In 1890, Congress passed the Sherman Antitrust Act to stop the rise of __________ .

8. The industrialists and the bankers wanted to limit the __________ and protect the prices of their products.

9. The farmers and the other debtors wanted __________ with which to pay their debts.

10. The U.S. government proposed __________ to provide equal rights to all nations to trade with China.

ບົດອ່ານ

໑໘.໑. ລະຍະແຫ່ງການແຕ່ງຕັ້ງທາງການເມືອງແລະການສໍ້ລາດບັງຫລວງ

໑໘.໑.໑. ສະຫະລັຖອະເມຣິກາໄດ້ປ່ຽນອອກຈາກສະພາບປະເທດກະສິກັມເປັນປະເທດອຸດສາຫະກັມໃນລະຫວ່າງສົງຄາມກາງເມືອງຫາປີ ໑໘໖໕. ໃນລະຫວ່າງນັ້ນຈຶ່ງວິຖີທາງການເມືອງແລະເສຖກິດຂອງຊາດໄດ້ມີການປ່ຽນແປງຫລາຍຢ່າງ. ດ້ານການເມືອງໄດ້ມີການແຂ່ງຂັນລະຫວ່າງສອງພັກທີ່ສຳຄັນຄືພັກ Republican Party ແລະພັກ Democratic Party.

໑໘.໑.໒. ຄວາມຈິງແລ້ວພັກ Republican Party ເປັນພັກການເມືອງທີ່ມີສາຍສັມພັນລະຫວ່າງສອງກຸ່ມດ້ວຍກັນຄື : ພວກເຈົ້າຂອງໂຮງງານອຸດສາຫະກັມທີ່ຢູ່ທາງພາກຕາເວັນຕົກສ່ຽງເໜືອ ແລະຊາວນາທີ່ຮັ່ງມີຊຶ່ງຢູ່ທາງພາກຕາເວັນຕົກກາງ (Middle West). ສະມາຊິກຂອງພັກ Republican Party ສົນໃຈກ່ຽວກັບຄວາມຊື່ສັດຂອງສະມາຄົມກັມມະກອນແລະອິສລະພາບຂອງພວກຂ້າທາດ. ພັກນີ້ໄດ້ຮັບການສນັບສນູນຈາກຊາວເໜືອຈຳນວນຫລາຍຄົນແລະຈາກພວກທີ່ຖືກປົດປ່ອຍໃຫ້ເປັນອິສລະໃນພາກໃຕ້.

໑໘.໑.໓. ພັກ Democratic Party ເປັນພັກທີ່ມີຄວາມເຂັ້ມແຂງທີ່ສຸດຢູ່ໃນທ້ອງຖິ່ນທີ່ມີຄົນງານປະຈຳໂຮງງານຫັຖກັມແລະອົພຍົພເປັນຈຳນວນຫລາຍເຊັ່ນທາງພາກໃຕ້ແລະບາງແຫ່ງໃນພາກຕາເວັນອອກສ່ຽງເໜືອ. ພວກຄົນເຫລົ່ານີ້ເປັນພວກທຸກແລະມັກຈະຖືກຂູດຮີດຈາກພວກຮັ່ງມີ. ເຂົາເຈົ້າຕ້ອງການຊ່ວຍເຫລືອຈາກພັກການເມືອງແລະຈາກສະມາຄົມກັມມະກອນຕ່າງໆ.

໑໘.໑.໔. ຫລັງຈາກສົງຄາມກາງເມືອງພັກ Republican ມີອຳນາດໃນສພາແລະໃນການເປັນປະທານາທິບໍດີ ສ່ວນພັກ Democrat ມີອຳນາດໃນຣັຖບານປະຈຳຣັຖຕ່າງໆຫລາຍແຫ່ງ. ໃນລະຫວ່າງທີ່ປະທານາທິບໍດີ Grant ດຳຣົງຕຳແໜ່ງຢູ່ນັ້ນ ການສໍ້ລາດບັງຫລວງໄດ້ແຜ່ຂຍາຍທົ່ວປະເທດແລະການເສື່ອມໂຊມຂອງການປົກຄອງປະເທດໄດ້ປາກົດຕົວຂຶ້ນ. ຜູ້ທີ່ຂາດຄວາມຮູ້ຄວາມສາມາດຈຳນວນຫລາຍໄດ້ຮັບຕຳແໜ່ງໃນວົງຣັຖບານຍ້ອນເຄີຍເປັນຜູ້ສນັບສນູນພັກການເມືອງຂອງຕົນຢ່າງຊື່ສັດ. ສະພາບການດັ່ງກ່າວໄດ້ເຮັດໃຫ້ຣັຖບານຂາດປະສິດທິພາບ ຂາດຄວາມຮັບຜິດຊອບ ແລະເກີດມີການສໍ້ລາດບັງຫລວງຂຶ້ນ.

໑໘.໑.໔. ເມື່ອເຖິງເວລາຈາກລົບສູ່ສະໄໝປົກກະຕິສົມບູນ ສະມາຊິກຜູ້ທີ່ມີຄວາມຮູ້ສຶກສຸດຈະອິດຕົວໃນພັກ Democratic ແລະໃນພັກ Republican ຫຼາຍຄົນຈຶ່ງຄັດຄ້ານຕໍ່ລະບົບການປົກຄອງທີ່ເຈື່ອນໄຊ (Spoils system) ແລະໄດ້ສະແດງຄວາມປະສົງທີ່ຈະໃຊ້ລະບົບທີ່ອີງໃສ່ຄຸນງາມຄວາມດີແລະຄວາມສາມາດ (Merrit system) ຂອງຄົນແທນລະບົບທີ່ເປັນຢູ່ໃນຂະນະນັ້ນ. ຄວາມໝາຍຂອງລະບົບ Merrit system ນີ້ຢູ່ວ່າ ຜູ້ທີ່ຈະໄດ້ຮັບຕຳແໜ່ງໜ້າທີ່ໃນວົງການຂອງລັດຖະບານນັ້ນຈະຕ້ອງເປັນຜູ້ທີ່ມີຄວາມຮູ້ຄວາມສາມາດອັນເໝາະສົມແກ່ຕຳແໜ່ງໜ້າທີ່ທີ່ສຸດ ໂດຍບໍ່ອີງໃສ່ຄວາມຄິດຄວາມເຫັນທາງການເມືອງຂອງເຂົາເຈົ້າ ຫຼືອີງໃສ່ການຮັບໃຊ້ພັກການເມືອງແຕ່ປະການໃດ. ພວກຄົນເຫຼົ່ານັ້ນໄດ້ແກ່ພວກນັກຂ່າວໜັງສືພິມ ຫຼື ຜູ້ທີ່ມີຄວາມຮູ້. ຄົນພວກນີ້ເປັນນັກປະຕິຮູບຈຶ່ງໃຊ້ໜັງສືພິມແລະວາລະສານໂຈມຕີຄວາມຊົ່ວຮ້າຍຂອງລະບົບເຈື່ອນໄຊຢູ່ໃນເວລານັ້ນ. ເຂົາເຈົ້າໄດ້ຮັບການສະໜັບສະໜູນຈາກປະຊາຊົນຜູ້ທີ່ມີຄວາມຮູ້ສຶກຕົວຫຼາຍ. ເຂົາເຈົ້າໄດ້ຮ້ອງຂໍໃຫ້ສະພາສະສາງບັນຫາຄວາມເຈື່ອນໄຊໃນວົງລັດຖະບານ. ດັ່ງນັ້ນໃນປີ ໑໘໘໓ ສະພາຈຶ່ງໄດ້ອອກດຳລັດທີ່ມີຊື່ວ່າ The Pendleton Act. ດຳລັດນີ້ໄດ້ບົ່ງໃຫ້ຕັ້ງຄະນະກຳມະການກ່ຽວກັບໜ້າທີ່ຣາຊການ (Civil service commission) ຂຶ້ນເພື່ອຢັ່ງເບິ່ງຄວາມເໝາະສົມຂອງຜູ້ສະໝັກເຂົ້າຮັບໃຊ້ໃນຣາຊການຫຼວງໃນຮູບຂອງການສອບເສັງ. ຍ້ອນດຳລັດດັ່ງກ່າວຈຶ່ງມີພຽງ ໑໔.໐໐໐ ຄົນເທົ່ານັ້ນໃນຈຳນວນ ໑໐໐.໐໐໐ ຄົນຖືກຮັບເອົາເຂົ້າເຮັດວຽກໃຫ້ລັດຖະບານ.

໑໘.໒. ການເໜັງຕີງທີ່ກ້າວໜ້າ

໑໘.໒.໑. ນອກຈາກທຳການລົບລ້າງລະບົບເຈື່ອນໄຊນັ້ນແລ້ວ ພັກດັ່ງກ່າວທັງສອງຍັງໄດ້ວາງແຜນເສດຖະກິດຫຼາຍຢ່າງໄວ້ອີກ. ແຜນເສດຖະກິດທີ່ສຳຄັນຄື ບັງຄັບລາຄາສິນຄ້າຂາເຂົ້າລົງ ສອງການວາງໂຄງການເພື່ອຄວບຄຸມການຄ້າ ສາມວາງມາດຖານຂອງເງິນຕາ.

໑໘.໒.໒. ພວກທີ່ຂັນອັນແຂງໃນພັກ Democratic ນັ້ນເອົາໃຈໃສ່ໃນພາກໃຕ້ເປັນສ່ວນໃຫຍ່. ເຂົາເຈົ້າເປັນຊາວນາແລະເປັນຄົນງານປະຈຳໃນໂຮງງານຫັດຖະກຳ. ພວກນີ້ເຫັນດີກັບການຫຼຸດລາຄາສິນຄ້າຂາເຂົ້າ ເພາະວ່າເຂົາເຈົ້າຈະໄດ້ຊື້ເຄື່ອງໃຊ້ຂອງສອຍແລະອຸປະກອນເຄື່ອງມືສຳຄັນໃຊ້ໃນໄຮ່ໃນສວນຂອງເຂົາເຈົ້າທີ່ມາຈາກຕ່າງປະເທດໃນລາຄາຖືກຂຶ້ນກວ່າເດີມ.

໑໘.໒.໓. ກົງກັນຂ້າມພວກເຈົ້າຂອງໂຮງງານອຸດສາຫະກັມແລະພວກຊາວນາທີ່ຍັງມີທີ່ສັງກັດໃນພັກ Republican ນັ້ນຕ້ອງການເກັບພາສີສິນຄ້າເຂົ້າປະເທດໃນອັດຕາອັນສູງ. ການເກັບພາສີປະເພດນີ້ເປັນວິທີທີ່ໄດ້ຜົນທີ່ສຸດເພື່ອຫ້າມບໍ່ໃຫ້ສິນຄ້າຕ່າງປະເທດເຂົ້າມາຕີຕລາດພາຍໃນປະເທດແລະເປັນວິທີແກ້ໄຂບັນຫາວ່າງງານ ພ້ອມກັບເປັນວິທີ ທີ່ພາໃຫ້ເສດຖະກິດຈະເຣີນກ້າວໜ້າອີກດ້ວຍ.

໑໘.໒.໔. ຕາມຣັຖທັມມະນູນແລ້ວ ສະພາມີສິດອຳນາດຄວບຄຸມການຄ້າຣະຫວ່າງຣັຖ. ເຖິງຢ່າງໃດກໍດີການຄວບຄຸມກິຈການການຄ້າຣະຫວ່າງຣັຖຕ່າງໆນັ້ນເປັນການຍາກທີ່ສຸດ ເພາະວ່າບໍຣິສັດຣົດໄຟທຸກບໍຣິສັດຢູ່ໃນກຳມືຂອງພວກທີ່ມີອິດທິພົນແລະຮັ່ງມີທີ່ສຸດໃນປະເທດ. ກຸ່ມເຫຼົ່ານີ້ສາມາດຈັດຈູງພວກສະມາຊິກສະພາສູງແລະສາມາດດຶງເອົາການສນັບສນູນຈາກສະພາໄດ້. ຕາບໃດຣັຖບານຫາກໄກ່ເກ່ຍກັບບໍຣິສັດຣົດໄຟທັງຫລາຍນັ້ນບໍ່ໄດ້ຜົນ ຕາບນັ້ນການລົບລ້າງການຜູກຂາດໃນການຄ້າຈຶ່ງເປັນໄປບໍ່ໄດ້. ພວກເຈົ້າຂອງບໍຣິສັດການຄ້າເລັກນ້ອຍທັງຫລາຍມີຄວາມວິຕົກກ່ຽວກັບສະມາຄົມການຄ້າ (trust) ແລະວິທີການຜູກຂາດເປັນອັນມາກ ດັ່ງນັ້ນເຂົາເຈົ້າຈຶ່ງຈູງຍູ້ຂະບວນປະຕິຮູບໃນສະພາໃຫ້ອອກກົດໝາຍເພື່ອຄວບຄຸມການຄ້າຣະຫວ່າງຣັຖຂຶ້ນ. ສະພາໄດ້ອອກດຳລັດກ່ຽວກັບການຄ້າຣະຫວ່າງຣັຖ The Interstate Commerce Act (ICA)ໃນປີ ໑໘໘໗ ແລະໄດ້ຈັດຕັ້ງຄະນະກັມມະການກ່ຽວກັບການຄ້າຣະຫວ່າງຣັຖຂຶ້ນ Interstate Commerce Commission (ICC) ເພື່ອທຳການຄວບຄຸມການຄ້າ ຄວບຄຸມການບໍຣິການ ແລະ ອັດຕາຄ່າຣົບຈ້າງຣະຫວ່າງຣັຖ. ຄວາມຈິງແລ້ວຄະນະກັມມະການດັ່ງກ່າວມີອຳນາດນ້ອຍທີ່ສຸດ ແລະ ດຳລັດກ່ຽວກັບການຄ້າຣະຫວ່າງຣັຖນັ້ນເຮັດອອກມາເພື່ອບໍ່ໃຫ້ປະຊາຊົນຮ້ອງໄຮເທົ່ານັ້ນແທນທີ່ຈະເກີດປະໂຍດອັນແທ້ຈິງ.

໑໘.໒.໕. ປະຊາຊົນທົ່ວປະເທດບໍ່ພໍໃຈກັບດຳລັດ ICA ເຂົາເຈົ້າໄດ້ຮ້ອງຂໍໃຫ້ຣັຖບານຫາທາງລະງັບສະມາຄົມການຄ້າ trusts ຕື່ມອີກ. ຕໍ່ມາໃນປີ ໑໘໙໐ ສະພາຈຶ່ງໄດ້ອອກດຳລັດເພື່ອຕ້ານການຜູກຂາດໃນການຄ້າເອີ້ນວ່າ The Sherman Antitrust Act. ເນື່ອງຈາກດຳລັດທີ່ກ່າວມານັ້ນບໍ່ແຈ້ງຂາວ ພວກນາຍທຶນໄດ້ຮັບຈ້າງນ້ອຍແລະກຸ່ມຜູກຂາດຈຶ່ງແຜ່ຂະຫຍາຍອອກເລື້ອຍໆ.

໑໘.໒.໖. ບັນຫາອີກຢ່າງນຶ່ງທີ່ເກີດຂຶ້ນໃນປີ ໑໘໙໐ ແມ່ນການຕໍ່ສູ້ຖົກຖຽງກັນເຣື່ອງມາດຕະຖານຂອງເງິນຕາ. ພວກເຈົ້າຂອງໂຮງງານ ເຈົ້າຂອງທະນາຄານ ແລະພວກນັກການຄ້າສນັບສນູນການໃຊ້ຄຳເປັນມາດຕະຖານ. ພວກກຸ່ມເຫຼົ່ານີ້ຕ້ອງການວາງຂອບເຂດການໝູນວຽນຂອງທະນາບັດແລະຕ້ອງການປ້ອງກັນຣາຄາສິນຄ້າຂອງເຂົາເຈົ້າພ້ອມກັບປ້ອງກັນອັດຕາຄ່າດອກເບ້ຍຂອງເງິນທີ່ເຂົາເຈົ້າໃຫ້ຄົນອື່ນຢືມ. ພວກຊາວນາແລະພວກຄົນງານທົ່ວ

ໄປສນັບສນູນໃຫ້ໃຊ້ຕົວຄຳແລະເງິນແທ່ງເປັນມາດຕະຖານ. ເຂົາເຈົ້າໄດ້ຮ້ອງໃຫ້ລັຖບານເພີ້ມຈຳນວນທະນະບັດທີ່ໝູນວຽນຢູ່ນັ້ນໂດຍອີງໃສ່ເງິນແລະຄຳ. ພວກຊາວນາແລະພວກທີ່ຕິດໜີ້ ກໍ ລຸກຂື້ນຕ້ອງການເງິນທີ່ມີຄ່າຕ່ຳ (Cheap money) ເພື່ອໃຊ້ໃນການຈ່າຍໜີ້ຂອງເຂົາເຈົ້າ. ພວກເຈົ້າຂອງໂຮງງານແລະເຈົ້າຂອງທະນາຄານທີ່ໃຫຍ່ໆບໍ່ເຕັມໃຈໃຫ້ໃຊ້ເງິນແລະຄຳເປັນມາດຕະຖານ ດ້ວຍເຫດນີ້ເຂົາເຈົ້າຈື່ງໃຊ້ກຳລັງຊັບແລະອຳນາດຂອງເຂົາເຈົ້າເພື່ອທຳລາຍພວກທີ່ສນັບສນູນນະໂຍບາຍຂອງພວກຊາວນາທີ່ທຸກຍາກແລະພວກລູກໜີ້ໃນສະພາແລະໃນການເລືອກຕັ້ງປະທານາທິບໍດີ ໑໘໙໖. ຜົນປາກົດວ່າທ່ານ William Mckinley ຊຶ່ງເປັນຜູ້ນຳຂອງພວກທີ່ສນັບສນູນການໃຊ້ຄຳເປັນມາດຕະຖານນັ້ນໄດ້ຖືກເລືອກເປັນປະທານາທິບໍດີ ແລະໃນປີ ໑໘໙໗ ທາງການໄດ້ປະກາດໃຊ້ຄຳເປັນມາດຕະຖານຂອງເງິນຕາ.

໑໘.໓. ປະເທດຊາດກາຍເປັນມະຫາອຳນາດໃນໂລກ

໑໘.໓.໑. ຄວາມຈະເລີນດ້ານອຸດສາຫະກັມເຮັດໃຫ້ສະຫະຣັຖອະເມຣິກາເກີດມີຄວາມຕ້ອງການຕະຫຼາດໃນຕ່າງປະເທດເພື່ອຂາຍສິນຄ້າຕ່າງໆ. ພວກນັກການຄ້າແລະພວກຜູ້ນຳທະຫານໄດ້ສນັບສນູນການຄອບຄອງດິນແດນໃນຕ່າງປະເທດເພື່ອໃຫ້ໄດ້ທ່າເຮືອແລະຕະຫຼາດຫຼາຍຂື້ນ. ໃນປີ ໑໘໗໘ ສະຫະຣັຖໄດ້ສ້າງທ່າເຮືອຢູ່ Pago Pago ໃນເກາະ Samoa Islands ອັນເປັນເຫດໃຫ້ລັຖບານປະເທດອັງກິດແລະເຢຍຣະມັນປະທ້ວງຕໍ່ຕ້ານ ໂດຍສົ່ງເຮືອຮົບເຂົ້າໄປໃນບໍຣິເວນເກາະດັ່ງກ່າວ ແຕ່ບໍ່ນານພວກອັງກິດໄດ້ຖອຍໜີ. ສັນສະຫະຣັຖແລະປະເທດເຢຍຣະມັນຈື່ງໄດ້ແບ່ງປັນດອນນັ້ນໃນລະຫວ່າງເຂົາເຈົ້າເອງ.

໑໘.໓.໒. ເກາະ Hawaii ເປັນອີກຈຸດນຶ່ງທີ່ກອງທັບເຮືອຂອງສະຫະຣັຖໄດ້ຕັ້ງເປົ້າໝາຍໄວ້. ຖ້າຫາກກອງທັບເຮືອຂອງສະຫະຣັຖຍຶດຄອງເອົາເກາະແຫ່ງນີ້ໄດ້ ການເປີດທາງເດີນທະເລເສັ້ນໃໝ່ໄປສູ່ປະເທດຈີນແລະພາກຕາເວັນອອກໄກນັ້ນກໍ່ຈະສະດວກຂື້ນ. ໃນປີ ໑໘໘໐ ພວກນັກທຸລະກິດຊາວອະເມຣິກັນໄດ້ລົງທຶນຢ່າງຫຼວງຫຼາຍໃສ່ການປູກອ້ອຍໃນເກາະ Hawaii ໃນປີ ໑໘໙໐ ລາຊີນີ Liliuokalani ໄດ້ເປັນຜູ້ປົກຄອງເກາະແລະນາງຕ້ອງການຕັດອິດທິພົນຂອງຊາວອະເມຣິກັນນັ້ນລົງ. ດ້ວຍເຫດນີ້ເພື່ອປ້ອງກັນຜົນປະໂຍດຂອງເຂົາເຈົ້າພວກອະເມຣິກັນຢູ່ໃນເກາະນັ້ນຈື່ງໄດ້ວາງແຜນເຮັດປະຕິວັດຂື້ນ. ຫຼັງຈາກການປະຕິວັດຕໍ່ຕ້ານລາຊີນີທ່ານໄປຢ່າງສຳເຣັດຜົນໃນປີ ໑໘໙໓ ເກາະ Hawaii ກໍໄດ້ຖືກຈັດເຂົ້າເປັນສ່ວນນຶ່ງຂອງສະຫະຣັຖ. ການປະຕິວັດດັ່ງກ່າວນີ້ແມ່ນພວກອະເມຣິກັນທີ່ອາໄສຢູ່ໃນເກາະ Hawaii ນັ້ນເອງເປັນຜູ້ເຮັດຂື້ນໂດຍການສນັບສນູນຈາກນະສິງຊາວອະເມຣິກັນປະຈຳ Hawaii.

໑໘.໓.໓. ເປົ້າໝາຍຕໍ່ໄປແມ່ນປະເທດຈີນ. ຄວາມຈິງຫລັງປະເທດຕ່າງໆໃນຢູໂຣບເຄີຍບັງຄັບໃຫ້ປະເທດຈີນເຊັນສົນທິສັນຍາມາເປັນເວລາຫລາຍປີ ເພື່ອໃຫ້ປະເທດເຫລົ່ານັ້ນມີສິດຄ້າຂາຍໃນປະເທດຈີນ. ສະຫະລັດອະເມຣິກາກໍຕ້ອງການໄດ້ສິດນັ້ນເຊັ່ນດຽວກັນ. ດັ່ງນັ້ນສະຫະລັດຈຶ່ງໄດ້ສເນີນະໂຍບາຍແບບເປີດກວ້າງ (Open door policy) ໝາຍຄວາມວ່າປະເທດຕ່າງໆທັງໝົດມີສິດຄ້າຂາຍກັບປະເທດຈີນຢ່າງເທົ່າທຽມກັນ.

໑໘.໓.໔. ພວກອະເມຣິກັນທີ່ຢາກຂຍາຍອິດທິພົນໃນຕ່າງປະເທດມີຄວາມກັງວົນໃນການທີ່ປະເທດສະເປນເຂົ້າໄປໃນ Cuba ແລະໃນເກາະ Caribeen. ພວກ Cubansໄດ້ຕໍ່ສູ້ເອົາເອກຣາດມາເປັນເວລາຫລາຍປີດ້ວຍກັນ. ປະທານາທິບໍດີ Mckinley ບໍ່ມີຄວາມປະສົງແຊກແຊງໃນບັນຫາຂອງ Cuba. ແຕ່ໃນເວລານັ້ນໄດ້ມີຊາວອະເມຣິກັນຈຳນວນຫລາຍຄົນອາໃສຢູ່ໃນເມືອງ Havana. ເພື່ອປ້ອງກັນຊີວິດຄົນເຫລົ່ານີ້ ຣັຖບານສະຫະລັດອະເມຣິກາຈຶ່ງໄດ້ສົ່ງເຮືອລົບທີ່ຊື່ວ່າ Maine ລົງໄປສູ່ Havana. ເຮືອລົບດັ່ງກ່າວໄດ້ຖືກລະເບີດໃນທ່າເຮືອແລະມີຜູ້ເສັຽຊີວິດ ໒໖໐ ຄົນ. ເນື່ອງຈາກເຫດການເຊັ່ນນີ້ປະຊາຊົນຈຶ່ງໄດ້ຂຶ້ນໃຫ້ປະທານາທິບໍດີ Mckinley ເອົາທ່າທີ. ທ່ານໄດ້ຮ້ອງໃຫ້ສະພາປະກາດສົງຄາມກັບ Spain ຊຶ່ງສະພາໄດ້ຕົກລົງເຫັນດີ. ສົງຄາມລະຫວ່າງສະຫະລັດແລະ Spain ນັ້ນບໍ່ໄດ້ເກີດແຕ່ສະເພາະໃນບໍຣິເວນທະເລ Caribean ເທົ່ານັ້ນ ຢູ່ໃນເກາະ Philippines ກໍມີການສູ້ລົບເໝືອນກັນ. ເສິກໄດ້ມີຂຶ້ນພຽງເທົ່າໃດເດືອນເທົ່ານັ້ນ ສະຫະລັດກໍໄດ້ຍຶດເອົາເກາະຫລາຍແຫ່ງຕື່ມອີກໃນໂລກ.
ໄດ້ເສັຽສົງຄາມແລະໄດ້ມອບເກາະ Cuba, Puerto Rico ແລະ Guam ໃຫ້ແກ່ສະຫະລັດ.

໑໘.໓.໕. ນັບຈາກເວລາທີ່ສະຫະລັດອະເມຣິກາຍັງເປັນປະເທດທີ່ໜຸ່ມແລະອ່ອນແອຢູ່ນັ້ນຈົນເຖິງເວລາທີ່ໄດ້ກາຍເປັນປະເທດມະຫາອຳນາດໃນໂລກເປັນເວລາຢູ່ປະມານຮ້ອຍປີ. ໃນຂັ້ນທຳອິດສະຫະລັດເປັນປະເທດອ່ອນແອທີ່ສຸດ ໂດດດ່ຽວແລະມີນະໂຍບາຍເປັນກາງ. ຍ້ອນຄວາມຈເຣີນດ້ານເສດຖະກິດແລະດ້ານການຄ້າ ສະຫະລັດໄດ້ກາຍເປັນປະເທດທີ່ມີອຳນາດອັນດັບໂລກ ແລະໄດ້ຍຶດຄອງເອົາດິນແດນຕ່າງໆໃນຕ່າງປະເທດເພື່ອເປັນຕລາດສຳລັບສິນຄ້າທີ່ຜລິດໄດ້.

ບົດຝຶກຫັດ

໑. **ຊອກຫາສັບ**. :

ຄຳແນະນຳ : ຈົ່ງຊອກຫາສັບແລ້ວຂີດກ້ອງສັບເຫຼົ່ານັ້ນໃນຕະລາງສັບຂ້າງລຸ່ມນີ້. ຈົ່ງຊອກຫາສັບທັ້ງທາງຕາມທາງຕັ້ງ ທາງນອນ ແລະຕາມທາງຂວາງ. ເມື່ອພົບເຫັນສັບແລ້ວໃຫ້ຂຽນເອົາໄວ້ແລ້ວໃຫ້ຂຽນຄວາມໝາຍຂອງສັບນັ້ນລົງໄປ.

COMPETITION
CORRUPT
EXPANSIONIST
ROAD
SEAWAY
WORLD POWER
MERIT SYSTEM
STANDARD

JOURNALIST
MONETARY
EXPLOIT
CONGRESS
OPEN DOOR
INTEGRITY
BANKER
FACTORY

FARMER
DEMOCRATS
REFORMER
EVIL
CURRENCY
SCHOLAR
GOLD
TARGET

C O M P E T I T I O N T A R G E T W

J D O S X M O T C F A R M E R O W O

O E N T P C O R R U P T O F C P O R

U M E A A C O N G R E S S O O E R L

R O T N N F A C T O R Y N R N N O D

N C A D S E X P L O I T I M G D W P

A R R A I R O A D E V I L E R O O O

L A Y R O L S E A W A Y U R E O R W

I T O D N C U R R E N C Y O S R T E

S S N B I N T E G R I T Y R S U H R

T E O M S C H O L A R T G O L D S A

M E R I T S Y S T E M B A N K E R T

360

໒. ການປະກອບສັບແລະຄຳອະທິບາຍໃຫ້ຖືກຕ້ອງກັນ : ຈົ່ງຈັດເອົາສັບຄຳເຂົ້າແຕ່ລະຄຳໃນໝວດ (ກ) ໃຫ້ຖືກກັບຄຳອະທິບາຍໃນໝວດ (ຂ) ໂດຍຂຽນຄຳຕອບຊຶ່ງເປັນຕົວເລກໃສ່ຊ່ອງວ່າງທີ່ປະໄວ້ນັ້ນສຳຫຼັບຄຳຕອບທຸກຄຳ.

ໝວດ (ກ)	ໝວດ (ຂ)
________(ກ) ການຜູກຂາດໃນການຄ້າ	(໑) ແມ່ນນະໂຍບາຍຊຶ່ງແມ່ນສະຫະຣັຖເປັນຜູ້ລິເລີ ເປັນຄັ້ງທຳອິດເພື່ອໃຫ້ທຸກຊາດມີສິດໃນການຄ້າຂາຍກັບປະເທດຈີນຢ່າງເທົ່າທຽມກັນ.
________(ຂ) ຂ້າຣາຊການພົນລະເຮືອນ	(໒) ການມອບຕຳແໜ່ງໃນອົງລັຖບານເປັນການຕອບແທນການສນັບສນູນທາງການເມືອງ.
________(ຄ) ນັກປະຕິຮູບ	(໓) ກ່ຽວກັບການປັບປຸງໃຫ້ດີຂຶ້ນເພື່ອຄວາມກ້າວໜ້າ.
________(ງ) ຄົນຕ່າງດ້າວ	(໔) ຕຳແໜ່ງວຽກໃນຣະດັບລັຖບານກາງ ລັຖບານປະຈຳຣັຖ ແລະລັຖບານທ້ອງຖິ່ນອີງຕາມຄຸນງາມຄວາມດີແລະຄວາມສາມາດ.
________(ຈ) ນະໂຍບາຍແບບເປີດກວ້າງ	(໕) ຄົນຜູ້ທີ່ອອກຈາກປະເທດຂອງຕົນເພື່ອໄປຕັ້ງຖິ່ນຖານໃນປະເທດອື່ນ.
________(ສ) ຣະບົບການປົກຄອງທີ່ເຊື່ອມໂຊມ	(໖) ຜູ້ທີ່ມີຄວາມຕ້ອງການປັບປຸງສະພາບການຕ່າງໆໃຫ້ດີຂຶ້ນ.
________(ຊ) ຫົວກ້າວໜ້າ	(໗) ການຄວບຄຸມໂຮງງານຫຼືຄວບຄຸມການຄ້າຂອງສິນຄ້າຢ່າງໃດຢ່າງນຶ່ງໂດຍກຸ່ມຫຼືບໍຣິສັດດຽວເທົ່ານັ້ນ.

໓. ຖືກ ຫຼື ຜິດ :

ຈົ່ງອ່ານປະໂຍກຂ້າງລຸ່ມນີ້ແຕ່ລະປະໂຍກແລ້ວໝາຍອັກສອນ T ໃສ່ໜ້າປະໂຍກທີ່ທ່ານເຫັນວ່າຖືກ ແລະ ໝາຍອັກສອນ F ໃສ່ໜ້າຫາກປະໂຍກນັ້ນຜິດ.

_____ ໑. ພັກການເມືອງທີ່ສຳຄັນສອງພັກຄື Republican Party ແລະພັກ Democratic Party

_____ ໒. ພັກ Democratic Party ເປັນພັກທີ່ມີພະລັງທີ່ສຸດໃນພາກໃຕ້ແລະໃນບາງທ້ອງຖິ່ນໃນພາກຕາເວັນອອກສ່ຽງເໜືອ.

_____ ໓. ໃນລະຫວ່າງທີ່ປະທານາທິບໍດີ Grant ຄອງຕຳແໜ່ງຢູ່ນັ້ນການປົກຄອງອັນດີທີ່ສຸດໄດ້ແຜ່ຂະຫຍາຍທົ່ວປະເທດ.

_____ ໔. ພວກຄະນະປະຕິຮູບເປັນພວກທີ່ສະໜັບສະໜູນລະບົບການປົກຄອງທີ່ເສື່ອມໂຊມ.

_____ ໕. ພວກ Democrats ເຫັນດີໃຫ້ມີການຂຶ້ນຄ່າພາສີສິນຄ້າຂາເຂົ້າເພື່ອປ້ອງກັນຜົນປູກຈາກນາແລະສວນຂອງເຂົາເຈົ້າ.

_____ ໖. ໃນເກາະ Samao Islands ໄດ້ມີການຕໍ່ສູ້ລະຫວ່າງກອງທັບເຮືອຂອງສະຫະລັດແລະກອງທັບອັງກິດເປັນຢ່າງໜັກ.

_____ ໗. ໃນປີ ໑໘໙໐ ຣາຊິນີ Liliuokalani ເປັນເຈົ້າຂອງໂຮງງານໃນ Hawaii

_____ ໘. ນະໂຍບາຍເປີດກວ້າງເປັນນະໂຍບາຍຈຳກັດຈຳນວນຄົນຈີນເຂົ້າໄປຕັ້ງຖິ່ນຖານໃນສະຫະລັດໃນແຕ່ລະປີ.

_____ ໙. Cuba ຖືກຈັດເຂົ້າເປັນດິນແດນຂອງສະຫະລັດຈາກການພົບປະລະຫວ່າງສະພາຂອງສະຫະລັດແລະປະທານາທິບໍດີ Cuba.

_____໑໐. Puerto Rico ເປັນຫົວເມືອງຂຶ້ນຂອງປະເທດຍີ່ປຸ່ນໃນປີ ໑໘໙໘.

໔. ການຕື່ມຄຳເວົ້າໃສ່ຊ່ອງວ່າງ : ຈົ່ງຂຽນຄຳເວົ້າທີ່ພວກຄຳເວົ້າຕໍ່ໄປນີ້ໃສ່ຊ່ອງວ່າງທີ່ມີໃນແຕ່ລະປະໂຍກໃຫ້ໄດ້ຄວາມໝາຍອັນຖືກຕ້ອງ : ທາງດ້ານການເມືອງ, ທາງດ້ານເສດຖະກິດ, ຄວາມຮູ້ສຶກ, ລະບົບການປົກຄອງທີ່ເສື່ອມໂຊມ, ລະບົບຂັ້ນເງິນເດືອນຫຼືເລື່ອນຂັ້ນໂດຍອີງໃສ່ຜົນງານຄວາມດີຂອງພະນັກງານ, ລົບລ້າງ, ຈັກງູ, ການຜູກຂາດໃນການຄ້າ, ການໝູນວຽນຂອງເງິນຕາ, ເງິນຕາທີ່ມີຄ່າຖືກ, ນະໂຍບາຍເປີດກວ້າງ.

໑. ປະເທດໄດ້ມີການປ່ຽນແປງທາງດ້ານ ____________________ ແລະທາງດ້ານ ____________________ ຫຼາຍຢ່າງ.

໒. ພວກ Republicans ມີຄວາມກັງວົນກ່ຽວກັບ ____________________ ຂອງສະມາຄົມກັມມະກອນ ແລະອິສລະພາບຂອງຂ້າທາດ.

໓. ໃນລະຫວ່າງທີ່ປະທານາທິບໍດີ Grant ຄອງຕຳແໜ່ງຢູ່ນັ້ນການສໍ້ລາດບັງຫຼວງໄດ້ລະບາດທົ່ວປະເທດ ແລະ ____ ໄດ້ປາກົດຕົວຂຶ້ນ.

໔. ພວກ Democrats ແລະ Republicans ທີ່ມີຄວາມຊື່ສັດສຸດຈະລິດໄດ້ຕໍ່ຕ້ານລະບົບການປົກຄອງທີ່ເຊື່ອມໂຊມແລະຕ້ອງການໃຊ້ ____ ແທນ.

໕. ນອກຈາກທຳການ __________________ ລະບົບການປົກຄອງທີ່ເຊື່ອມໂຊມແລ້ວ ພັກການເມືອງທັງສອງກໍໄດ້ວາງແຜນເສດຖະກິດໄວ້ຫຼາຍແຜນດ້ວຍກັນ.

໖. ກຸ່ມເຫຼົ່ານີ້ສາມາດ __________________________ ພວກສະມາຊິກສະພາສູງແລະສາມາດດຶງເອົາການສນັບສນູນຈາກສະພາໄດ້.

໗. ໃນປີ ໑໘໙໐ ສະພາໄດ້ອອກດຳລັດ Sherman Antitrust Act ເພື່ອຢັບຢັ້ງ ________ ____.

໘. ພວກເຈົ້າຂອງໂຮງງານແລະເຈົ້າຂອງທະນາຄານຕ້ອງການຈຳກັດການ ______________________ ແລະຕ້ອງການປ້ອງກັນລາຄາສິນຄ້າຂອງເຂົາເຈົ້າ.

໙. ພວກຊາວນາແລະພວກລູກໜີ້ຕ່າງໆຕ້ອງການໃຫ້ມີ ____________________________________ ເພື່ອໃຊ້ໃນການຈ່າຍໜີ້ຂອງເຂົາເຈົ້າ.

໑໐. ລັດຖະບານສະຫະລັດໄດ້ສເນີ ________________________________ ເພື່ອໃຫ້ທຸກປະເທດມີສິດໃນການຄ້າກັບປະເທດຈີນຢ່າງເທົ່າທຽມກັນ.

ໝວດ ໔ : ການປ່ຽນແປງຂອງຊາດ

ພາກ ໑໗ : ການປ່ຽນແປງທາງດ້ານສັງຄົມ

ສັບໃໝ່ :

rural: ຊົນນະບົດ

In 1900, 60% of all Americans lived in rural areas.

urban: ໃນເມືອງ

Between 1860-1900, urban population increased six times.

industrialization: ການພັດທະນາດ້ານອຸດສາຫະກັມ

The growth of industrialization led to the growth of cities in the United States.

contrast: ຄວາມແຕກຕ່າງ

There was a contrast in the way of life for the rich people and the poor people in the cities.

mansion: ເຮືອນໃຫຍ່

Many rich people lived in big mansions.

slum: ບໍລິເວນທີ່ພວກທຸກຈົນຢູ່ກັນຢ່າງໜາແໜ້ນ

Poor immigrants lived in the slums.

resentment: ຄວາມຄຽດແຄ້ນ

The poor people began to feel resentment against the rich.

sincere: ຄວາມຈິງໃຈ

Some politicians were sincere about wanting to improve city life.

electric-powered trolley: ລົດລາງແລ່ນດ້ວຍໄຟຟ້າ

The electric-powered trolleys and elevated cars improved transportation in the cities.

elevated car: ຣົດທີ່ແລ່ນຕາມສະພານລອຍ

waste-disposal system: ການລະບາຍສິ່ງສົກກະປົກໃສໄຕກ

Another improvement in the city life is a waste-disposal system.

settlement house: ສູນການພັກຜ່ອນຍ່ອນໃຈແລະການສຶກສາໃນຍ່ານພວກທຸກຂອງເມືອງ

Settlement houses provided social and recreational activities to residents in poor sections of the city.

coolie: ກູລີ

The Chinese unskilled workers who helped build the railroads were called coolies.

sweatshop: ໂຮງງານທີ່ພວກຄົນງານເຮັດວຽກໃນສະພາບອັນບໍ່ດີບໍ່ຈີບແລະໄດ້ເງິນຄ່າຈ້າງຕ່ຳ

Many immigrants worked in sweatshops doing handwork.

quota system: ການອະນຸຍາດໃຫ້ຄົນຈາກຕ່າງປະເທດເຂົ້າມາອາໃສໃນສະຫະຣັຖໃນຈຳນວນຈຳກັດແຕ່ລະປີ

A quota system was established to limit immigrants to the U.S.

reservation: ດິນຈັດໄວ້ສຳຫຼັບພວກອິນເດັຍແດງ

Indians were forced to live on reservations.

literacy test: ການທົດສອບກ່ຽວກັບຄວາມສາມາດດ້ານອ່ານອອກຂຽນໄດ້

Southern States forced blacks to pass a literacy test to be able to vote.

advertisement: ຄຳປະກາດ

Businessmen placed advertisements for their products in newspapers and magazines.

skyscraper: ຕຶກສູງ ຫຼື ດາດຟ້າ

As cities grow in size, skyscrapers and suspension bridges were built newly created materials, like steel.

suspension bridge: ຂົວທີ່ມີສາຍເຫຼັກຫ້ອຍໄວ້ທາງເທິງແລະບໍ່ມີເສົາຄ້ຳທາງລຸ່ມ

READING

19.1. THE RISE OF THE CITY

19.1.1. After the Civil War, the growth of the cities was one of the most important developments in the United States. From 1860 to 1890, the urban population increased six times. In 1860 about 19% of the population lived in the cities; in 1900 about 40% Americans lived in the cities and towns. Three important developments contributed to the increase of the urban population and the growth of the cities: the increased number of new factories, the movement of rural people to the cities, and the large number of immigrants entering the United States.

19.1.2. During the Age of Industrialisation, many new factories had been built in the cities. These factories provided many jobs and thousands of people came to the cities seeking work. Among those who came looking for jobs were many farmers. Life in the rural areas had become very difficult.

Farmers worked long hours for little pay. Others who came to find jobs were immigrants from the poor countries in Europe, Asia, and Latin America. They came to the cities hoping to find work and a better way of life.

19.1.3. As the cities grew in size and as the urban population increased, two new problems appeared. First, city life presented a **contrast** between the way of life for the rich and the poor. The rich lived in many beautiful **mansions** in one area while the poor workers and immigrants lived in **slums** or run-down buildings in another area. This contrast in the life style of the rich and the poor caused **resentment** and created new problems for urban dwellers.

19.1.4. Second, people new to the urban areas knew little about how to govern a city. An unorganized city could hardly cope with the problems caused by thousands of people moving into the area. In the 1870's, many cities were governed by corrupt and inefficient leaders. Many problems occurred and officials of the city government sat idle.

However, many Americans tried to solve these new problems. **Sincere** politicians, from both parties, fought against the corruption and disorganization. These leaders won the support of the people and were gradually elected to replace the inefficient city officials.

19.1.5. The new city leaders worked hard to provide services and to make the city livable. City transportation was improved by **electric-powered trolleys** and **elevated cars.** In the early 1890's, most city streets were lighted by electric lamps. There was also clean water to drink. A **waste-disposal system** was developed to keep the city clean. The police and fire departments grew in size and helped to prevent many crimes and fires in the big cities.

19.1.6. City reformers further attempted to fight crime by setting up centers called **settlement houses**. In these centers, people could find recreation facilities. A famous reformer named Jane Addams established a Settlement House in Chicago called the Hull House. The Hull House provided many social and cultural activities and served as a model for other settlements in the United States.

19.2. PATTERNS OF PREJUDICE AND DISCRIMINATION

19.2.1. Between 1877 and 1914, hundreds of thousands of immigrants came to this country seeking jobs, a better life, and a more promising future. Most of the immigrants who had arrived before the end of the 1870's had come from Western and Northern Europe. Their culture, languages, and customs related easily to American customs and these early immigrants were quickly assimilated. However, after the 1880's, most of the immigrants were coming from different areas such as Eastern, Southern, and Central Europe. These new immigrants brought cultures, religions, and social customs that were very different from those found in America. For this reason the newer immigrants experienced prejudice and discrimination in the new land.

19.2.2. Immigrants also came from other parts of the world. Thousands of Mexicans came to the U.S. to search for jobs and a better way of life. When we built the transcontinental railroads, thousands of Chinese --unskilled workers called "coolies" --were brought to the western coast states to work.

19.2.3. As well as experiencing prejudice and discrimination, immigrants faced many other problems. It was not easy for most immigrants to find jobs because they were unskilled workers. They were forced to work long hours for low wages in the **sweatshops** (the sweatshop was a small business where people did handwork. Many Americans blamed immigrants when too many people entered this country and cities became crowded. The American workers feared that the immigrants would take their jobs for lower wages. The businessmen claimed the immigrants caused violence; thus, they formed the American Protective Association. The association asked Congress to set up a **quota system** which would limit the number of immigrants allowed to enter the country each year. In 1882, the Chinese Exclusion Act was passed and this law stopped all Chinese immigration for ten years.

19.3. THE INDIANS AND THE BLACKS

19.3.1. Two other groups, the Indians and the Blacks, were also victims of prejudice and unfair treatment. After the Civil War, many Americans moved to the West. As they moved West they pushed the Indians out of their lands. The Indians wanted to stay on their lands, so they fought back for almost 30 years. In an effort to end the fighting, the government set aside land for them called **reservations** and forced the Indians to live on the reservations under military guard. Here, the Indians had to depend on the government and they gradually gave up their tribal way of life. Finally, in 1887, Congress passed the Dawes Act which began breaking up Indian reservations and tribes.

19.3.2. The black Americans were also treated as second class citizens. Although the blacks had been protected by the Thirteenth, Fourteenth, and Fifteenth Amendments, in reality, they were not regarded as equal to the whites. Several measures were adopted to prevent the blacks from voting. Some states, especially in the South, passed a Poll Tax Law where person had to pay a tax to vote. The poor and uneducated blacks had to pass a literacy test. The grandfather law stated that an individual could not vote unless his grandfather had voted prior to 1865. In 1865, most of the blacks had been slaves and only a few of them had the right to vote.

19.3.3. Among the black people, there were some famous leaders who fought for equal rights and equal opportunities for black citizens. One of the most famous leaders in the early times was Booker T. Washington. Washington tried to give blacks equal rights through educational opportunities. He founded Tuskegee College for blacks in Tuskegee, Alabama. In 1914, nearly 3,000 blacks earned college degrees and about one million black children were in schools.

19.4. THE CULTURE OF A DYNAMIC NATION

19.4.1. As industrialization increased and cities grew, American culture was also developing rapidly. By 1900, there were many public schools in the United States. Between 1870 and 1900, the number of students rose from 6 million to 15 million. John Dewey, a leader of educational reform, proposed the idea of pragmatism. The goal of Dewey's pragmatism was to prepare students to live in a modern society. Wealthy businessmen helped the growth of education by donating the money to build schools, libraries, and laboratories.

19.4.2. As more Americans were becoming educated large numbers of people read newspapers and magazines for enjoyment. By 1900, there were more than 2,500 newspapers and magazines in the United States. The popularity of newspapers led to the rise of the **advertisement** industry. Businessmen placed advertisements in newspapers to promote their products.

19.4.3. As urban areas increased in size many improvements and inventions were introduced. The architecture in the big cities was remarkable. Architects used many new materials in construction. They used steel to make the framework to supported very tall buildings and bridges. In 1883, the first **suspension bridge** was built in New York City. Many **skyscrapers** replaced the old buildings in Chicago and New York. Electric elevators helped to take people to the top of the tall buildings.

EXERCISES

I. **Word search puzzle:**

Directions: Find and circle the words in the word puzzle below. The words will be found vertically, horizontally, and diagonally. When you find a word in the puzzle, write it and then define it.

RURAL AREA
POLITICS
ASPECT
CULTURE
LANGUAGE
INDUSTRY
PREJUDICE
LIVABLE

CONTRAST
MANSION
MAN
CRIME
WASTE
QUOTA
STRANGE

DISCRIMINATE
URBAN, CUSTOM
SLUM
ELECTRIC
TRANSCONTINENTAL
RESENTMENT
FRAMEWORK STEEL

A R U R A L A R E A C D E W R I P A

B D R C O N T R A S T F G A E N R D

B I B H I P O L I T I C S S S D E C

C S A M A N S I O N M N O T E U J B

E C N A K L L V P Q R S S E N S U A

A R C N T U U A S P E C T Q T T D S

D I U V X Y M B C D E F R U M R I O

E M S A B C U L T U R E A O E Y C U

A I T C R I M E G H I K N T M M E T

R N O E L E C T R I C L G A T N O H

A A M V X L A N G U A G E P O R S E

R T R A N S C O N T I N E N T A L R

M E F R A M W O R K S T E E L T U N

II. Matching Match each word in column A with the explanation or definition in column B. Write the number of each answer in the space provided.

	A	B
_____	a. architecture	1. a factory or business in which employees have bad working conditions and low wages.
_____	b. Jane Addams	2. provided that each head of an Indian family could claim 160 acres of lands.
_____	c. settlement house	3. thickly populated areas of a city, inhabited by the poorest people.
_____	d. slums	4. art and science of design and construction of buildings.
_____	e. Dawes Act of 1887	5. a tax required to be paid before a person could vote; now illegal.
_____	f. sweat shop	6. the doctrine that defines truth as anything that works or produces good results.
_____	g. pragmatism	7. opened the Hull House in the Chicago Slums in 1889.
_____	h. rural	8. recreational and educational center in poor section of a city.
_____	i. coolies	9. unskilled Chinese workers
_____	j. poll tax	10. related to the country or to an agriculturgal area which is thinly populated.

III. True or False

Read each statement. Put a T next to each statement if it is true. Put a F in that space if it is false.

_____ 1. During the Age of Industrialization, many new plantations and farms had been established in the cities.

_____ 2. Immigrants entered the U.S. to find jobs and a better life.

_____ 3. Sincere members of both political parties fought corruption and achieved some results.

_____ 4. Settlement houses are buildings for rent.

_____ 5. Jane Addams built sweatshops in Chicago and New York City to hire immigrants.

_____ 6. Many Chinese coolies came to the U.S. when the transcontinental railroads were being built.

_____ 7. The Indians lived very happily in the reservations because the government gave them everything.

_____ 8. In the Southern states, the blacks could vote and had the same right to vote as the whites.

_____ 9. Businessmen and industrialists used magazines and newspapers to promote their products.

_____ 10. Urbanization was a sign of progress in the Industrial Era.

IV. Fill in the blanks Complete each statement by writing the correct word or group of words in the blanks: contrast, sincere, settlement houses, sweatshops, quota system, reservations, literacy test, suspension bridge.

1. City life represented a ____________ between the rich and the poor.

2. The ____________ members of both political parties fought corruption and achieved some results.

3. City reformers tried to set up neighborhood centers called ____________ .

4. Immigrants were forced to work long hours for low wages in the ____________ .

5. The American Protective Association asked Congress to set up a ____________ .

6. The government set aside land for the Indians called ___________ and they forced them to live in those places under military guard.

7. The poor and uneducated black who wanted to vote had to pass a ____________ .

8. In 1883, the first _______________ was built in New York City.

The First suspension bridge in the U.S. 1883



ບົດອ່ານ

໑໙.໑. ການເລີ່ມກໍ່ຕັ້ງເມືອງ

໑໙.໑.໑. ຫຼັງຈາກສົງຄາມກາງເມືອງ ການຈະເລີນເຕີບໂຕຂອງເມືອງຕ່າງໆເປັນການພັດທະນາທີ່ສຳຄັນທີ່ສຸດປະເພດນຶ່ງຢູ່ໃນສະຫະລັດອະເມຣິກາ. ການຂະຫຍາຍຕົວຂອງເມືອງສືບເນື່ອງມາຈາກໂຮງງານອຸດສາຫະກັມ ພວກອົບພະຍົບແລະການຍົກຍ້າຍຂອງຊາວຊົນນະບົດເຂົ້າໃນຕົວເມືອງຕ່າງໆ. ຈາກປີ ໑໘໖໐ ຫາ ໑໘໙໐ ປະຊາຊົນໃນເມືອງໄດ້ເພີ່ມຂຶ້ນຫຼາຍເທົ່າ. ໃນປີ ໑໘໖໐ ຄົນທີ່ຢູ່ໃນເມືອງມີປະມານ ໑໙% ຂອງປະຊາຊົນທັງໝົດ ແລະໃນປີ ໑໙໐໐ ຕົວເລກໄດ້ເພີ່ມຂຶ້ນປະມານ ໔໐% . ການເພີ່ມຈຳນວນຂອງປະຊາຊົນໃນເມືອງຕ່າງໆນັ້ນ ມີຜົນກະທົບຢູ່ຫຼາຍປະການ.

໑໙.໑.໒. ໃນສະໄໝທີ່ມີການພັດທະນາອຸດສາຫະກັມຢູ່ນັ້ນ ໄດ້ມີໂຮງງານໃໝ່ຫຼາຍໂຮງງານຖືກສ້າງຂຶ້ນໃນຕົວເມືອງແລະໃນສະໄໝນັ້ນຊີວິດການເປັນຢູ່ໃນຊົນນະບົດມີຄວາມລຳບາກຢູ່ບໍ່ນ້ອຍອັນເປັນເຫດໃຫ້ຜູ້ຄົນຍົກຍ້າຍເຂົ້າໄປຊອກຫາວຽກເຮັດງານທຳຢູ່ໃນຕົວເມືອງຕ່າງໆ. ນອກຈາກນັ້ນກໍມີພວກອົບພະຍົບທີ່ມາຈາກປະເທດທຸກຍາກໃນຢູໂຣປ ເອເຊັຍ ແລະລາຕິນອະເມຣິກາຕື່ມອີກ. ພວກນີ້ໄດ້ກອງກັນຢູ່ໃນຍ່ານທີ່ທຸກຈົນໃນຕົວເມືອງໃຫຍ່ຫຼາຍຕົວເມືອງ.

໑໙.໑.໓. ໃນເມືອງນັ້ນຊີວິດລະຫວ່າງພວກຮັ່ງມີແລະພວກທຸກມີຄວາມແຕກຕ່າງກັນຫຼາຍ. ບາງແຫ່ງໃນເມືອງມີເຮືອນຊານອັນໃຫຍ່ແລະງົດງາມ ແລະໃນບາງແຫ່ງກໍ່ເປັນຄຸບເປັນຫານ. ພວກອົບພະຍົບທັງຫຼາຍອາໄສຢູ່ຕາມຕູບຫຼືເຮືອນທີ່ຫັກເພແລະມີຊີວິດລຳບາກຂັດສົນ. ຄວາມແຕກຕ່າງລະຫວ່າງຄົນຮັ່ງແລະຄົນທຸກໄດ້ກໍ່ໃຫ້ເກີດມີຄວາມຂັດແຄ້ນແລະບັນຫາໃໝ່ຂຶ້ນຫຼາຍຢ່າງ.

໑໙.໑.໔. ໃນສະໄໝເລີ່ມມີເມືອງໃໝ່ໆ ຊາວເມືອງທັງຫຼາຍມີຄວາມຮູ້ດ້ານການປົກຄອງນ້ອຍທີ່ສຸດ. ສະນັ້ນການຈັດຕັ້ງອັນບໍ່ເປັນລະບຽບຈຶ່ງບໍ່ສາມາດທີ່ຈະແກ້ໄຂບັນຫາທີ່ເກີດຈາກການຍ້າຍເຂົ້າມາຢູ່ໃນເມືອງຂອງຄົນຈຳນວນເປັນພັນໆໄດ້. ໃນປີ ໑໘໗໐ ຄະນະປົກຄອງໃນຕົວເມືອງຕ່າງໆນັ້ນເປັນພວກສໍ້ໂກງແລະຂາດຄວາມສາມາດ. ພວກສະມາຊິກທີ່ມີຈິດໃຈເຫັນແກ່ຕົວທີ່ສັງກັດຢູ່ໃນພັກການເມືອງທັງສອງພັກໄດ້ດຳເນີນການສໍ້ລາດບັງຫຼວງແລະ

ໄດ້ຮັບຜົນບາງປະການ. ສ່ວນຫຼາຍແມ່ນພວກນີ້ເປັນຜູ້ຊ່ວຍເຫຼືອປະຊາຊົນ ສ່ວນພວກທີ່ປະຈຳໃນຣາຊການເມືອງນັ້ນບໍ່ຄ່ອຍຈະໄດ້ເຮັດຫຍັງເລີຍ. ຍ້ອນການເລືອກຕັ້ງແລະຍ້ອນການສນັບສນູນຂອງປະຊາຊົນສະມາຊິກຂອງພັກການເມືອງຈຶ່ງມີໂອກາດໄດ້ຮັບຕຳແໜ່ງແທນພວກທີ່ບໍ່ມີຄວາມສາມາດນັ້ນເປັນລຳດັບໄປ.

໑໓.໑.໔. ເມື່ອຄະນະພັກການເມືອງເຂົ້າກຳຕຳແໜ່ງ ເຂົາເຈົ້າໄດ້ສະສາງເຮັດໃຫ້ຊີວິດໃນເມືອງໜ້າຢູ່ໜ້າອາໄສຂຶ້ນ. ການຂົນສົ່ງຄົນໂດຍສານໄດ້ປັບປຸງດ້ວຍການໃຊ້ລົດລາງແລ່ນດ້ວຍໄຟຟ້າແລະລົດທີ່ແລ່ນຕາມສະພານລອຍ. ໃນຕົ້ນປີ ໑໙໐໐ ໄດ້ມີໂຄມໄຟຟ້າຕິດຕາມແຄມຖະໜົນຫົນທາງສ່ວນຫຼາຍ. ນອກຈາກນັ້ນກໍມີນ້ຳດື່ມທີ່ສະອາດແລະມີການລະບາຍນ້ຳໂສໂຄກເພື່ອຮັກສາຄວາມສະອາດຂອງຕົວເມືອງ. ກົມຕຳຣວດແລະສະຖານີດັບເພີງໄດ້ຊ່ວຍປ້ອງກັນການອາຕະກັມແລະປ້ອງກັນໄຟໄໝ້ບໍ່ໃຫ້ເກີດຢູ່ໃນເມືອງຫຼາຍກໍຣະນີດ້ວຍກັນ.

໑໓.໑.໕. ຄະນະປັບປຸງບ້ານເມືອງໄດ້ພະຍາຍາມຈັດຕັ້ງສູນກາງພັກຜ່ອນຢ່ອນໃຈແລະການສຶກສາອັນເອີ້ນວ່າ settlement house. Jane Addams ໄດ້ສ້າງສູນກາງ Hull House ໄວ້ໃນ Chicago ສຳຫຼັບໃຊ້ເປັນບ່ອນຈັດກິຈກັມດ້ານສັງຄົມແລະວັດທະນະທັມຕ່າງໆ. ສູນກາງນີ້ໄດ້ສ້າງຊື່ສຽງໃຫ້ແກ່ Jane Addams ຫຼາຍທີ່ສຸດ ແລະທົ່ວໄປໃນສະຫະຣັຖອະເມຣິກາ ການສ້າງສູນຕ່າງໆໄດ້ເອົາສູນກາງ Hull House ນີ້ເປັນຕົວຢ່າງ.

໑໓.໒. ການກຽດຊັງແລະການກີດກັນ

໑໓.໒.໑. ລະຫວ່າງປີ ໑໘໘໐ ແລະ ໑໙໑໔ ໄດ້ມີອົບພະຍົບຫຼາຍຮ້ອຍພັນຄົນເຂົ້າມາໃນປະເທດນີ້ເພື່ອສແວງຫາຊີວິດການເປັນຢູ່ທີ່ດີກວ່າເດີມ ແລະເພື່ອສແວງຫາອານາຄົດອັນແຈ່ມໃສ. ໃນເວລາເຂົາເຈົ້າມາເຖິງເຂົາເຈົ້າໄດ້ພົບກັບບັນຫາທີ່ເກີດຈາກການກຽດຊັງດູໝິ່ນຂອງຄົນໃນດິນແດນອັນໃໝ່ນີ້. ຈົນເຖິງທ້າຍປີ ໑໘໘໐ ພວກອົບພະຍົບສ່ວນໃຫຍ່ມາຈາກພາກຕາເວັນຕົກສ່ຽງເໜືອແລະຈາກພາກເໜືອຂອງຢູໂຣບ. ວັດທະນະທັມ ພາສາ ແລະປະເພນີຂອງຄົນພວກນີ້ເຂົ້າກັບປະເພນີຂອງຊາວອະເມຣິກັນໄດ້ຢ່າງງ່າຍແລະສະດວກ. ແຕ່ວ່າຫຼັງຈາກປີ ໑໘໙໐ ພວກອົບພະຍົບສ່ວນຫຼາຍນັ້ນມາຈາກຫຼາຍແຫ່ງຕ່າງກັນເຊັ່ນ ມາຈາກທາງພາກຕະເວັນອອກ ພາກໃຕ້ ແລະພາກກາງຂອງຢູໂຣບ. ອົບພະຍົບພວກນີ້ໄດ້ນຳເອົາວັດທະນະທັມ ສາສນາ ແລະປະເພນີ ທີ່ແຕກຕ່າງທີ່ສຸດເຂົ້າມາໃນປະເທດ.

໑໓.໒.໒. ອົບພະຍົບທີ່ມາຈາກສ່ວນອື່ນຂອງໂລກກໍມີເຊັ່ນດຽວກັນ. ເຊັ່ນຕົວຢ່າງພວກ Mexicans ຈຳນວນຫຼາຍພັນຄົນໄດ້ເຂົ້າມາຊອກວຽກເຮັດງານທຳແລະຄວາມຢູ່ດີກິນດີ. ໃນເວລາທີ່ມີການສ້າງທາງຣົດໄຟຜ່ານປະເທດ

ຢູ່ນັ້ນ ພວກຊາວຈີນກັມມະກອນຫຼາຍພັນຄົນໄດ້ຖືກສົ່ງໄປເຮັດວຽກໃນຣັຖຕາງພາກຕາເວັນຕົກ.

໑໗.໔.ຂ. ຄວາມຈິງ ພວກອົບພະຍົບສ່ວນໃຫຍ່ທີ່ເຂົ້າມາໃນປະເທດນີ້ເພື່ອມຸ່ງຫວັງຫາຄວາມຢູ່ດີກິນດີເກີດຂຶ້ນທັງໝົດ. ເນື່ອງຈາກຄົນພວກນີ້ເປັນພວກທີ່ບໍ່ມີອາຊີບສີມື ການຊອກວຽກທຳການຈຶ່ງເປັນການລຳບາກ. ພວກເຂົາເຈົ້າຈຳເປັນຕ້ອງໄດ້ເຮັດວຽກເປັນເວລາຫຼາຍຊົ່ວໂມງ ແລະໄດ້ຮັບຄ່າຈ້າງຕ່ຳຕາມບໍຣິສັດທີ່ຕັ້ງຮ້ານເລັກນ້ອຍຊຶ່ງເອີ້ນວ່າ Sweatshops. ໃນຕອນທຳອິດພວກອົບພະຍົບທັງຫຼາຍໄດ້ຮັບການຕ້ອນຮັບອັນດີເວລາເຂົາເຈົ້າເຂົ້າມາໃນສະຫະຣັຖອະເມຣິກາ. ຕໍ່ມາເມື່ອມີຈຳນວນຫຼາຍເຂົ້າມາເພີ່ມ ຊາວອະເມຣິກັນໄດ້ປ່ຽນຄວາມນຶກຄິດແລະທ່າທີໂດຍຕໍ່ຕ້ານພວກອົບພະຍົບທົ່ວໄປ ເພາະວ່າພວກຄົນງານຊາວອະເມຣິກັນເກີດມີຄວາມຢ້ານກົວວ່າພວກອົບພະຍົບຈະຍາດເອົາວຽກຂອງເຂົາໄປໂດຍຮັບເອົາຄ່າຈ້າງຕ່ຳ. ພວກເຈົ້າຂອງບໍຣິສັດການຄ້າອ້າງວ່າພວກອົບພະຍົບເປັນພວກທີ່ສ້າງຄວາມວຸ້ນວາຍດັ່ງນັ້ນເຂົາເຈົ້າຈຶ່ງພາກັນຕັ້ງສະມາຄົມ (The American Protective Association ຂຶ້ນເພື່ອຫາທາງປ້ອງກັນ. ສະມາຄົມທີ່ກ່າວມານີ້ໄດ້ຮ້ອງໃຫ້ສະພາວາງລະບົບ quota system ຂຶ້ນເພື່ອອະນຸຍາດໃຫ້ອົບພະຍົບເຂົ້າມາໃນສະຫະຣັຖແຕ່ລະປີຕາມຈຳນວນຈຳກັດ. ໃນປີ ໑໘໘໒ ໄດ້ມີດຳຣັດChinese Exclusion Act ອອກມາຊຶ່ງເຮັດໃຫ້ພວກຊາວຈີນບໍ່ໄດ້ເຂົ້າມາໃນປະເທດນີ້ເປັນເວລາສິບປີເຕັມ.

໑໗.ຂ. ຊາວອິນເດັຍແດງ ແລະ ຊາວຜິວດຳ

໑໗.ຂ.໑. ພາຍຫຼັງສົງຄາມກາງເມືອງ ພວກຄົນອະເມຣິກັນໄດ້ພາກັນຍ້າຍໄປຢູ່ທາງພາກຕາເວັນຕົກແລະໄດ້ຂັບໄລ່ພວກອິນເດັຍແດງອອກໜີຈາກດິນແດນຂອງເຂົາເຈົ້າໄປ. ດ້ວຍວ່າພວກອິນເດັຍແດງຕ້ອງການຢາກຢູ່ໃນດິນແດນຂອງເຂົາເຈົ້າເອງ ດັ່ງນັ້ນເຂົາເຈົ້າຈຶ່ງໄດ້ຕໍ່ສູ້ກັນເປັນເວລາເກືອບເຖິງສາມສິບປີ. ຣັຖບານໄດ້ຈັດທີ່ດິນໄວ້ຕ່າງຫາກເອີ້ນວ່າ reservations ສຳລັບໃຫ້ພວກອິນເດັຍແດງນັ້ນຢູ່ພາຍໃຕ້ການດູແລຂອງທະຫານ. ໃນ reservations ນັ້ນພວກອິນເດັຍແດງຕ້ອງອາໃສຣັຖບານທຸກຢ່າງແລະໄດ້ປະລະຊີວິດການເປັນຢູ່ຕາມປະເພນີຂອງເຂົາເຈົ້າ. ໃນທີ່ສຸດສະພາໄດ້ອອກດຳຣັດ Dawes Act ໃນປີ ໑໘໘໗. ດຳຣັດດັ່ງກ່າວໄດ້ແຍກreservations ແລະເຜົ່າຕ່າງໆຂອງຊາວອິນເດັຍແດງອອກເປັນສ່ວນຍ່ອຍລົງ.

໑໗.ຂ.໒. ອະເມຣິກັນຊາວຜິວດຳເຄີຍຖືກຖືວ່າເປັນປະຊາຊົນຊັ້ນສອງ. ເຖິງວ່າຈະມີການດັດແປງແກ້ໄຂຣັຖທັມມະນູນຄັ້ງທີ່ສິບສີ່ແລະສິບຫ້າເພື່ອປ້ອງກັນເຂົາເຈົ້າຢູ່ກໍຕາມ ແຕ່ພວກຊາວຜິວດຳກໍຍັງບໍ່ຖືກຮັບຮູ້ວ່າເທົ່າທຽມກັນ

ພວກຜິວຂາວຢູ່. ພວກຜິວດຳຖືກຂັດຂວາງໃນການລົງຄະແນນສຽງເລືອກຕັ້ງຫຼາຍປະການ ໂດຍສະເພາະໃນທາງພາກໃຕ້ມີກົດໝາຍທີ່ເອີ້ນວ່າ Poll Tax Law ຊຶ່ງບັງຄັບໃຫ້ຄົນຕ້ອງເສຍພາສີເສຍກ່ອນ ກ່ອນທີ່ຈະມີສິດລົງຄະແນນສຽງເລືອກຕັ້ງໄດ້. ຊາວຜິວດຳທີ່ທຸກຍາກແລະຂາດການສຶກສານັ້ນກໍຕ້ອງໄດ້ຜ່ານການທົດສອບການຮູ້ໜັງສື. ນອກຈາກນັ້ນກໍຍັງມີກົດໝາຍທີ່ເອີ້ນວ່າ grandfather Law ຊຶ່ງມີເນື້ອໃນໃຈຄວາມວ່າ ຖ້າຜູ້ໃດບໍ່ມີພໍ່ເຖົ້າເຄີຍປ່ອນບັດເລືອກຕັ້ງກ່ອນປີ ໑໘໖໔ ຜູ້ນັ້ນກໍຈະບໍ່ມີສິດປ່ອນບັດເລືອກຕັ້ງ ມີພຽງບໍ່ເທົ່າໃດຄົນເທົ່ານັ້ນ.

໑໙.໓.໓. ຜູ້ນຳຊາວຜິວດຳທີ່ມີຊື່ສຽງທີ່ສຸດໃນສໄມນັ້ນແມ່ນທ່ານ Booker T. Washington. ທ່ານເປັນຫົວໜ້າຂອງມະຫາວິທະຍາໄລ Tuskergee College ຊຶ່ງເປັນມະຫາວິທະຍາໄລສຳຫຼັບຄົນດຳໃນເມືອງ Tuskergee ຣັຖ Alabama. ໃນປີ ໑໙໑໔ ມີຄົນດຳເກືອບ ໓.໐໐໐ ຄົນຈົບຈາກມະຫາວິທະຍາໄລແລະມີນັກຮຽນຄົນດຳປະມານນຶ່ງລ້ານຄົນຕາມໂຮງຮຽນຕ່າງໆ.

໑໙.໔. ວັດທະນະທັມຂອງຊາດທີ່ມີພະລັງເຂັ້ມແຂງ

໑໙.໔.໑. ໃນປີ ໑໙໐໐ ໂຮງຮຽນຫຼວງໃນສະຫະຣັຖອະເມຣິກາມີຢູ່ຈຳນວນຫຼາຍ. ບໍຣິສັດທີ່ລ່ຳລວຍທັງຫຼາຍໄດ້ອອກທຶນສ້າງສາ ໂຮງຮຽນ ຫໍສມຸດ ແລະ ສະຖານທີ່ບັນຄອຫຼາຍແຫ່ງດ້ວຍກັນ. ຈາກປີ ໑໘໗໐ ຫາປີ ໑໙໐໐ ຈຳນວນຂອງນັກຮຽນ ນັກສຶກສາ ໄດ້ເພີ່ມຂຶ້ນຈາກ ໖ ລ້ານຄົນເປັນ ໑໔ ລ້ານຄົນ. ທ່ານ John Dewey ຊຶ່ງເປັນຜູ້ນຳໃນດ້ານການພັດທະນາປັບປຸງການສຶກສາໄດ້ສເນີຄວາມຄິດກ່ຽວກັບການປະຕິບັດໃນສິ່ງທີ່ເກີດຂຶ້ນຈິງແທ້ໆ ຄວາມຄິດນີ້ເອີ້ນວ່າ pragmatism. ຈຸດມຸ່ງໝາຍຂອງທ່ານ Dewey ກໍເພື່ອຕຽມພວກນັກຮຽນທັງຫຼາຍໃຫ້ເຂົ້າກັບສະພາບຂອງສັງຄົມໃໝ່ທີ່ທັນສໄໝ.

໑໙.໔.໒. ໃນຣະຫວ່າງປີ ໑໘໗໐ ຫາ ໑໙໑໐ ຄົນອະເມຣິກັນຈຳນວນຫຼາຍຫາຄວາມມ່ວນຊື່ນໃນການອ່ານໜັງສືພິມແລະວາຣະສານ. ໃນປີ ໑໙໐໐ ໜັງສືພິມແລະວາຣະສານໃນສະຫະຣັຖອະເມຣິກາມີກ່ວາ ໒,໔໐໐ ສະບັບຊຶ່ງອຳນວຍຜົນປະໂຍດໃຫ້ແກ່ຜູ້ອ່ານຢ່າງຫຼວງຫຼາຍ. ຄວາມນິຍົມຂອງໜັງສືພິມໄດ້ພາໃຫ້ມີໂຮງງານດ້ານໂຄສະນາເກີດຂຶ້ນ. ບໍຣິສັດຫ້າງຮ້ານທັງຫຼາຍອາໃສໜ້າໜັງສືພິມເພື່ອໂຄສະນາສິນຄ້າຂອງເຂົາເຈົ້າ.

໑໙.໔.໓. ການຂະຫຍາຍຕົວເມືອງເປັນສັນຍາລັກແຫ່ງຄວາມກ້າວໜ້າໃນຍຸກອຸດສາຫະກັມ. ຊີວິດການເປັນ

ຢູ່ໃນຕົວເມືອງມີການປ່ຽນແປງແລະດີຂຶ້ນ ພ້ອມດຽວກັນການປະດິດຄົ້ນຄິດກໍມີຫຼາຍຂຶ້ນເຊັ່ນດຽວກັນ. ວິທີການສ້າງສາ ຕຶກໂຮງ ເຮືອນຊານໃນເມືອງຕ່າງໆກໍເປັນໜ້າປະຫຼາດອັນການໃຊ້ອຸປະກອນໃໝ່ໆຫຼາຍແນວ. ເຊັ່ນການສ້າງຕຶກແລະຂົວກໍມີການໃຊ້ເຫຼັກເປັນໂຄງຮ່າງ. ໃນປີ ໑໘໘໓ ໄດ້ມີການສ້າງຂົວທີ່ມີສາຍເຫຼັກຫ້ອຍໄວ້ທາງເທິງ ແລະບໍ່ມີເສົາຄ້ຳທາງລຸ່ມອັນເປັນຂົວທຳອິດໃນເມືອງ New York ນອກຈາກນັ້ນກໍມີການສ້າງຕຶກດາດຟ້າສູງ ລິບໃຊ້ໄຟຟ້າສຳຫຼັບພາຄົນຂຶ້ນຈອມຕຶກຢູ່ທີ່ເມືອງ Chicago ແລະເມືອງ New York.

<u>ບົດຝຶກຫັດ</u>

໑. <u>ຊອກຫາສັບ</u> :

<u>ຄຳແນະນຳ</u> : ຈົ່ງຊອກຫາສັບຫຼືຄຳທີ່ກົງກັບອ້ອມສັບເຫຼົ່ານີ້ໃນຕາຕະລາງສັບຂ້າງລຸ່ມນີ້. ໃຫ້ຊອກຫາສັບທັງທາງຕາມທາງຕັ້ງ ທາງນອນ ແລະທາງຂວາງ. ເມື່ອພົບເຫັນສັບແລ້ວໃຫ້ຂຽນເອົາໄວ້ແລ້ວຊອກຫາຄວາມໝາຍຂອງສັບນັ້ນອີກໄປ.

RURAL AREA
POLITICS
ASPECT
CULTURE
LANGUAGE
INDUSTRY
PREJUDICE
LIVABLE
CONTRAST
MANSION
MAN
CRIME
WASTE
QUOTA
STRANGE
DISCRIMINATE
URBAN, CUSTOM
SLUM
ELECTRIC
TRANSCONTINENTAL
RESENTMENT
FRAMEWORK STEEL

```
A R U R A L A R E A C D E W R I P A

B D R C O N T R A S T F G A E N R D

B I B H I P O L I T I C S S S D E C

C S A M A N S I O N M N O T E U J B

E C N A K L L V P Q R S S E N S U A

A R C N T U U A S P E C T Q T T D S

D I U V X Y M B C D E F R U M R I O

E M S A B C U L T U R E A O E Y C U

A I T C R I M E G H I K N T M M E T

5. By the end of the Civil War, the issue of ________ , the right to vote, had become an important goal of the women's right movement.

6. The first real victory in the fight for women suffrage came in an ________ part of the country- the Wyoming territory.

7. After 1900, women worked in the suffrage gave women ________ .

8. The women put great ________ on politicians and on the political system.

9. In 1916, ____________ attended the convention of the National American Suffrage Association and voiced his support to women's right to vote.

10. In 1937, Mary Lyon helped found Mount Holyoke College in Massachusetts. It was the first ________ in the United States.

໒໒.໑. ການຮຽກຮ້ອງຂໍຄວາມສະເໝີພາບ : ກອງປະຊຸມ

໒໒.໑.໑. ຈົນເຖິງສົງຄາມກາງເມືອງ ພວກຜູ້ຍິງໃນສະຫະລັດອະເມຣິກາມີສິດທິໃນຂອບເຂດອັນຈຳກັດເທົ່ານັ້ນ ຕົວຢ່າງ ຜູ້ຍິງທີ່ຍັງໂສດມີສິດເປັນເຈົ້າຂອງຊັບສິນແຕ່ວ່າພວກຜູ້ຍິງທີ່ແຕ່ງງານແລ້ວບໍ່ມີສິດ. ອີກຢ່າງນຶ່ງ ພວກຜູ້ຍິງບໍ່ມີສິດທີ່ຈະເປັນທະນາຍຢູ່ໃນສານ ເຂົາເຈົ້າເກືອບຈະບໍ່ມີສິດທາງການເມືອງເລີຍ ດ້ວຍເຫດນີ້ເຂົາເຈົ້າຈຶ່ງບໍ່ມີສິດປ່ອນບັດລົງຄະແນນສຽງເລືອກຕັ້ງໄດ້.

໒໒.໑.໒. ການຕໍ່ສູ້ຂອງພວກຜູ້ຍິງເພື່ອໃຫ້ໄດ້ສິດສະເໝີພາບໄດ້ເລີ້ມມາແຕ່ໃນອະດີດ ສ່ວນຫຼາຍແມ່ນກ່ອນສໄໝສົງຄາມກາງເມືອງພຸ້ນ. ການຕໍ່ສູ້ອັນທຳອິດຂອງພວກຜູ້ຍິງເພື່ອມີສິດໄດ້ຮັບການສຶກສາຢ່າງສະເໝີພາບນັ້ນເປັນການຕໍ່ສູ້ອັນສຳຄັນ. ໃນປີ ໑໘໒໑ ນາງ Emma Willard ໄດ້ເປີດໂຮງຮຽນຜູ້ຍິງຂຶ້ນໃນເມືອງ Troy ລັດ New York. ບໍ່ນານຫຼັງຈາກນັ້ນມະຫາວິທະຍາໄລ Oberlin College ໃນລັດ Ohio ໄດ້ເປີດປະຕູຮັບເອົານັກສຶກສາຜູ້ຍິງ. ໃນປີ ໑໘໓໗ ນາງ Mary Lyon ເປັນຜູ້ທີ່ຊ່ອຍຕັ້ງມະຫາວິທະຍາໄລ Mount Holyoak College ໃນລັດ Massachusetts ຊຶ່ງເປັນມະຫາວິທະຍາໄລແຫ່ງແລກໃນສະຫະລັດອະເມຣິກາ.

໒໒.໑.໓. ຜູ້ຍິງຈຳນວນຫຼາຍເປັນຜູ້ທີ່ມີຄວາມຂັຍຂັນແຂງໃນຂະບວນການຕໍ່ຕ້ານຂ້າທາດ. ເຂົາເຈົ້າໄດ້ເຮັດແຖລງການຫຼາຍຢ່າງອອກມາ ພ້ອມທັງຈັດການປະຊຸມແລະສົ່ງສານຕໍ່ຕ້ານຂ້າທາດໄປຍັງສະພາ. ໃນປີ ໑໘໒໐ ພວກພະນັກງານຜູ້ຍິງໄດ້ຮ່ວມການປະທ້ວງກັບພະນັກງານຜູ້ຊາຍໃນລັດ Rhode Island ເພື່ອຂໍຂຶ້ນເງິນຄ່າຈ້າງ. ພວກຜູ້ຍິງຈຳນວນຫຼາຍໄດ້ມີປະສົບປະການອັນລ້ຳຄ່າໂດຍເຂົ້າຮ່ວມໃນຂະບວນການທີ່ມີຈຸດປະສົງດັດແປງແກ້ໄຂສະພາບການຕ່າງໆ. ເຂົາເຈົ້າຮູ້ວິທີການຈັດຕັ້ງ ຮູ້ວິທີແຖລງໃນທາງຊຸມຊົນ ຮູ້ວິທີເຮັດກັບຄົນທົ່ວໄປແລະຮູ້ວິທີແກ້ບັນຫາຕ່າງໆອີກດ້ວຍ.

໒໒.໑.໔. ໃນເດືອນ ກໍຣະກະດາ ປີ ໑໘໔໘ ພວກຜູ້ຍິງໄດ້ຈັດປະຊຸມຂຶ້ນທີ່ Seneca Falls ໃນລັດ New York. ກອງປະຊຸມດັ່ງກ່າວແມ່ນນາງ Lucretia ແລະນາງ Elizabeth Cady Stanton ເປັນຜູ້ຈັດຂຶ້ນ. ຜູ້ຍິງທັງສອງຄົນນີ້ເປັນຜູ້ທີ່ຂັຍຂັນແຂງທີ່ສຸດ. ເຂົາເຈົ້າທັງສອງໄດ້ມີບົດບາດອັນສຳຄັນທີ່ສຸດໃນຂະບວນການຕໍ່ຕ້ານຂ້າທາດ. ຈຸດປະສົງຂອງການປະຊຸມຢູ່ທີ່ Seneca Falls ແມ່ນເພື່ອພິຈາຣະນາ ສິດທິຂອງຜູ້ຍິງທັງຫຼາຍກ່ຽວກັບດ້ານສັງຄົມ ດ້ານພົນລະເມືອງ ແລະດ້ານສາສນາ. ໃນກອງປະຊຸມດັ່ງກ່າວ ພວກຜູ້ຍິງໄດ້ເຮັດຄຳປະກາດກ່ຽວກັບຄວາມຮູ້ສຶກ ແລະ ຄວາມເຫັນຕ່າງໆອອກມາຊຶ່ງຂະບວນການສິດທິຂອງຜູ້ຍິງໄດ້ໃຊ້ເປັນແນວທາງໃນຂັ້ນຕໍ່ມາ. ຄຳປະກາດນັ້ນໄດ້ຍົກໄວ້ວ່າຜູ້ຊາຍແລະຜູ້ຍິງມີຄວາມສະເໝີພາບເທົ່າທຽມກັນພ້ອມທັງມີສິດທິບາງປະການອີກດ້ວຍ.

໒໒.໒. ຂະບວນການກ່ຽວກັບສິດທິໃນການລົງຄະແນນສຽງເລືອກຕັ້ງຂອງຜູ້ຍິງ

໒໒.໒.໑. ໃນຕອນທ້າຍຂອງສົງຄາມກາງເມືອງເລື່ອງກ່ຽວກັບສິດທິຂອງຜູ້ຍິງໃນການລົງຄະແນນສຽງເລືອກຕັ້ງ

ໄດ້ກາຍເປັນເປົ້າໝາຍອັນສຳຄັນສຳລັບຂະບວນການສິດທິຂອງຜູ້ຍິງ. ໃນລະຫວ່າງປີ ໑໘໖໙ ແລະປີ ໑໙໑໐ ພວກຜູ້ຍິງໄດ້ໃຊ້ຄວາມພະຍາຍາມຢ່າງໃຫຍ່ຫຼວງເພື່ອໃຫ້ໄດ້ຕາມຄວາມປະສົງຂອງເຂົາເຈົ້າ.

໒໔.໒.໒. ໃນຣະດູແລ້ງປີ ໑໘໖໖ ຮ່າງກົດໝາຍການດັດແປງແກ້ໄຂຣັຖທັມມະນູນຄັ້ງທີ່ສິບສີ່ ໄດ້ຖືກເຈິງສະພາ. ສ່ວນນັ້ນໃນການແກ້ໄຂໄດ້ບົ່ງໄວ້ວ່າ "ຜູ້ທີ່ອາໃສຢູ່ໃນຣັຖຕ່າງໆທີ່ເປັນຜູ້ຊາຍ" ຈະມີສິດປ່ອນບັດລົງຄະແນນສຽງເລືອກຕັ້ງທຸກຄົນໂດຍບໍ່ຈຳກັດເຊື້ອຊາດ. ພວກຜູ້ຍິງບໍ່ພໍໃຈໃນຂໍ້ນີ້ ສະນັ້ນເຂົາເຈົ້າຈຶ່ງຫາທາງຄັດຂວາງບໍ່ໃຫ້ການດັດແປງຣັຖທັມມະນູນຄັ້ງທີ່ສິບສີ່ອອກມາເປັນກົດໝາຍ.

໒໔.໒.໓. ບໍ່ເທົ່າໃດເດືອນຕໍ່ມາການສະເໜີດັດແປງຣັຖທັມມະນູນຄັ້ງທີ່ສິບຫ້າໄດ້ຖືກສົ່ງເຂົ້າສະພາໂດຍມີເນື້ອໃນໃຈຄວາມວ່າ ສິດທິຂອງພົນລະເມືອງໃນການປ່ອນບັດລົງຄະແນນສຽງເລືອກຕັ້ງນັ້ນຈະຖືກປະຕິເສດ ຫຼື ຕັດອອກດ້ວຍເຫດຜົນ "ການເຊື້ອຊາດ ຜິວພັນ ຫຼື ການທີ່ເຄີຍເປັນທາດມາກ່ອນ" ບໍ່ໄດ້. ໃນຂ້ວນທີ່ເຊັ່ນດຽວກັນ ພວກຜູ້ຍິງບໍ່ດີໃຈເພາະເຂົາເຈົ້າຄິດວ່າໃນການດັດແປງນັ້ນຄວນຕື່ມຄຳວ່າ "ເພດ" ເຂົ້າໄປນຳ. ໃນທ້າຍປີ ໑໘໖໙ ປັນຫາກ່ຽວກັບສິດທິໃນການປ່ອນບັດລົງຄະແນນສຽງເລືອກຕັ້ງເປັນປັນຫາທີ່ສຳຄັນທີ່ສຸດສຳລັບຂະບວນການສິດທິຂອງຜູ້ຍິງ.

໒໔.໒.໔. ໄຊຊະນະຄັ້ງທຳອິດທີ່ແທ້ຈິງໃນການຕໍ່ສູ້ເອົາສິດທິໃນການປ່ອນບັດລົງຄະແນນສຽງເລືອກຕັ້ງຂອງຜູ້ຍິງນັ້ນມີຂຶ້ນຢ່າງບໍ່ນຶກບໍ່ຝັນໃນສ່ວນໜຶ່ງຂອງປະເທດຄືໃນດິນແດນຂອງຣັຖ Wyoming . ໃນປີ ໑໘໖໙ ປະຊາຊົນທີ່ອາໃສໃນຣັຖ Wyoming ມີພຽງບໍ່ເທົ່າໃດພັນຄົນເທົ່ານັ້ນ ແຕ່ກົດໝາຍປະຈຳທ້ອງຖິ່ນດັ່ງກ່າວໄດ້ໃຫ້ສິດແກ່ພວກຜູ້ຍິງປ່ອນບັດລົງຄະແນນສຽງເລືອກຕັ້ງໄດ້. ດັ່ງນັ້ນພວກຜູ້ຍິງທີ່ປ່ອນບັດລົງຄະແນນສຽງເປັນຄັ້ງທຳອິດແມ່ນຢູ່ຣັຖ Wyoming ໃນປີ ໑໘໗໐.

໒໔.໓. ການດັດແປງຣັຖທັມມະນູນຄັ້ງທີ່ ໑໙

໒໔.໓.໑. ຫຼັງຈາກປີ ໑໙໐໐ ພວກຜູ້ຍິງໄດ້ໃຊ້ຄວາມພະຍາຍາມຢ່າງຫຼວງຫຼາຍໃນການຕໍ່ສູ້ເພື່ອໃຫ້ໄດ້ສິດໃນການປ່ອນບັດ. ເຂົາເຈົ້າບີບພວກນັກການເມືອງແລະທຸກສ່ວນໃນວົງການເມືອງເປັນການໃຫຍ່. ໃນປີ ໑໙໑໖ ປະທານາທິບໍດີ Wilson ໄດ້ເຂົ້າຮ່ວມກອງປະຊຸມຂອງສະມາຄົມການປ່ອນບັດແຫ່ງຊາດທີ່ເອີ້ນວ່າ The National American Suffrage Association ແລະໄດ້ອອກສຽງສນັບສນູນສິດໃນການປ່ອນບັດຂອງຜູ້ຍິງ.

໒໕.໓.໔. ໃນປີ ໑໙໑໘ ການດັດແປງລັຖທັມມະນູນຄັ້ງທີ່ ໑໙ ຖືກພິຈາລະນາໃນສະພາຕ່ຳ. ໃນເດືອນມິຖຸນາ ໑໙໑໙ ສະພາສູງເຫັນດີການດັດແປງແລະໃນເດືອນ ສິງຫາ ໑໙໒໐ ການດັດແປງດັ່ງກ່າວຖືກຮັບຮູ້ຈາກສາມສ່ວນສີ່ຂອງຈຳນວນລັຖທັງໝົດ ໃນທີ່ສຸດກໍໄດ້ກາຍເປັນສ່ວນໜຶ່ງໃນລັຖທັມມະນູນຂອງສະຫະລັຖ.

ບົດຝຶກຫັດ

໑. ຄຳທວຍຊອກຫາສັບ :

ຄຳແນະນຳ : ຈົ່ງຊອກຫາສັບແລ້ວຂີດວົງກົມອ້ອມສັບຕ່າງໆທີ່ມີໃນຕະລາງສັບຂ້າງລຸ່ມນີ້. ໃຫ້ຊອກຫາສັບດັ່ງກ່າວຕາມທາງຕັ້ງ ທາງນອນ ແລະທາງຂວາງ. ເມື່ອພົບເຫັນສັບແລ້ວ ໃຫ້ຂຽນສັບທີ່ຫາໄດ້ນັ້ນໄວ້ພ້ອມຂຽນຄວາມໝາຍຂອງສັບນັ້ນລົງໄປ.

EQUALITY
SENECA FALLS
WITNESSES
LEGISLATURE
SERVITUDE
RIGHTS
ELECTION

REFORM
ORGANIZE
SENTIMENT
PASSAGE
SENATE
VICTORIES
SYSTEM

RACE
CONVENTION
TERRITORIAL
DYNAMITE
PRESSURE
EDUCATION
ANTISLAVE

PETITION
SUFFRAGE
WYOMING
GAIN
POLITICAL
CONGRESS
PREVIOUS

C	Y	T	I	L	A	U	Q	E	S	O	T	S	E	L	S	P
O	S	E	N	E	C	A	F	A	L	L	S	E	D	E	E	O
N	T	E	R	R	I	T	O	R	I	A	L	R	U	G	N	L
V	Z	W	I	T	N	E	S	S	E	S	R	V	C	I	T	I
E	J	D	Y	N	A	M	I	T	E	R	E	I	A	S	I	T
N	P	R	E	S	S	U	R	E	X	I	F	T	T	L	M	I
T	E	L	E	C	T	I	O	N	Z	G	O	V	I	A	E	C
I	A	N	T	I	S	L	A	V	E	H	R	D	O	T	N	A
O	O	R	G	A	N	I	Z	E	X	T	M	E	N	U	T	L
N	P	E	T	I	T	I	O	N	O	S	E	C	A	R	O	S
S	U	F	F	R	A	G	E	S	E	N	A	T	E	E	Z	Y
V	O	T	E	H	P	A	S	S	A	G	E	G	A	I	N	S
W	Y	O	M	I	N	G	V	I	C	T	O	R	I	E	S	T
C	O	N	G	R	E	S	S	P	R	E	V	I	O	U	S	E
A	M	E	N	D	M	E	N	T	T	N	E	M	E	V	O	M

໒. ການປະກອບສັບແລະຄຳອະທິບາຍໃຫ້ຖືກຕ້ອງ : ຈົ່ງຈັດເອົາແຕ່ລະສັບຄຳເຂົ້າໃນໝວດ (ກ) ໃຫ້ຖືກກັບຄຳອະທິບາຍທີ່ມີໃນໝວດ (ຂ). ຈົ່ງຂຽນຄຳຕອບຕາມຕົວເລກໃສ່ຊ່ອງ ວ່າງທີ່ປະໄວ້ໜ້າສັບຄຳຕອບທຸກຄຳ.

ໝວດ (ກ)	ໝວດ (ຂ)
______ ກ. ດິນແດນ	໑. ການຮັບຮູ້ຄຳສະເໜີໃຫ້ເປັນກົດໝາຍ
______ ຂ. ພະຍານ	໒. ຄວາມແຕກຕ່າງລະຫວ່າງຊາຍແລະຍິງ
______ ຄ. ຮັບຮູ້	໓. ເຂດຊຶ່ງຍັງບໍ່ທັນຖືກຮັບຮູ້ໃຫ້ເປັນລັດ ແຕ່ມີສະຖາບັນ ເຮັດກົດໝາຍຂອງຕົນເອງ.
______ ງ. ການປະຊຸມ	໔. ຜູ້ທີ່ໃຫ້ຫຼັກຖານໂດຍການປະຕິຍານໃນສານ
______ ຈ. ການປ່ອນບັດ	໕. ການຊຸມນຸມຂອງຫຼາຍຝ່າຍເພື່ອພິຈາລະນາເລື່ອງໃດເລື່ອງ ນຶ່ງພິເສດ.
______ ສ. ຂຍັນຂັນແຂງ	໖. ສິດໃນການລົງຄະແນນສຽງ
______ ຊ. ຫ້າມ	໗. ການຖືກບັງຄັບໃຫ້ເຮັດວຽກສຳລັບຜູ້ອື່ນໂດຍບໍ່ມີ ອິສະລະພາບ.
______ ຍ. ເປັນທາດ	໘. ໝາຍເຖິງຄວາມກົດດັນໃຫ້ເກີດຂຶ້ນ
______ ດ. ບີບ	໙. ເງິນຕົ້ນຂອງລາຍເງິນ
______ ຕ. ເພດ	໑໐. ຄວາມພະຍາຍາມເພື່ອໃຫ້ເກີດປະໂຍດ.

໓. ຖືກ ຫຼື ຜິດ :

ຈົ່ງອ່ານປະໂຫຍກແຕ່ລະປະໂຫຍກຕໍ່ລົງໄປນີ້ ແລ້ວໃຫ້ໝາຍ T ໃສ່ໜ້າຖ້າເຫັນວ່າປະໂຫຍກນັ້ນຖືກ. ຖ້າຜິດໃຫ້ໝາຍ F.

________ ໑. ຈົນເຖິງສົງຄາມກາງເມືອງ ພວກຜູ້ຍິງໃນສະຫະລັດອະເມຣິກາມີສິດທິຫຼາຍຢ່າງ.

________ ໒. ກ່ອນສົງຄາມກາງເມືອງ ພວກຜູ້ຍິງມີສິດເປັນພະຍານໃນສານ.

________ ໓. ເຂົາເຈົ້າເກືອບຈະບໍ່ມີສິດທາງການເມືອງດັ່ງນັ້ນຈຶ່ງບໍ່ມີສິດລົງຄະແນນສຽງເລືອກຕັ້ງ.

________ ໔. ພວກຜູ້ຍິງມີບົດບາດສຳຄັນໃນຂະບວນການຕໍ່ຕ້ານຂ້າທາດ.

________ ໕. ໃນປີ ໑໙໒໐ ພະນັກງານຜູ້ຍິງເຂົ້າຮ່ວມການປະທ້ວງກັບພະນັກງານຜູ້ຊາຍເພື່ອຂໍຮ້ອງ
ຂຶ້ນຄ່າຈ້າງໃນ Rhode Island.

________ ໖. ໃນປີ ໑໙໑໙ ຄຳສເນີດັດແປງລັດຖທັມມະນູນຄັ້ງທີ່ ໑໙ ໄດ້ຜ່ານສະພາສູງ ແລະໃນເດືອນ
ມິຖຸນາ ໑໙໒໐ ໄດ້ກາຍເປັນສ່ວນນຶ່ງຂອງລັດຖທັມມະນູນຂອງສະຫະລັດ.

________ ໗. ໃນລະຫວ່າງປີ ໑໘໖໔ ແລະ ໑໙໑໐ ພວກຜູ້ຍິງໄດ້ໃຊ້ຄວາມພະຍາຍາມຢ່າງຫຼວງຫຼາຍເພື່ອ
ໃຫ້ໄດ້ສິດໃນການປ່ອນບັດ.

________ ໘. ຜູ້ຍິງຈຳນວນຫຼາຍ ມີປະສົບປະການອັນລ້ຳຄ່າໃນການເຂົ້າຮ່ວມຂະບວນການທີ່ມີຈຸດ
ປະສົງແກ້ໄຂສະພາບການຕ່າງໆ.

________ ໙. ກອງປະຊຸມນີ້ຈັດຂຶ້ນໂດຍນາງ Lucretia Mott , ແລະນາງ Elizabeth
Cady Stanton ຊຶ່ງເປັນຜູ້ຂັນອັນແຂງ.

________ ໑໐. ໃນລະດູແລ້ງຂອງປີ ໑໘໖໖ ຮ່າງດັດແປງລັດຖທັມມະນູນຄັ້ງທີ່ ໑໔ ໄດ້ມາເຖິງສະພາ.

໔. ຕື່ມຄຳເວົ້າໃສ່ຊ່ອງວ່າງ :

ຈົ່ງຕື່ມຄຳເວົ້າທີ່ບອກຄຳເວົ້າຕໍ່ລົງໄປນີ້ໃສ່ໃນຊ່ອງວ່າງທີ່ມີໃນແຕ່ລະປະໂຍກໃຫ້ໄດ້ຄວາມໝາຍອັນຖືກຕ້ອງ.

ມະຫາວິທະຍາໄລຜູ້ຍິງ, ຈັບສິນດາວງ, ປະທານາທິບໍດີ Wilson, , ຫີບ, ກອງປະຊຸມ, ສິດປ່ອນບັດ, ຄຳປະກາດຄວາມຮູ້ສຶກແລະຄວາມເຫັນ, ຢ່າງບໍ່ຄາດຝັນ, ການປ່ອນບັດ, ໂຮງຮຽນຜູ້ຍິງ.

໑. ຜູ້ຍິງທີ່ຍັງເປັນໂສດມີສິດເປັນເຈົ້າຂອງ ____________________ , ແຕ່ຜູ້ທີ່ແຕ່ງງານແລ້ວບໍ່ມີ.

໒. ໃນປີ ໑໘໒໑ ນາງ Emma Willard ໄດ້ເປີດ ____________________ ໃນເມືອງ Troy ລັດ New York.

໓. ໃນເດືອນ ກໍຣະກະດາ ປີ ໑໘໔໘ ພວກຜູ້ຍິງເຂົ້າ ____________________ ທີ່ Seneca Falls ລັດ New York.

໔. ໃນກອງປະຊຸມພວກຜູ້ຍິງໄດ້ເຮັດ ____________________ ແລະ ____________________ ຊຶ່ງຂະບວນການສິດທິຂອງຜູ້ຍິງໄດ້ໃຊ້ເປັນແນວທາງໃນຂັ້ນຕໍ່ມາ.

໕. ໃນທ້າຍຂອງສົງຄາມກາງເມືອງ ເຣື່ອງກ່ຽວກັບ ____________________ ໄດ້ກາຍເປັນເປົ້າໝາຍສຳຄັນສຳລັບຂະບວນການສິດທິຂອງຜູ້ຍິງ.

໖. ໄຊຊະນະຄັ້ງທຳອິດທີ່ແທ້ຈິງໃນການຕໍ່ສູ້ເພື່ອສິດໃນການປ່ອນບັດເລືອກຕັ້ງຂອງຜູ້ຍິງນັ້ນ ເກີດຂຶ້ນ ____________________ ໃນແຫ່ງນຶ່ງຂອງປະເທດຄືໃນດິນແດນຂອງ Wyoming.

໗. ຫຼັງຈາກປີ ໑໙໐໐ ຄວາມພະຍາຍາມພາໃຫ້ພວກຜູ້ຍິງໄດ້ ____________________.

໘. ພວກຜູ້ຍິງໄດ້ ____________________ ພວກນັກການເມືອງແລະທຸກສ່ວນໃນວົງການການເມືອງ.

໙. ໃນປີ ໑໙໑໘ ____________________ ໄດ້ເຂົ້າກອງປະຊຸມຂອງ The National American Suffrage Association ແລະໄດ້ອອກສຽງສນັບສນູນສິດທິຂອງຜູ້ຍິງໃນການປ່ອນບັດ.

໑໐. ໃນປີ ໑໘໓໗ ນາງ Mary Lyon ເປັນຜູ້ນຶ່ງທີ່ຊ່ອຍໃນການກໍ່ຕັ້ງມະຫາວິທະຍາໄລ Holyoke College ໃນ Massachusetts ຊຶ່ງເປັນ ______________ ________ ແຫ່ງແລກໃນສະຫະລັດອະເມຣິກາ.

Section VII
Depression
And Global Conflict

Section VII: DEPRESSION AND GLOBAL CONFLICT

ໝວດ ກ : ການເສື່ອມໂຊມດ້ານເສຖກິດແລະຂັດແຍ່ງທົ່ວໄປ

Packet 25: THE ERA OF FRANKLIN DELANO ROOSEVELT

ພາກ ໒໕ : ສໄໝການປົກຄອງຂອງ

ສັບໃໝ່ :
NEW WORDS

despair: ຄວາມສິ້ນຫວັງ

The 13 million unemployed felt despair.

inspection: ການສຳຫຼວດ ຫຼື ກວດກາ

There was an inspection at the American Bank.

Emergency Banking Act: ດຳລັດກ່ຽວກັບການຄຸ ຂຸມກິຈການຂອງທະນາຄານ

Congress passed the Emergency Banking Act to regulate banking business.

Federal Deposit Insurance Corporation: ອົງການຈັດຕັ້ງໂດຍສະພາເພື່ອໃຫ້ການປ້ອງກັນເງິນຂອງ ຜູ້ເອົາເຂົ້າຝາກຕາມທະນາຄານຕ່າງໆ

The Federal Deposit Insurance Corporation insured saving accounts to protect depositors.

depositors: ຜູ້ທີ່ເອົາເງິນຝາກໄວ້ໃນທະນາຄານ.

Civilian Conservation Corps Act: ດຳລັດຈັດຕັ້ງເພື່ອຫາວຽກໃຫ້ຊາວໜຸ່ມ

The Civilian Conservation Corps hired men to work in reforestation and flool control.

reforestation: ການປູກປ່າໄມ້

flood control: ການປ້ອງກັນນ້ຳຖ້ວມ

Work Progress Administration: ໂຄງການສ້າງເຂື່ອນ ສ້າງຂົວ ສ້າງເດີ່ນບິນ ແລະ ສ້າງຕຶກຂອງລັຖບານ.

The Work Progress Administration built public building.

477

public building: ຕຶກຣັຖບານ.

Agricultural Adjustment Act: ດຳຣັດກ່ຽວກັບການປັບປຸງກະເສດກັມ

The Agricultural Adjustment Act helped farmers.

Tennessee Valley Authority: ໂຄງການປ້ອງກັນນ້ຳຖ້ວມແລະຜລິດໄຟຟ້າຂອງຣັຖບານ Tennessee

The Tennessee Valley Authority was established to control floods and to produce cheap electric power.

electric power: ກະແສໄຟຟ້າ

direction: ທິດທາງ

In 1935 Roosevelt changed the direction of the New Deal.

Social Security Act: ດຳຣັດກ່ຽວກັບການວາງແຜນປະກັນພັຍສຳຫຼັບຜູ້ສູງອາຍຸ

Unemployment insurance was a part of the Social Security Act.

insurance: ປະກັນພັຍ.

READING

25.1. A NATION IN DESPAIR: FRANKLIN DELANO ROOSEVELT ELECTED

25.1.1. 1929 to 1933 were terrible years for the American people. Thirteen million people were unemployed with no unemployment insurance, no pension, and no welfare system to help them. Farm prices were so low that farmers could not get enough money to pay their debts. The people no longer trusted the banking system because two-thirds of the nation's banks were closed. The people wanted a change in leadership. They elected the Democrat, Franklin Delano Roosevelt, who was promising the nation a "New Deal".

25.2. THE FIRST NEW DEAL

25.2.1. President Roosevelt took office in 1932 at the worst point in the Depression. Under the President's leadership, Congress moved quickly to pass many laws that gave him more power to implement his New Deal Programs. Roosevelt also organized a new cabinet to deal with the bad situation and set up a group of advisors to give him new ideas. This group was called the "Brain Trust". Both the cabinet and the "Brain Trust" helped the President to state the main objectives of the New Deal: to provide jobs for the unemployed, to restore the economy and to prevent the failure of the banking system.

25.3. RESTORING THE BANKING SYSTEM

25.3.1. President Roosevelt wanted to restore order to the banking system. He declared a "bank holiday" and closed down all the banks in the United States. During this time all the banks were **inspected**. Only the strong ones were allowed to reopen. Congress passed the **Emergency Banking Act** to regulate the banking business. To protect the **depositors**, Congress also set up the **Federal Deposit Insurance Corporation** that insured savings accounts.

25.4. JOBS FOR THE UNEMPLOYMENT

25.4.1. In 1933, there were 13,000,000 people who lost their jobs. The federal government set up many agencies to create new jobs and to hire more workers. In March 1933, the **Civilian Conservation Corps** was established, and 300,000 young men were hired to work in **reforestation** and **flood control** projects. In 1935, the **Work Progress Administration** was set up to put more unskilled and skilled workers to work on the new projects. WPA workers built dams, bridges, airports, and **public buildings**. Some 8,000,000 people had found jobs with WPA by 1943.

25.5. HELPING THE FARMERS

25.5.1. The government also helped the farmers by passing the **Agricultural Adjustment Act**. This act established minimum farm prices and government control over farm production.

Farmers were paid subsidies to reduce production and keep farm prices up. They also could benefit from cheap electric power that was supplied by the Rural Electrification Administration.

25.6. THE TENNESSEE VALLEY AUTHORITY (TVA)

25.6.1. One of the most remarkable results of the New Deal was the TVA. The TVA was a government project established in 1933 to control floods and produce cheap electric power in the Tennessee River Valley. This project also added cultivated lands to six states: Virginia, Kentucky, Tennessee, Alabama, Georgia, and North Carolina.

25.6.2. The American people believed that the TVA was a great success, and there were demands for the same kind of project in other parts of the country. But the TVA also brought sharp attacks, especially from the businessmen. They criticized the project as unfair competition by the government against private business.

25.7. THE SECOND NEW DEAL

25.7.1. Beginning in 1935, President Roosevelt began to change the direction of the First New Deal. This change was considered to be the start of the Second New Deal. The First New Deal was criticized by businessmen and industrialists. They thought the government wanted to control their business. But the majority of the American people were very pleased with the measures taken by President Roosevelt. They elected him for a second term in 1936.

25.7.2. The Second New Deal focused on social reforms. President Roosevelt was concerned for retired and disabled people. He urged Congress to pass the **Social Security Act** which set up a plan for old age **insurance**. Under this act the retired and disabled received a **pension** from the government. Another part of the act set up an unemployment insurance plan that let qualified persons who lost their jobs receive an income for a limited time.

25.7.3. By the early part of 1937 there were signs of a business **recovery**. The rate of umemployment was down and productions and profits were up. President Roosevelt felt that his measures were taking hold. He began to **cut back** spending for public aid and job programs. However, this cutback caused many damages to business. Production fell sharply and some factories were closed. The jobless rate went up. To fight this business turndown, Roosevelt urged Congress to increase funding for the New Deal and it was prolonged for two more years.

25.7.4. In 1939, President Roosevelt declared that the New Deal would come to an end. However, he did ensure the continuance of a very important part of the New Deal, the Social Security Act. The New Deal had given help to thousands of Americans but it also received a great deal of **opposition** from businessmen and industrialists. They were afraid that the government projects would compete with private projects.

EXERCISES

I. Word search puzzle:

Direction: Find and circle the words in the word puzzle below. The words will be found vertically, horizontally, and diagonally. When you find a word in the puzzle, write it and then define it.

ຄຳແນະນຳ : ຈົ່ງຊອກຫາສັບແລ້ວຂີດວົງກົມອ້ອມສັບຕ່າງໆທີ່ມີໃນຕະລາງສັບຂ້າງລຸ່ມນີ້. ໃຫ້ຊອກຫາສັບເຫຼົ່ານັ້ນຕາມທາງຕັ້ງ ທາງນອນ ແລະທາງຂວາງ. ເມື່ອພົບຄຳສັບນັ້ນແລ້ວໃຫ້ຂຽນເອົາໄວ້ພ້ອມກັບຂຽນຄຳອະທິບາຍກຳກັບໄວ້ພ້ອມ.

DEBT
BANKING
ADVISOR
PUBLIC
FLOOD
UNFAIR
CUTBACK
PENSION
INSPECTION

REFORESTATION
FLOOD CONTROL
TENNESSEE
VALLEY
AUTHORITY
SOCIAL SECURITY ACT
INSURANCE

NEW DEAL
CRASH
RESTORE
BUILDING
COMPETITION
OPPOSITION
RECOVERY
DESPAIR
DEPOSITOR

I N S P E C T I O N D I R E C T I O N

D E P O S I T O R E C O V E R Y T B E

E P U B L I C B U I L D I N G G O A W

S O P P O S I T I O N P E N S I O N D

P F L O O D C O N T R O L D O O R K E

A T E N N E S S E E V A L L E Y O I A

I A U T H O R I T Y C U T B A C K N L

R E F O R E S T A T I O N D E B T G E

D I R E C T I O N I N S U R A N C E R

S O C I A L S E C U R I T Y A C T S A

C R A S H A D V I S O R R E S T O R E

P U B L I C B U I L D I N G F L O O D

C O M P E T I T I O N U N F A I R S I

II. Matching: Match each word in column A with the explanation or definition in column B. Write the number of each in the space provided.

A	B
____ a. despair	1. Undertaking by a company or government to provide safeguard against loss in return for regular payment.
____ b inspection	2. Regular payment made by the State to somebody old, disabled, or widowed, or by a former employer to an employee after long service.
____ c. depositor	3. Point towards which a person or things looks or faces.
____ d. reforestation	4. A person who deposits money in a banks.
____ e. direction	5. The state of having lost all hope.
____ f. Insurance	6. An official visit to see that work is done properly or rules are obeyed.
____ g. pension	7. Replanting with forest trees.
____ h. recovery	8. The state of being opposite or opposed.
____ i. dam	9. Get well again quickly or quickly regain one's position after losing for a time.
____ j. opposition	10. Barrier built to keep back water and raise its level.

III. True or False

Read each statement. Put a T next to each statement if it is true. Put a F in that space if it is false.

____ 1. From 1929 to 1933, the American people were in the worst situation.

____ 2. During the depression people did not trust the banking system.

____ 3. The main objectives of the New Deal were: to provide jobs for employed, to restore the economy, and to prevent the crash of the banking system.

____ 4. President Roosevelt did not want to put the banking system back on its course.

____ 5. Congress passed the Emergency Banking Act to regulate the banking business.

____ 6. One of the remarkable results of the New Deal was the Tennessee Valley Authority (TVA).

____ 7. The First New Deal was appreciated by businessmen and industrialists.

____ 8. The Second New Deal focussed on social reforms.

____ 9. The cutback of money for public aid and job programs caused much damage to business.

____10. One of the social reforms was the unemployment insurance plan that let qualified persons who lost their jobs receive an income for a limited time.

IV. Fill in the blanks: Complete each statement by writing the correct word or group of words in the blanks: direction, Brain trust, unfair, bank holiday, farm production, reforestation, pension, Agricultural Ajustment Act, electric power, social reforms.

1. President Roosevelt organized a new cabinet to deal with the bad situation and set up a group of advisors to give him new ideas. This group was called the _______ .
2. President Roosevelt declared a ________ closing down all the banks in the United States.
3. In March, 1933, the Civilian Conservation Corps was established and 300,000 young men were hired to work in _________ and flood control projects.
4. The government also helped the farmers by the _________.
5. The TVA was a government project established in 1933 to control floods and produce cheap ____________ in the Tennessee River Valley.
6. The Second New Deal focussed on __________ .
7. Under the Social Security Act, retired and disabled persons received a _________ from the government.
8. The Agricultural Adjustment Act set up minimum farm prices and government control over ___________ .
9. The businessmen criticized the TVA Project as the ______ competition by the government against private business.
10. Beginning in 1935, President Roosevelt began to change the ________ of the First New Deal.

ບົດອ່ານ

໒໘.໑. ປະເທດຊາດຢູ່ໃນຄວາມສິ້ນຫວັງ : ທ່ານ Franklin Delano Roosevelt ຖືກເລືອກຕັ້ງ.

໒໘.໑.໑. ຈາກປີ ໑໙໒໙ ຫາ ໑໙໓໓ ປະຊາຊົນອະເມຣິກັນຕົກຢູ່ໃນສະພາບອັດສົນທີ່ສຸດ. ຈຳນວນຄົນວ່າງງານໄດ້ຖີບຕົວຂຶ້ນເຖິງໃນລະຫວ່າງ ໑໒ ລ້ານຄົນ ລາຄາຂອງເຄື່ອງປູກຂອງຝັງຕົກຕ່ຳ ຈົນພວກຊາວນາບໍ່ມີເງິນພຽງພໍທີ່ຈະໃຊ້ໜີ້ຂອງເຂົາເຈົ້າໄດ້. ທະນາຄານໃນປະເທດຈຳນວນສອງສ່ວນສາມໄດ້ປິດກິຈການໄປ ຊຶ່ງເປັນເຫດໃຫ້ປະຊາຊົນບໍ່ມີຄວາມໄວ້ໃຈຕໍ່ທະນາຄານອີກຕໍ່ໄປ. ຕໍ່ໜ້າສະພາບການເຊັ່ນນີ້ ປະຊາຊົນຕ້ອງການປ່ຽນຜູ້ນຳ ສະນັ້ນເຂົາເຈົ້າຈຶ່ງໄດ້ເລືອກເອົາທ່ານ

໒໘.໒. ໂຄງການ New Deal ໜຶ່ງ

໒໘.໒.໑. ໃນເວລາທີ່ປະທານາທິບໍດີ Roosevelt ເຂົ້າຮັບຕຳແໜ່ງນັ້ນປະເທດຊາດຢູ່ໃນຄວາມມືດມົນຢ່າງທີ່ສຸດ. ດັ່ງນັ້ນທ່ານຈຶ່ງໄດ້ເອົາມາດຕະການອັນສຣບຂາດ. ພາຍໃຕ້ການນຳພາຂອງທ່ານໄດ້ມີດຳຣັດຫຼາຍດຳຣັດດ້ວຍກັນທີ່ສະພາຮັບຮູ້ໃຫ້ເປັນກົດໝາຍອອກມາເພື່ອໃຫ້ທ່ານມີອຳນາດຫຼາຍຂຶ້ນໃນການປະຕິບັດໂຄງການທີ່ເອີ້ນວ່າ The New Deal Program.

໒໘.໒.໒. ຈຸດໝາຍອັນສຳຄັນຂອງ The New Deal ຄື : ເພື່ອຈັດຫາວຽກງານໃຫ້ແກ່ຜູ້ວ່າງງານ ເພື່ອຟື້ນຟູເສດຖກິດ ແລະ ເພື່ອປ້ອງກັນບໍ່ໃຫ້ທະນາຄານລົ້ມລະລາຍ. ທ່ານ Roosevelt ໄດ້ຈັດຕັ້ງຄະນະຣັຖບານໃໝ່ເພື່ອແກ້ໄຂບັນຫາຫຍຸ້ງຍາກທົ່ວໄປ ພ້ອມດຽວກັນນັ້ນທ່ານຍັງໄດ້ຕັ້ງຄະນະທີ່ປຶກສາຂຶ້ນເພື່ອທ່ານຈະໄດ້ຄວາມຄິດໃໝ່ໆ. ຄະນະດັ່ງກ່າວເອີ້ນວ່າ the "Brain Trust". ທັງສອງຄະນະຄື ຄະນະຣັຖບານແລະຄະນະທີ່ປຶກສາເປັນຜູ້ຊ່ວຍປະທານາທິບໍດີໃນການປະຕິບັດໂຄງການ The New Deal.

໒໘.໓. ການຟື້ນຟູທະນາຄານ

໒໘.໓.໑. ປະທານາທິບໍດີ Roosevelt ຕ້ອງການໃຫ້ທະນາຄານທັງຫຼາຍກັບຄືນສູ່ສະພາບເດີມ. ທ່ານໄດ້ປະກາດໃຫ້ທະນາຄານຢຸດພັກຮ້ອງວ່າ " bank holiday " ເພື່ອປິດທະນາຄານ

ທັງຫມົດໃນສະຫະຣັຖ. ໃນຣະຫວ່າງຍຸດນັ້ນ ທະນາຄານທັງຫມົດຖືກສັ່ງອັດ. ຫຼັງຈາກນັ້ນທາງການອະນຸຍາດໃຫ້ພຽງແຕ່ທະນາຄານທີ່ມີຄວາມແຫນ້ນຫນາເທົ່ານັ້ນເປີດກິຈການໄດ້. ສະພາໄດ້ອອກດໍາຣັດ The Emergency Banking Act ເພື່ອຄວບຄຸມກິຈການຂອງທະນາຄານຕໍ່ໄປ. ເພື່ອປ້ອງກັນຜູ້ຝາກເງິນໃນທະນາຄານ ສະພາໄດ້ຕັ້ງບໍຣິສັດປະກັນໄພອັນຫນຶ່ງຄືບໍຣິສັດ The Federal Deposit Insurance Corporation ເພື່ອປະກັນເງິນທອງສິນທີ່ຜູ້ຄົນຝາກໄວ້ໃນທະນາຄານຕ່າງໆ.

໒໕.໔. ການຈັດວຽກສໍາລັບແກ້ໄຂການວ່າງງານ

໒໕.໔.໑. ໃນປີ ໑໙໓໓ ມີຄົນວ່າງງານຢູ່ທັງຫມົດ ໑໓ ລ້ານຄົນ. ຣັຖບານກາງໄດ້ຕັ້ງອົງການຂຶ້ນຈໍານວນຫຼາຍທັງນີ້ກໍເພື່ອໃຫ້ວຽກການໃຫມ່ພ້ອມກັບຈ້າງເອົານັກວຽກງານຫຼາຍຂຶ້ນ. ໃນເດືອນ ມີນາ ໑໙໓໓ ໄດ້ມີການຈັດຕັ້ງອົງການນຶ່ງຂຶ້ນເອີ້ນວ່າ The Civilian Conservation Corps. ອົງການນີ້ໄດ້ຈ້າງເອົາຊາວຫນຸ່ມສາມແສນຄົນເພື່ອເຮັດວຽກໃນໂຄງການປູກປ່າ ແລະໂຄງການປ້ອງກັນນໍ້າຖ້ວມ. ໃນປີ ໑໙໓໕ ໄດ້ມີແຜນການໃຫມ່ເກີດຂຶ້ນເພື່ອຮັບເອົາທັງນັກວຽກງານທີ່ມີຝີມື ແລະບໍ່ມີຝີມື ເຂົ້າເຮັດວຽກໃນໂຄງການໃຫມ່ ເຊັ່ນ ໂຄງການສ້າງເຂື່ອນ ສ້າງຂົວ ສ້າງເດີ່ນບິນ ແລະສ້າງຕຶກຂອງຫຼວງ. ເຖິງປີ ໑໙໔໓ ມີປະມານ ໘ ລ້ານຄົນທີ່ໄດ້ວຽກຈາກແຜນການທີ່ກ່າວມານັ້ນ.

໒໕.໕. ການອຸ້ມຊູຊ່ວຍເຫຼືອພວກຊາວນາ

໒໕.໕.໑. ຣັຖບານໄດ້ໃຫ້ການຊ່ວຍເຫຼືອແກ່ພວກຊາວນາເຊັ່ນດຽວກັນຊຶ່ງຣັຖບານໄດ້ປະຕິບັດຕາມດໍາຣັດກ່ຽວກັບການປັບປຸງກະເສດ Agricultural Adjustment Act. ດໍາຣັດດັ່ງກ່າວໄດ້ວາງອັດຕາຣາຄາເຄື່ອງປູກຂອງຝັງຕໍ່າສຸດໄວ້ແລະໄດ້ມອບໃຫ້ຣັຖບານເປັນຜູ້ຄວບຄຸມການຜລິດຂອງຊາວນາ. ເພື່ອຕັດການຜລິດເຄື່ອງປູກຂອງຝັງລົງແລະເພື່ອໃຫ້ຣາຄາສູງຂຶ້ນ ພວກຊາວນາໄດ້ຮັບເງິນຊ່ວຍເຫຼືອພິເສດ. ນອກຈາກນີ້ເຂົາເຈົ້າຍັງໄດ້ຮັບອະນຸຍາດໃຫ້ໃຊ້ໄຟຟ້າໃນຣາຄາຖືກ ຊຶ່ງແມ່ນ The Rural Electrification Administration ເປັນຜູ້ຈໍາຫນ່າຍໃຫ້.

໒໕.ຕ. ໂຄງການ The Tennessee Valley Authority (TVA)

໒໕.ຕ.໑. ຜົນຂອງໂຄງການ New Deal ຢ່າງນຶ່ງທີ່ເດັ່ນກໍ່ຄືໂຄງການ TVA. ໂຄງການ TVA ເປັນໂຄງການຂອງຣັຖບານທີ່ໄດ້ຈັດຂຶ້ນໃນປີ ໑໙໓໓ ເພື່ອຄວບຄຸມແລະປ້ອງກັນນ້ຳຖ້ວມແລະເພື່ອຜລິດກະແສໄຟຟ້າໃນຂາລາຈັກຢູ່ທີ່ Tennessee River Valley. ໂຄງການນີ້ໄດ້ເພີ້ມດິນປູກຝັງໃນຫົກຣັຖດ້ວຍກັນຄື : Virginia, Kentucky, Tennessee, Alabama, Georgia, North Carolina.

໒໕.ຕ.໒. ປະຊາຊົນອະເມຣິກັນເຫັນວ່າໂຄງການ TVA ເປັນໂຄງການທີ່ໄດ້ຜົນສຳເຣັດຢ່າງໃຫຍ່ຫລວງ ດັ່ງນັ້ນຈຶ່ງໄດ້ມີການຂໍຮ້ອງໃຫ້ຣັຖບານຈັດໂຄງການໃນທຳນອງດຽວກັນນີ້ໃນແຂວງອື່ນຂອງປະເທດ. ໃນຂະນະດຽວກັນ ໂຄງການ TVA ກໍ່ໄດ້ຮັບການໂຈມຕີເຊັ່ນດຽວກັນ ໂດຍສະເພາະຈາກນັກທຸຣະກິດການຄ້າຕ່າງໆ. ເຂົາເຈົ້າເຫັນວ່າໂຄງການປະເພດນີ້ເປັນການແຂ່ງຂັນທີ່ບໍ່ເປັນທັມລະຫວ່າງຣັຖບານແລະກິຈການຂອງເອກກະຊົນ.

໒໕.ຖ. ໂຄງການ New Deal ທີ່ສອງ

໒໕.ຖ.໑. ເລີ້ມຈາກປີ ໑໙໓໕ ປະທານາທິບໍດີ Roosevelt ໄດ້ທຳການປ່ຽນທິດທາງໂຄງການ New Deal ທີ່ນຶ່ງ. ການປ່ຽນແປງທິດທາງຄັ້ງນີ້ເປັນການເລີ້ມຕົ້ນຂອງໂຄງການ New Deal ທີ່ສອງໃນຕົວ. ໂຄງການທີ່ນຶ່ງນັ້ນຖືກໂຈມຕີຈາກນັກທຸຣະກິຈການຄ້າແລະພວກເຈົ້າຂອງໂຮງງານເພາະເຂົາເຈົ້າວ່າຣັຖບານມີຄວາມປະສົງຄວບຄຸມກິຈການຂອງເຂົາເຈົ້າ. ແຕ່ປະຊາຊົນອະເມຣິກັນສ່ວນໃຫຍ່ມີຄວາມພໍໃຈກັບພາກປະຕິບັດຂອງປະທານາທິບໍດີ Roosevelt ດ້ວຍເຫດນີ້ເອງເຂົາເຈົ້າຈຶ່ງໄດ້ເລືອກຕັ້ງໃຫ້ທ່ານດຳເນີນກິຈການຕື່ມອີກຊຸດນຶ່ງໃນປີ ໑໙໓໖.

໒໕.ຖ.໒. ໂຄງການ New Deal ທີ່ສອງນັ້ນເນັ້ນໜັກໃສ່ການປະຕິຮູບທາງສັງຄົມ. ປະທານາທິບໍດີ Roosevelt ມີຄວາມເປັນຫ່ວງກັບພວກທີ່ອອກກິນເບັ້ຍບຳນານແລະພວກເສັຽອົງຄະຕ່າງໆ. ທ່ານໄດ້ຊຸກຍູ້ໃຫ້ສະພາອອກດຳຣັດກ່ຽວກັບສວັສດິການສັງຄົມຄື Social Security Act ເພື່ອຈັດໃຫ້ມີປະກັນໄພສຳຫລັບຜູ້ທີ່ສູງອາຍຸໝາຍຄວາມວ່າຜູ້ທີ່ອອກກິນເບັ້ຍບຳນານແລະຜູ້ເສັຽອົງຄະມີສິດໄດ້ຮັບເງິນຊ່ວຍເຫລືອຈາກຣັຖບານ. ນອກຈາກນີ້ດຳຣັດດັ່ງກ່າວຍັງຈັດໃຫ້ມີແຜນປະກັນການວ່າງງານຊຶ່ງອະນຸຍາດໃຫ້ຜູ້ທີ່ຕົກງານແລະທີ່ທາງການເຫັນວ່າມີສິດໄດ້ຮັບອາຍໄດ້ໃນຣະຍະເວລາຈຳກັດຈາກຣັຖບານ.

໒໕.ກ.໓. ໃນຕົ້ນປີ ໑໙໓໗ ປາກົດວ່າ ກິຈການການ[illegible]ດີຂຶ້ນ. ຈຳນວນຂອງຄົນວ່າງງານມີນ້ອຍລົງ ສ່ວນການຜລິດຜົນແລະຜົນກຳໄລໄດ້ເພີ່ມຂຶ້ນ. ປະທານາທິບໍດີຄິດວ່າແຜນການທີ່ທ່ານວາງໄປນັ້ນໄດ້ຜົນເປັນທີ່ໃຈໄດ້ ດັ່ງນັ້ນທ່ານຈຶ່ງເລີ່ມທຳການຕັດເງິນຊ່ວຍເຫຼືອຂອງຣັຖແລະໂຄງການຈັດວຽກງານລົງ. ແຕ່ການຕັດເງິນຊ່ວຍເຫຼືອດັ່ງກ່າວສ້າງຄວາມເສັຍຫາຍຕໍ່ກິຈການການຄ້າເປັນຢ່າງຫຼາຍ. ເປັນເຫດໃຫ້ການຜລິດຂອງໂຮງງານຫຼຸດລົງຢ່າງຫຼວງຫຼາຍ ແລະໂຮງງານບາງໂຮງງານກໍໄດ້ປິດກິຈການໄປ. ການວ່າງງານກໍສູງຂຶ້ນ. ເພື່ອປັບປຸງສະພາບການ ສະພາຈຶ່ງຕົກລົງເຫັນດີອະນຸມັດງົບປະມານສຳລັບໂຄງການ New Deal ເພີ່ມຕື່ມອີກສອງປີ.

໒໕.ກ.໔. ໃນປີ ໑໙໓໘ ປະທານາທິບໍດີ Roosevelt ປະກາດຢຸດຕິໂຄງການ New Deal. ເຖິງແມ່ນວ່າໂຄງການນີ້ໄດ້ໃຫ້ການຊ່ວຍເຫຼືອແກ່ວອະເມຣິກັນຈຳນວນຫຼາຍລ້ານຄົນກໍຕາມ ແຕ່ກໍຍັງໄດ້ຮັບການຄັດຄ້ານຈາກພວກນັກທຸລະກິດແລະເຈົ້າຂອງໂຮງງານຢູ່ເພາະວ່າພວກນັ້ນມີຄວາມຢ້ານກົວຕໍ່ການແຂ່ງຂັນຈາກຣັຖບານ. ເຖິງຢ່າງໃດກໍດີຜົນໄດ້ຮັບຈາກໂຄງການ The New Deal ທີ່ສຳຄັນທີ່ສຸດນັ້ນກໍຄືດຳຣັດ Social Security Act ຊຶ່ງຍັງໃຊ້ກັນຢູ່ຈົນເຖິງປັດຈຸບັນນີ້.

ບົດຝຶກຫັດ

໑. ຄຳທວຍຊອກຫາສັບ :

ຄຳແນະນຳ : ຈົ່ງຊອກຫາສັບແລ້ວຂີດວົງກົມອ້ອມສັບຕ່າງໆທີ່ມີໃນກະດານສັບຂ້າງລຸ່ມນີ້. ໃຫ້ຊອກຫາສັບເຫຼົ່ານັ້ນຕາມແນວຕັ້ງ ທາງນອນ ແລະທາງຂວາງ. ເມື່ອພົບຄຳສັບນັ້ນແລ້ວໃຫ້ຂຽນເອົາໄວ້ພ້ອມກັບຂຽນຄຳອະທິບາຍກຳກັບໄວ້ພ້ອມ.

DEBT
BANKING
ADVISOR
PUBLIC
FLOOD
UNFAIR
CUTBACK
PENSION
INSPECTION

REFORESTATION
FLOOD CONTROL
TENNESSEE
VALLEY
AUTHORITY
SOCIAL SECURITY ACT
INSURANCE

NEW DEAL
CRASH
RESTORE
BUILDING
COMPETITION
OPPOSITION
RECOVERY
DESPAIR
DEPOSITOR

I N S P E C T I O N D I R E C T I O N
D E P O S I T O R E C O V E R Y T B E
E P U B L I C B U I L D I N G G O A W
S O P P O S I T I O N P E N S I O N D
P F L O O D C O N T R O L D O O R K E
A T E N N E S S E E V A L L E Y O I A
I A U T H O R I T Y C U T B A C K N L
R E F O R E S T A T I O N D E B T G E
D I R E C T I O N I N S U R A N C E R
S O C I A L S E C U R I T Y A C T S A
C R A S H A D V I S O R R E S T O R E
P U B L I C B U I L D I N G F L O O D
C O M P E T I T I O N U N F A I R S I

໒. ການປະກອບສັບເຂົ້າປະໂຫຍກໃຫ້ໄດ້ຄວາມໝາຍຖືກຕ້ອງ : ຈົ່ງປະກອບສັບແຕ່ລະສັບທີ່ມີໃນໝວດ (ກ) ໃສ່ປະໂຫຍກໃນໝວດ (ຂ) ໃຫ້ໄດ້ຄວາມໝາຍຢ່າງຖືກຕ້ອງ. ໃຫ້ໝາຍເລກໃສ່ໃນຊ່ອງວ່າງທີ່ມີແທນຄຳຕອບ.

ໝວດ (ກ)	ໝວດ (ຂ)
_____ ກ. ຄວາມສິນຫວັງ	໑. ການປະຕິບັດຂອງບໍລິສັດ ຫຼື ອົງການເພື່ອປ້ອງກັນການເສັຍຫາຍໂດຍຈ່າຍເງິນທົດແທນຢ່າງສະໝ່ຳສະເໝີ.
_____ ຂ. ການສຳຫຼວດ	໒. ການຈ່າຍເງິນຢ່າງສະໝ່ຳສະເໝີຈາກລັຖໃຫ້ແກ່ຊະລາ ຜູ້ເສັຍອົງຄະ ຫຼື ນາງໝ້າຍ ເງິນປະເພດນີ້ບາງຄັ້ງກໍແມ່ນນາຍຈ້າງເປັນຜູ້ຈ່າຍໃຫ້ແກ່ພະນັກງານຂອງຕົນທີ່ປະຕິບັດງານມາເປັນເວລາດົນນານ.
_____ ຄ. ຜູ້ຝາກເງິນ	໓. ຈຸດຈົ້ງດິນ ຫຼື ສິ່ງຂອງຕັ້ງໜ້າເອົາສາ.
_____ ງ. ການປູກປ່າ	໔. ຜູ້ທີ່ເອົາເງິນເຂົ້າໄວ້ໃນທະນາຄານ.
_____ ຈ. ທິດທາງ	໕. ສະພາບທີ່ສູນເສັຍຄວາມຫວັງ.
_____ ສ. ປະກັນພັຍ	໖. ການຢ້ຽມຢາມທາງການເພື່ອເບິ່ງວ່າອົງການນັ້ນປະຕິບັດຢ່າງຖືກຕ້ອງຫຼືບໍ່ຫຼືເພື່ອເບິ່ງວ່າລະບຽບການຕ່າງໆນັ້ນມີການປະຕິບັດຕາມຫຼືບໍ່.
_____ ຊ. ເບັ້ຍບຳນານ	໗. ການປູກຕົ້ນໄມ້ໃຫ້ເປັນປ່າຄືນ.
_____ ຍ. ຟື້ນຕົວ	໘. ການມີຄວາມເຫັນແບບກົງກັນຂ້າມຫຼືບໍ່ເຫັນດີ.
_____ ດ. ເຂື່ອນ	໙. ການກັບຄືນດີຢ່າງວ່ອງໄວ.
_____ ຕ. ຄັດຄ້ານ	໑໐. ຄັນຄູສ້າງເພື່ອກັ້ນນ້ຳໄວ້ແລະເຮັດໃຫ້ລະດັບຂອງນ້ຳນັ້ນສູງຂຶ້ນ.

໓. ຖືກ ຫຼື ຜິດ :

ຈົ່ງອ່ານທຸກໆປະໂຍກ ແລ້ວໝາຍ T ໃສ່ຖ້າຫາກປະໂຍກນັ້ນຖືກ ແລະໃຫ້ໝາຍ F ໃສ່ຖ້າຫາກຜິດ.

_____ ໑. ຈາກປີ ໑໙໒໙ ຫາປີ ໑໙໓໓ ປະຊາຊົນອະເມຣິກັນຕົກຢູ່ໃນສະພາບທີ່ອັດຕະຄັດ ຂັດສົນທີ່ສຸດ.

_____ ໒. ໃນຣະຫວ່າງທີ່ເສຖກິດຝືດເຄືອງນັ້ນປະຊາຊົນບໍ່ມີຄວາມໄວ້ໃຈທະນາຄານອີກຕໍ່ໄປ.

_____ ໓. ຈຸດປະສົງອັນສຳຄັນຂອງໂຄງການ New Deal ຄື: ເພື່ອຈັດຫາວຽກງານໃຫ້ແກ່ຜູ້ທີ່ຕົກງານ ເພື່ອຟື້ນຟູເສຖກິດ ແລະເພື່ອປ້ອງກັນທະນາຄານບໍ່ໃຫ້ລົ້ມລະລາຍ.

_____ ໔. ປະທານາທິບໍດີ Roosevelt ບໍ່ຕ້ອງການໃຫ້ທະນາຄານກັບຄືນສູ່ສະພາບເດີມ.

_____ ໕. ສະພາໄດ້ອອກດຳຣັດ Emergency Banking Act ເພື່ອຄວບຄຸມກິຈການຂອງທະນາຄານ.

_____ ໖. ຜົນງານອັນເດັ່ນຢ່າງນຶ່ງຂອງໂຄງການ New Deal ກໍຄືການຕັ້ງໃຫ້ມີ Tennessee Valley Authority (TVA)

_____ ໗. ໂຄງການ New Deal ທີ່ນຶ່ງໄດ້ຮັບການສນັບສນູນຈາກພວກນັກທຸຣະກິດແລະເຈົ້າຂອງໂຮງງານຕ່າງໆ.

_____ ໘. ໂຄງການ New Deal ທີ່ສອງເນັ້ນໜັກໃສ່ການປັບປຸງດ້ານສັງຄົມ.

_____ ໙. ການຕັດງົບປະມານຊ່ວຍເຫຼືອປະຊາຊົນແລະໂຄງການຈັດຫາວຽກໄດ້ສ້າງຄວາມເສັຍຫາຍໃຫ້ແກ່ທຸຣະກິດການຄ້າຢ່າງຫຼວງຫຼາຍ.

_____ ໑໐. ສ່ວນນຶ່ງຂອງໂຄງການປັບປຸງສັງຄົມແມ່ນແຜນການປະກັນການວ່າງງານຊຶ່ງອະນຸຍາດຜູ້ທີ່ຕົກງານທີ່ຫາງານເຮັດບໍ່ມີສິດໄດ້ຮັບລາຍໄດ້ຈາກຣັຖບານໃນຂອບເຂດເວລາອັນຈຳກັດ.

໔. ຕື່ມຄຳເວົ້າໃສ່ຊ່ອງວ່າງ : ຈົ່ງຊອກຄຳເວົ້າທີ່ໝວດຄຳເວົ້າໝົດລົງໄປນີ້ ຕື່ມໃສ່ຊ່ອງວ່າງທີ່ມີໃນແຕ່ລະປະໂຍກໃຫ້ໄດ້ຄວາມໝາຍຖືກຕ້ອງ : ທິດທາງ, Brain Trust , ບໍ່ທອງທັມ, ການຢຸດພັກຂອງທະນາຄານ, ຜົນຜລິດຂອງຊາວນາ, ການປູກປ່າ, ເບ້ຍບຳນານ, Agricultural Adjustment Act , ກະແສໄຟຟ້າ, ການປັບປຸງສັງຄົມ.

໑. ປະທານາທິບໍດີ Roosevelt ໄດ້ຕັ້ງຄະນະຣັຖບານໃຫມ່ເພື່ອແກ້ໄຂບັນຫາຫຍຸ້ງຍາກແລະໄດ້ຕັ້ງຄະນະທີ່ປຶກສາຂຶ້ນເພື່ອປ້ອນຄວາມຄິດໃຫມ່ໆໃຫ້ແກ່ທ່ານ. ຄະນະດັ່ງກ່າວເອີ້ນວ່າ ______________ .

໒. ປະທານາທິບໍດີ Roosevelt ປະກາດ ______________________ ເພື່ອປິດທະນາຄານທຸກແຫ່ງໃນສະຫະຣັຖອະເມຣິກາ.

໓. ໃນເດືອນ ມີນາ ປີ ໑໙໓໓ ໄດ້ມີການຕັ້ງອົງການ Civilian Conservation Corps ຂຶ້ນມາແລະອົງການນີ້ໄດ້ຈ້າງເອົາຊາວຫນຸ່ມ ໓ ແສນຄົນເພື່ອເຮັດວຽກໃນໂຄງການ ____________ ____________________ ແລະໂຄງການປ້ອງກັນນ້ຳຖ້ວມ.

໔. ຣັຖບານໄດ້ໃຫ້ການຊ່ວຍເຫລືອຊາວນາເຊັ່ນກັນຕາມ ______________________________ .

໕. ໂຄງການ TVA ແມ່ນຣັຖບານໄດ້ຕັ້ງຂຶ້ນໃນປີ ໑໙໓໓ ເພື່ອປ້ອງກັນນ້ຳຖ້ວມແລະເພື່ອຜລິດ ______ __________________ ໃນຣາຄາຖືກ.

໖. ໂຄງການ New Deal ທີ່ສອງເນັ້ນຫນັກໃສ່ ______________________________ .

໗. ຕາມດຳຣັດ Social Security Act ຜູ້ໝົດອາຍຸການເຮັດວຽກແລະເສັຍອົງຄະມີສິດໄດ້ຮັບເງິນ ____________________ ຈາກຣັຖບານ.

໘. ດຳຣັດ Agricultural Adjustment Act ໄດ້ວາງຣາຄາເຄື່ອງປູກຂອງພັງ ຕ່ຳສຸດ ແລະມອບໃຫ້ຣັຖບານຄວບຄຸມ ____________________ .

໙. ພວກນັກທຸຣະກິດໂຈມຕີໂຄງການ TVA ວ່າເປັນການແຂ່ງຂັນທີ່ ____________________ ຕໍ່ຣັຖມົດກິຈການຂອງເອກກະຊົນ.

໑໐. ເລີ່ມຈາກປີ ໑໙໓໘ ປະທານາທິບໍດີ Roosevelt ໄດ້ປ່ຽນແປງ ____________________ ຂອງໂຄງການ New Deal ໜຶ່ງ.

495

ໝວດ ກ : ບັນຫາເສດຖະກິດຝືດເຄືອງແລະບັນຫາຂອງໂລກ

ພາກ ໔໖ : ສັງຄົມໃນສໄມເສດຖະກິດຝືດເຄືອງ

ສັບໃໝ່ :

poverty : ຄວາມທຸກຈົນ

During the Depression, American people experienced both poverty and hunger.

hunger ; ຄວາມອຶດຫິວ

transient : ຜູ້ທີ່ຍ້າຍໄປຍ້າຍມາເພື່ອຊອກຫາວຽກການເຮັດແລະຊອກຫາເຂົ້າປາອາຫານ.

People who moved from place to place in order to find food and job were known as transients.

shanty towns : ຊຸ້ມທີ່ພວກທຸກຍາກອາໄສຢູ່

Many poor people lived in shanty towns.

breadlines : ໝາຍເຖິງແຖວທີ່ພວກທຸກຍາກເຂົ້າຕໍ່ກັນເພື່ອລໍຖ້າກິນອາຫານຟຣີ.

Hungry, undernourished people stood in long breadlines to receive free food.

undernourished : ຂາດເຂີນເຂົ້າປາອາຫານ ຫຼື ກິນບໍ່ພໍອີ່ມ.

dandelion : ພືດຊນິດນຶ່ງທີ່ຢູ່ໃນປ່າ.

When people had no food to eat, they often ate weeds and dandelions.

weed : ຫຍ້າ

roam : ຍ່າງເລາະຫຼິ້ນ

Many children roamed the streets hoping to find scraps of foods.

scraps of food : ເສດອາຫານ

necessity : ຄວາມຈຳເປັນ

The federal government gave the poor money to buy food and other necessities.

relief : ຄວາມບັນເທົາທຸກ

The Red Cross provided relief to thousands of needy people.

mural : ຮູບຂັວດຕາມຝາ.

During the Depression, artists painted murals which showed the harsh life in the cities.

harsh : ຄວາມທຸ້ງຍາກ.

movie goers : ພວກໄປເບິ່ງພາພຍົນ.

The number of movie-goers decreased during the Depression.

woes : ເຄາະກຳ

By 1939 movies and radios entertainment provided an escape from the woes of the Depression.

sulfa drug : ຢາຈຸ້ນຟາ.

The sulfa drug was successfully used to cure such serious illness as scarlet fever.

scarlet fever : ໄຂ້ອອກຕມາກ

antibiotic : ປະຕິຈິ້ວນນະ

Antibiotics helped cure tuberculosis.

tuberculosis : ພະຍາດປອດແຫ້ງ.

READING

26.1. UNEMPLOYMENT, POVERTY AND HUNGER

26.1.1. Unemployment, poverty, and hunger had never been more

apparent in American society than they were during President Roosevelt's first term. About a million Americans were forced to move from place to place in an effort to find jobs and food. These homeless, hungry, and poorly-clothed people were called **transients**. They lived in huts or in **shanty towns**. In the cities and towns, they could often be found standing in long **breadlines** waiting to get free meals and soup.

26.1.2. To illustrate how prevalent hunger was in American society, a 1935 report from the American Medical Association estimated that about 20,000,000 American people were **undernourished**. Some families were forced to live on **dandelions** and **weeds**. Starving children **roamed** the streets and dug in the garbage to look for **scraps of food**.

26.1.3. The federal and local governments responded by establishing many agencies to help poor people. The Public Works Administration hired many people to work on public construction projects. Many other poor people were given money to buy food and other **necessities**. The Red Cross also gave **relief** to thousands of poor and hungry people. Surplus food was bought by the government and distributed to needy people.

26.2. THE ARTS, LITERATURE, AND MOVIES DURING THE DEPRESSION:

26.2.1. During the Depression, novels, short stories, and works of art reflected the harsh reality of life in the cities and countryside during this difficult time. With the government's backing, many artists painted realistic murals and pictures on walls in public buildings. Almost all of these murals reflected the realistic and harsh circumstances of the Depression society.

26.2.2. The Depression also cut down on the number of movie-goers. But by 1939, the number of movie-goers had increased again after a long slowdown. Film producers began to make films in color. The American people saw entertainment as an escape from the woes of the depression. Radio entertainment, as well as movies, once again increased in popularity.

26.3. THE MEDICAL ADVANCES DURING THE DEPRESSION

26.3.1. During the Depression, the federal government set aside a lot of money for medical research and, a great deal of progress was made. Two scientists, Perrin H. Long and Eleanor A. Bliss, discovered a new drug called sulfa. This new medicine proved helpful in treating serious illnesses, such as scarlet fever. Another scientist, Selman Waksman, discovered a new antibiotic drug. This new antibiotic could kill germs that caused other serious diseases, such as tuberculosis.

26.3.2. Roosevelt's New Deal provided help to needy American people for almost a decade. The government spent a lot of money on public projects. Although the New Deal could not stop the Depression, it did help heal the depressed feeling which was prevalent among the affected people.

BAI TAP

I. **Word search puzzle:**

Directions: Find and circle the words in the word puzzle below. The words will be found vertically, horizontally, and diagonally. When you find a word in the puzzle, write it and then define it.

POOR
REPORT
RED CROSS
ARTS
ARTIST
PUBLIC
MEDICINE
SCARLET FEVER
GERMS

FILM
STOP
POVERTY
HUNGER
TRANSIENT
SHANTY
GOER
BREADLINES

ROAM
SCRAPS
FOOD
NECESSITY
RELIEF
MURAL
HARSH
MOVIE

SCARLET FEVER
ANTIBIOTIC
TUBERCULOSIS
DRUG (2 TIMES)
WEED
SULFA
WOES
DANDELION
UNDERNOURISHED

P	U	B	L	I	C	D	R	E	P	O	R	T	B	M	T	R
D	R	U	G	R	H	A	R	S	H	O	P	Q	R	E	R	E
A	U	N	D	E	R	N	O	U	R	I	S	H	E	D	A	D
W	E	E	D	L	F	D	A	L	O	T	H	U	A	I	N	C
P	P	C	O	I	I	E	R	F	A	S	A	N	D	C	S	R
O	O	E	O	E	L	L	T	A	M	I	N	G	L	I	I	O
V	O	S	F	F	M	I	S	I	R	T	T	E	I	N	E	S
E	R	S	X	Y	G	O	E	R	S	R	Y	R	N	E	N	S
R	E	I	V	O	M	N	M	U	R	A	L	S	E	O	T	G
T	S	T	V	D	O	O	F	S	P	A	R	C	S	N	O	E
Y	T	Y	W	C	I	T	O	I	B	I	T	N	A	T	T	R
T	U	B	E	R	C	U	L	O	S	I	S	W	O	E	S	M
S	C	A	R	L	E	T	F	E	V	E	R	S	T	O	P	S

II. Matching: Match each word in column A with the explanation or definition in column B. Write the number of each answer in the space provided.

	A		B
_____	a. hunger	1.	the state of being poor.
_____	b. breadline	2.	a strong desire for food or the weakness caused by a prolonged lack of food.
_____	c.poverty	3.	a line of people waiting to be given free food either from a relief agency or a charity.
_____	d. roam	4.	assistance, in the form of money or food,given to the needy people of any disaster stricken region.
_____	e. relief	5.	a picture or decoration usually a very large one, applied directly to a wall or ceiling.
_____	f. transient	6.	a communicable disease of man and animals caused by micro organisms.
_____	g. mural	7.	one who moves from one place to another to find job during the depression time.
_____	h. tuberculosis	8.	to travel without purpose or plan.

III. True or False: Read each statement. Put a T next to each statement if it is true. Put a F in that space if it is false.

_____ 1. During the first term of President Roosevelt, the American society was in a happy state.

______ 2. The transients were homeless, hungry, and poorly clothed.

______ 3. The Public Works Administration hired people to work on public projects.

______ 4. Some poor families during the Depression had to live on dandelions and weeds.

______ 5. Many artists painted murals or pictures painted on the walls in public buildings and got paid by the government.

______ 6. The Depression also increased the number of movie goers because these people did not have jobs to work.

______ 7. The film producers began to make color films in 1939.

______ 8. The federal government set aside a lot of money for medical research, and two scientists, Perrin H Long and Eleanor A. Bliss, discovered a drug called sulfa.

______ 9. Sulfa was good in treating some dangerous illnesses such as scarlet fever.

______10. Selmon Waksman discovered a new antibiotic drug that could kill the germs found in some diseases.

IV Fill in the blanks: Complete each statement by writing the correct word or group of words in the blanks: transients, shanty towns, scraps of food, agencies, relief, murals, movie goers, sulfa drug, tuberculosis, antibiotic.

1. The people that moved from place to place to find jobs were called ____________.

2. These poor people were homeless, hungry, and poorly clothed. They lived in the huts or ________________ .

3. Children roamed the streets and dug the garbage to look for ______________ .

4. The federal and local governments established many _____ to help the poor people.

5. The Red Cross also gave _________ to the poor and hungry people.

6. Many artists painted _________ that showed the realistic and harsh pictures of the society during the Depression.

7. The Depression also cut down the number of _________ .

8. Two scientists, Perrin H. Long and Eleanor A. Bliss, discovered a drug called ___________ .

9. Antibiotic drugs can kill germs that caused diseases such as _________ .

10. Selman Waksman discovered the new ___________ drugs.

ບົດອ່ານ

໒໓.໑. ການວ່າງງານ ຄວາມທຸກຍາກ ແລະຄວາມອຶດຫິວ

໒໓.໑.໑. ໃນຣະຫວ່າງທີ່ທ່ານປະທານາທິບໍດີ Roosevelt ຮັບຕຳແໜ່ງໃນຊຸດທຳອິດນັ້ນ ຊາວອະເມຣິກັນຕົກຢູ່ໃນສະພາບຍາກຈົນເປັນຢ່າງຍິ່ງ. ປະຊາຊົນໄດ້ພາກັນອົບພະຍົບໄປມາຫຼາຍແຫ່ງເພື່ອຊອກຫາວຽກເຮັດງານທຳແລະເຂົ້າປາອາຫານ. ຄົນຈຳພວກດັ່ງກ່າວມີຢູ່ປະມານນຶ່ງລ້ານຄົນເອີ້ນວ່າພວກ transcients. ເຂົາເຈົ້າບໍ່ມີບ່ອນມີເຮືອນອຶດຫິວ ແລະຂາດເຄື່ອງນຸ່ງຫົ່ມ. ເຂົາເຈົ້າຢູ່ຕາມຕູບຕາມຫາມທີ່ຢູ່ຕາມຄຸ້ມທຸກຍາກຕ່າງໆເອີ້ນວ່າ Shanty towns. ຕາມເມືອງຕ່າງໆຈະເຫັນຄົນພວກນີ້ເຂົ້າແຖວຍາວຢູ່ຄອຍຖ້າຮັບອາຫານຟຣີ.

໒໓.໑.໒. ຕາມລາຍງານຂອງສະມາຄົມ American Medicaid Associationໃນປີ ໑໙໓໔ ປາກົດວ່າພວກຄົນທີ່ຂາດເຂີນອາຫານອຶດຢາກມີຢູ່ປະມານ ໒໐ ລ້ານຄົນ. ບາງຄອບຄົວກໍ່ຕ້ອງໄດ້ກິນໃບໄມ້ກິນຫຍ້າເພື່ອຢູ່ລອດ. ເດັກນ້ອຍເລາະຕາມຖະໜົນຫົນທາງແລະຂວັດຄ່ອຍຖັງຂີ້ເຫຍື້ອເພື່ອຊອກຫາອາຫານ.

໒໓.໑.໓. ຣັຖບານກາງແລະຣັຖບານທ້ອງຖິ່ນໄດ້ຈັດຕັ້ງອົງການຫຼາຍອົງການເພື່ອໃຫ້ການຊ່ວຍເຫຼືອແກ່ຄົນທຸກຕ່າງໆ. ກົມໂຍທາໄດ້ຈ້າງຄົນຈຳນວນຫຼາຍສຳລັບເຮັດວຽກໃນໂຄງການຕ່າງໆ. ອົງການສະພາກາຊາດກໍ່ໄດ້ຊ່ວຍບັນເທົາພວກທຸກແລະພວກອຶດຢາກເຊັ່ນດຽວກັນ. ນອກຈາກນັ້ນຣັຖບານຍັງໄດ້ຈັດການແຈກຢາຍເຂົ້າປາອາຫານໃຫ້ແກ່ຜູ້ທີ່ຢູ່ໃນຄວາມຕ້ອງການອີກດ້ວຍ.

໒໓.໒. ວັນນະຄະດີ ສິລປະ ແລະ ບານເທີງ ໃນສໄມເສຖກິດເສື່ອມໂຊມ

໒໓.໒.໑. ໃນສໄມເສຖກິດເສື່ອມໂຊມ ການຂຽນເລື່ອງແລະສິລປະຕ່າງໆກໍ່ໄດ້ກ່າວແລະສະແດງເຖິງຊີວິດຈິງຂອງຄົນທີ່ຢູ່ຕາມຫົວເມືອງແລະຕາມຊົນນະບົດຕ່າງໆ. ດ້ວຍການຊຸກຍູ້ຈາກຣັຖບານ ນັກແຕ້ມຫຼາຍຄົນໄດ້ແຕ້ມຮູບຕ່າງໆຕາມຝາຂອງໂຮງການຂອງຣັຖ. ການແຕ້ມເກືອບທັງໝົດນັ້ນໄດ້ສະແດງໃຫ້ເຫັນເຖິງຊີວິດອັນຍາກຈົນຂອງໃນສໄມນັ້ນເອງ.

໒໓.໒.໒. ການຟືດເຄືອງທາງເສຖກິດໄດ້ເຮັດໃຫ້ຈຳນວນຄົນທີ່ໄປເບິ່ງໄປຈິມພາບຍົນລຸດນ້ອຍລົງເໝືອນກັນ ຈົນເຖິງປີ ໑໙໓໓ ຈຳນວນຂອງຄົນທີ່ໄປເບິ່ງພາບຍົນຈຶ່ງເພີ່ມຂຶ້ນຄືນ. ໃນເວລານັ້ນເຈົ້າຂອງບໍຣິສັດສ້າງພາບຍົນໄດ້ເລີ່ມສ້າງຟິມສີຂຶ້ນມາ. ເພື່ອເປັນການບັນເທົາຄວາມທຸກຍາກ ຊາວອະເມຣິກັນໄດ້ພາກັນອາໃສຄວາມເພີດເພີນເປັນທີ່ເພິ່ງ. ດັ່ງນັ້ນພາບຍົນແລະວິທະຍຸຈຶ່ງສາມາດຄອງຄວາມນິຍົມໄວ້ໄດ້ຢ່າງສູງ.

໒໓.໓. ຄວາມກ້າວໜ້າດ້ານການແພດໃນສໄມເສຖກິດເສື່ອມໂຊມ

໒໓.໓.໑. ຣັຖບານກາງໄດ້ອະນຸມັດເງິນສຳຫຼັບການຄົ້ນຄ້ວາດ້ານການແພດເປັນຈຳນວນຫຼາຍຫຼວງ. ໃນຣະຫວ່າງນັ້ນທ່ານ Perrin H. Long ແລະທ່ານ Eleanor A. Bliss ຊຶ່ງເປັນນັກວິທຍາສາດທັງສອງໄດ້ຄົ້ນພົບຢາຊັນຟາ (Sulfa drug). ຢາຊັນຟານີ້ເປັນຢາທີ່ໃຊ້ປ້ອງກັນໄຂ້ອັນຕະລາຍບາງຢ່າງ ເຊັ່ນໄຂ້ອອກຕຸ່ມແດງຮາກແລະເຈັບຄໍ Scarlet fever ນັກວິທະຍາສາດອີກຜູ້ນຶ່ງຄືທ່ານ Selman Waksman ເປັນຜູ້ຄົ້ນພົບຢາປະຕິຊີວະນະແບບໃໝ່ຊຶ່ງສາມາດຂ້າເຊື້ອໂຣກທີ່ເກີດຈາກພະຍາດບາງຢ່າງ ເຊັ່ນພະຍາດປອດແຫ້ງ.

໒໓.໓.໒. ໂຄງການ New Deal ໄດ້ສ້າງປະໂຍດໃຫ້ແກ່ຊາວອະເມຣິກັນເປັນເວລາເກືອບ ໑໐ ປີ. ຣັຖບານໄດ້ໃຊ້ເງິນເປັນຈຳນວນຫຼາຍສຳຫຼັບໃຊ້ໃນໂຄງການດັ່ງກ່າວ. ຄວາມຈິງແລ້ວໂຄງການ New Deal ນີ້ບໍ່ສາມາດຈະເຮັດໃຫ້ການຟືດເຄືອງຂອງເສຖກິດຢຸດຕິໄປໄດ້ຢ່າງແທ້ຈິງແຕ່ມັນເປັນການຊ່ວຍໃຫ້ຈິດໃຈຂອງຜູ້ທີ່ໄດ້ຮັບການກະທົບກະເທືອນໃຫ້ຫາຍດີໄດ້.

ບົດຝຶກຫັດ

I. Word search puzzle :

Direction : Find and circle the words in the word puzzle below. The words will be found vertically, horizontally, and diagonally. When you find a word in the puzzle, write it and then define it.

ຄຳແນະນຳ : ຈົ່ງຊອກຫາສັບແລ້ວຂີດວົງກົມອ້ອມສັບເຫລົ່ານັ້ນໃນຕະລາງສັບຂ້າງລຸ່ມນີ້. ໃຫ້ຊອກຫາສັບດັ່ງກ່າວຕາມທາງຕັ້ງ ທາງນອນ ແລະ ທາງຂວາງ. ເມື່ອພົບເຫັນສັບພວກນັ້ນແລ້ວໃຫ້ຂຽນເອົາໄວ້ ພ້ອມດ້ວຍຄວາມໝາຍ ຫຼື ຄຳອະທິບາຍ.

POOR
REPORT
RED CROSS
ARTS
ARTIST
PUBLIC
MEDICINE
SCARLET FEVER
GERMS
FILM
STOP
POVERTY
HUNGER
TRANSIENT
SHANTY
GOER
BREADLINES
ROAM
SCRAPS
FOOD
NECESSITY
RELIEF
MURAL
HARSH
MOVIE
SCARLET FEVER
ANTIBIOTIC
TUBERCULOSIS
DRUG (2 TIMES)
WEED
SULFA
WOES
DANDELION
UNDERNOURISHED

P U B L I C D R E P O R T B M T R
D R U G R H A R S H O P Q R E R E
A U N D E R N O U R I S H E D A D
W E E D L F D A L O T H U A I N C
P P C O I I E R F A S A N D C S R
O O E O E L L T A M I N G L I I O
V O S F F M I S I R T T E I N E S
E R S X Y G O E R S R Y R N E N S
R E I V O M N M U R A L S E O T G
T S T V D O O F S P A R C S N O E
Y T Y W C I T O I B I T N A T T R
T U B E R C U L O S I S W O E S M
S C A R L E T F E V E R S T O P S

ບົດຝຶກຫັດ

໑. ຊອກຫາສັບ : (ເບິ່ງຕາມພາສາອັງກິດ)

໒. ການປະກອບສັບ ແລະ ຄຳອະທິບາຍໃຫ້ຖືກຕ້ອງກັນ : ຈົ່ງຈັດເອົາຄຳເວົ້າແຕ່ລະຄຳໃນຫມວດ (ກ) ໃຫ້ຖືກກັບຄຳອະທິບາຍໃນຫມວດ (ຂ) ໂດຍຂຽນຄຳຕອບຊຶ່ງເປັນໂຕເລກໃສ່ຊ່ອງວ່າງທີ່ປະໄວ້ນັ້ນ ສຳຫລັບຄຳຕອບທຸກຄຳ.

ຫມວດ (ກ)	ຫມວດ (ຂ)
_____ (ກ) ຄວາມອຶດຫິວ	(໑) ສະພາບທີ່ຂາດເຂີນເງິນຄຳ.
_____ (ຂ) Breadline	(໒) ຄວາມຕ້ອງການຢາກກິນອາຫານຢ່າງເຫລືອຫລາຍ.
_____ (ຄ) ຄວາມທຸກຈົນ	(໓) ແຖວຄົນເພື່ອລໍຖ້າລັບເອົາອາຫານຟຣີຈາກອົງການຊ່ອຍເຫລືອ.
_____ (ງ) ຍ່າງເລາະ	(໔) ການມອບເງິນຫລືອາຫານສຳຫລັບຊ່ອຍຜູ້ທີ່ມີຄວາມຈຳເປັນຍ້ອນໄດ້ລັບໄພທຳມະຊາດ.
_____ (ຈ) ການບັນເທົາທຸກ	(໕) ຮູບພາບຫລືເຄື່ອງປະດັບຊຶ່ງທຳມະດາແລ້ວມີຂະຫນາດໃຫຍ່ຂີດຕາມຝາຫລືເພດານ.
_____ (ສ) Transient	(໖) ພະຍາດຕິດຕໍ່ຂອງມະນຸດແລະສັດ.
_____ (ຊ) ຮູບຂີດຕາມຝາ	(໗) ຄົນທີ່ຍ້າຍຈາກບ່ອນນຶ່ງໄປຫາບ່ອນນຶ່ງເພື່ອຊອກວຽກເຮັດງານທຳ.
_____ (ຍ) ໂຣກປອດແຫ້ງ	(໘) ການຍ່າງທ່ອງໂດຍບໍ່ມີຈຸດຫມາຍ.

໓. ຖືກ ຫລື ຜິດ :

ຈົ່ງອ່ານປະໂຍກຂ້າງລຸ່ມນີ້ແຕ່ລະປະໂຍກ ແລ້ວຫມາຍອັກສອນ T ໃສ່ຕໍ່ຫນ້າປະໂຍກທີ່ທ່ານເຫັນວ່າຖືກ ແລະ ຫມາຍອັກສອນ F ໃສ່ຖ້າຫາກປະໂຍກນັ້ນຜິດ.

_____ ໑. ໃນຣະຫວ່າງທີ່ປະທານາທິບໍດີ Roosevelt ຮັບຕຳແຫນ່ງໃນຊຸດທຳອິດນັ້ນ ປະຊາຊົນອະເມຣິກັນທັງຫລາຍມີຄວາມສຸກສະບາຍ.

_____ ໒. ພວກ Transient ຂາດບ່ອນເພິ່ງພາອາໄສ ມີຄວາມອຶດຫິວ ແລະ ຂາດເຂີນການນຸ່ງຫົ່ມ.

_____ ໓. ພະແນກໂຍທາໄດ້ຈ້າງຄົນເພື່ອເຂົ້າເຮັດວຽກໃນໂຄງການຕ່າງໆ.

_____ ໔. ໃນສມັຍທີ່ເສດຖະກິດຝືດເຄືອງ ຄອບຄົວຄົນທຸກຈົນບາງຄອບຄົວ ຕ້ອງໄດ້ກິນໃບໄມ້ ແລະ ຫຍ້າ ເພື່ອຄວາມຢູ່ລອດ.

_____ ໕. ນັກແຕ້ມຈຳນວນຫຼາຍຄົນໄດ້ຂີດຮູບ ຫຼື ແຕ້ມຮູບໃສ່ຝາໂຮງການຂອງຫຼວງ ແລະ ໄດ້ຮັບເງິນຄ່າຈ້າງຈາກລັດຖະບານ.

_____ ໖. ສະພາບເສດຖະກິດຝືດເຄືອງໄດ້ເຮັດໃຫ້ຈຳນວນຄົນທີ່ໄປຊົມພາພຍົນ ເພີ່ມຫຼາຍຂຶ້ນ ເພາະວ່າ ເຂົາເຈົ້າບໍ່ມີວຽກເຮັດງານທຳ.

_____ ໗. ບໍລິສັດສ້າງພາພຍົນໄດ້ເລີ້ມສ້າງຟິມສີ ໃນປີ ໑໙໓໙.

_____ ໘. ລັດຖະບານກາງ ໄດ້ແຍກເງິນສຳຫຼັບໃຊ້ໃນການຄົ້ນຄວ້າທາງການແພດເປັນຈຳນວນຫຼວງຫຼາຍ ແລະ ມີນັກວິທະຍາສາດ ສອງທ່ານ ຄືທ່ານ Perrin H.Long ແລະ Eleanor A. Bliss ໄດ້ຄົ້ນພົບຢາປົວພະຍາດເອີ້ນວ່າ Sulfa.

_____ ໙. ຢາ Sulfa ເປັນຢາສຳຫຼັບປົວພະຍາດອັນຕະຣາຍບາງຢ່າງ ເຊັ່ນ Scarlet Fever

_____ ໑໐. ນັກວິທະຍາສາດ Selmon Waksman ເປັນຜູ້ຄົ້ນພົບ ຢາປະຕິຊີວະນະ ຊະນິດໃໝ່ ຊຶ່ງສາມາດ ຂ້າເຊື້ອໂຣກຂອງພະຍາດບາງຢ່າງໄດ້.

໔. ຕື່ມຄຳເວົ້າໃສ່ຊ່ອງວ່າງ :

ຈົ່ງຂຽນຄຳເວົ້າຫຼືພວກຄຳເວົ້າຕໍ່ໄປນີ້ ໃສ່ຊ່ອງວ່າງທີ່ມີໃນແຕ່ລະປະໂຍກໃຫ້ໄດ້ຄວາມໝາຍຖືກຕ້ອງ :

Transients , ຄຸ້ມຂອງພວກທຸກຍາກ, ເສດອາຫານ, ອົງການ, ການບັນເທົາທຸກ, ຮູບຂີດຕາມຝາ, ພວກທີ່ໄປຊົມພາພຍົນ, ຢາ Sulfa , ໂຣກປອດແຫ້ງ, ຢາປະຕິຊີວະນະ.

໑. ຄົນທີ່ຍ້າຍອອກຈາກບ່ອນນຶ່ງໄປຫາບ່ອນນຶ່ງ ເພື່ອຊອກຫາວຽກເຮັດງານທຳນັ້ນເອີ້ນວ່າ ______________.

໒. ພວກຄົນທຸກຈົນເຫຼົ່ານີ້ ຂາດບ່ອນຢູ່ອາໃສ ອຶດຫິວ ແລະ ຂາດເຂີນເຄື່ອງນຸ່ງຫົ່ມ. ເຂົາເຈົ້າອາໃສຢູ່ ໃນຕູບ ຫຼື ຢູ່ຕາມ ______________________________.

໓. ພວກເດັກນ້ອຍມາກັນຍ່າງເລາະຕາມຖນົນຫົນທາງ ແລະ ມາກັນຂັວດເຂ່ຍຖິ້ງຂີ້ເຫຍື່ອ ເພື່ອຊອກຫາ ______________________________ .

໔. ລັດຖະບານກາງ ແລະ ລັດຖະບານທ້ອງຖິ່ນ ໄດ້ຈັດຕັ້ງຫຼາຍ ____________________ ເພື່ອ ຊ່ວຍເຫຼືອພວກຄົນທຸກຍາກ.

໕. ສະພາກາຊາດກໍໄດ້ຊ່ວຍ ____________________ ແກ່ພວກຄົນທຸກຍາກ ແລະ ອຶດຫິວເຊັ່ນກັນ.

໖. ພວກນັກແຕ້ມຫຼາຍຄົນໄດ້ ____________________ ເພື່ອສະແດງເຖິງຊີວິດອັນຍາກຈົນ ໃນສໄມນັ້ນ.

໗. ສະພາບເສດຖະກິດຝືດເຄືອງໄດ້ເຮັດຈຳນວນ _________________________ ລຸດລົງ.

໘. ນັກວິທະຍາສາດສອງທ່ານຄືທ່ານ Perrin H.Long ແລະ Eleanor A. Bliss ໄດ້ຄົ້ນພົບຢາປົວພະຍາດທີ່ເອີ້ນວ່າ ___________________ .

໙. ຢາປະຕິຊີວະນະ ສາມາດຂ້າເຊື້ອໂຣກຂອງພະຍາດອັນຕະຣາຍບາງຢ່າງເຊັ່ນໂຣກ ___________ __________________ .

໑໐. ທ່ານ Selman Waksman ໄດ້ຄົ້ນພົບຢາ ____________________ ແນວໃໝ່.

ຫມວດ ກ : ບັນຫາເສດຖະກິດຝືດເຄືອງແລະບັນຫາຂອງໂລກ

ພາກ ໔໗ : ນະໂຍບາຍຕ່າງປະເທດແລະບັນຫາຂອງໂລກ

ສັບໃໝ່ :

foreign policy : ນະໂຍບາຍຕ່າງປະເທດ

Since 1972, the United States has changed its foreign policy toward China.

World Economic Conference : ກອງປະຊຸມເສດຖະກິດຂອງໂລກ

Representatives from several countries discussed monetary problems at the World Economic Conference.

Reciprocal Agreement Act : ດຳຣັດຍ່ງອກັບຖານມອບສິດໃຫ້ປະທານາທິບໍດີຫຼຸດຄ່າພາສີຂາເຂົ້າໃຫ້ແກປະເທດທີປະຕິບັດໃນທຳນອງດຽວກັນຕໍ່ສະຫະຣັຖ.

The Reciprocal Agreement Act gave the President the right to lower tariff rates.

Latin America : ອະເມຣິກາໃຕ້ ຫຼື ລາຕິນອະເມຣິກາ.

Almost all of the countries in Latin America are poor and undevelopped.

the good neighbor policy : ນະໂຍບາຍຜູກມິດກັບປະເທດໃກ້ຄຽງ.

President Roosevelt had a new policy toward Latin American countries. It was called the good neighbor policy.

Pan American Conference : ກອງປະຊຸມລະຫວ່າງຜູ້ຕາງໜ້າຈາກປະເທດຕ່າງໆໃນຊີກໂລກຕາເວັນຕົກ.

The Pan American Conference was held in Lima, Peru.

Western hemisphere : ຊີກໂລກຕາເວັນຕົກ

The uUnited States hoped to protect the Western hemisphere in case of war.

continent : ທະວີບ

Asia is the largest continent on earth.

dictator : ຜະເດັດການ

Hitler was a dictator during the Second World War.

unrest : ຄວາມບໍ່ສງົບ

The arms race caused a great deal of unrest in Europe.

Fascist Party : ພັກການເມືອງໃນປະເທດອິຕາລີຊຶ່ງແມ່ນ Mussolini ເປັນຫົວໜ້າ.

Benito Mussolini was the leader of Italian Fascist Party.

violate : ຝ່າຝືນ.

The Japanese violated the regulations of the League of the Nations when they invaded China in 1937.

League of Nations : ສະຫະພັນນາວຊາດ.

